EarthRights International

Environmental Impact Assessment in the Mekong Region

MATERIALS AND COMMENTARY (FIRST EDITION)
OCTOBER 2016

Lao PDR

ການ ປະເມີນຜົນກະທົບສິ່ງແວດລ້ອມ ຢ່ ບັນດາປະເທດພາກພື້ນແມ່ນ້ຳຂອງ
ອຸປະກອນທີ່ໃຊ້ເຂົ້າໃນການສຶກສາ ແລະ ຄຳຄິດເຫັນ (ສະບັບທຳອິດ)
ຕຸລາ ປ໌ 2016
ປະເທດລາວ







ໂຄງການນີ້ເກີດຂຶ້ນໄດ້ກໍ່ເນື່ອງຈາກການສະໜັບສະໜູນຂອງປະຊາຊົນອາເມຣິກາຜ່ານທາງພັດທະນາສາກົນ ຂອງປະເທດສະຫະລັດອາເມຣິກາ (USAID)
ໂດຍການຮ່ວມມືແມ່ນ້ຳຂອງເພື່ອການພັດທະນາສິ່ງແວດລ້ອມ (MFP).

ບັນດາເນື້ອໃນນຳສະເໜີໃນເອກະສານສະບັບນີ້ບໍ່ຈຳເປັນຕ້ອງສະທ້ອນການໃຫ້ທັດສະນະຂອງອົງການ USAID ຫຼືລັດຖະບານສະຫະລັດອາເມຣິກາ.

ຄຳສັບຫຍໍ້

ADB	ທະນາຄານພັດທະນາ ອາຊີ (ເອດີບີ)
ASEAN	ສະມາຄົມປະຊາຊາດຂອງອາຊີຕາເວັນອອກສ່ຽງໃຕ້ (ສປອອຕ)
CCC	ຄະນະກຳມະການປຶກສາຫາລືຊຸມຊົນ(ຄປຊ)
CGM	ຄຳຮ້ອງທຸກ ແລະກົນໄກການຮ້ອງທຸກ (ຮກຮ)
CSO	ອົງການປະຊາສັງຄົມ(ອຊສ)
DPRA	ຂະແໜ່ງການລັດຖະບານລະດັບພາກພື້ນ,ຂັ້ນແຂວງ ແລະ ເມືອງ(ຂລພຂມ)
EA	ການປະເມີນ ສິ່ງແວດລ້ອມ(ປສ)
ECC	ໃບຮັບຮອງຄວາມສອດຄ່ອງທາງດ້ານສິ່ງແວດລ້ອມ (ບຮສ)
EHIA	ການປະເມີນຜົນກະທົບທາງສິ່ງແວດລ້ອມ ແລະສຸຂາອານາໄມ (ປຜສສ)
EIA	ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (ປຜສ)
EMMP	ແຜນການຄຸ້ມຄອງແລະຕິດຕາມສິ່ງແວດລ້ອມ (ຜຄຕສ)
EMP	ແຜນການຄຸ້ມຄອງ ສິ່ງແວດລ້ອມ (ຜຄສ)
ESIA	ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແລະສັງຄົມ(ປຜສສ)
ESMMP	ແຜນການຄຸ້ມຄອງແລະຕິດຕາມສິ່ງແວດລ້ອມແລະສັງຄົມ(ຜຄຕສສ)
GMS	ພາກພື້ນລຸ່ມແມ່ນ້ຳຂອງ
IAIA	ສະມາຄົມສາກົນສຳລັບການປະເມີນຜົນກະທົບ
IAP2	ສະມາຄົມສາກົນສຳລັບການມີສ່ວຮ່ວມຂອງສາທາລະນະ
IEE	ການສຶກສາສິ່ງແວດລ້ອມເບື້ອງຕົ້ນ (ໄອອີອີ)
MONRE	ກະຊວງຊັບພະຍາທຳມະຊາດແລະສິ່ງແວດລ້ອມ (ກຊສ)
MRC	ຄະນະກຳມາທິການແມ່ນ້ຳຂອງ
NGO	ອົງກອນທີ່ບໍ່ແມ່ນໜ່ວຍງານຂອງລັດຖະບານ
	ຫ້ອງການວາງແຜນການແລະນະໂຍບາຍການນຳໃຊ້
ONEP	ຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ
PAP	ຜູ້ຖືກກະທົບໂຄງການ(ຖກຄ)
PNPCA	ຂະບວນການແຈ້ງການ,ກ່ອນການປຶກສາຫາລືແລະການຕົກລົງ
SEA	ການປະເມີນຜົນກະທົບແບບຍຸດທະສາດ
SIA	ການປະເມີນຜົນກະທົບທາງສັງຄົມ (ປຜສຄ)
SMMP	ແຜນການຄຸ້ມຄອງແລະຕິດຕາມການພັດທະນາດ້ານສັງຄົມ(ຜຄຕສສ)
ToR	ຂອບເຂດໜ້າວຽກ
UN	ສະຫະປະຊາຊາດ
UN ECE	ສະຫະປະຊາຊາດຄະນະກຳມະການທາງເສດຖະກິດ ເອີລົບ
UNEP	ສະຫະປະຊາຊາດໂຄງການສິ່ງແວດລ້ອມ
WREA	ຫ້ອງການຄຸ້ມຄອງບໍລິຫານຊັບພະຍາກອນແຫຼ່ງນ້ຳແລະລິ່ງແວດລ້ອມ (ຫຄຊນສ)

ສາລະບານ

ພາກສະເໜີການພິມຄັ້ງທຳອິດ 1

ປົດຄວາມຮູ້ບຸນຄຸນ 3

ເອເຊຍ ແລະ ການປະເມີນຜົນກະທົບທາງສິ່ງແວດລ້ອມ 4

ການພັດທະນາແບບຍືນຍົງ 4

ສິດທິສ່ວນບຸກຄົນ 5

ການປະເມີນຜົນກະທົບທາງສິ່ງແວດລ້ອມແມ່ນຫຍັງ? 6

ຈຸດປະສົງຂອງ ອີໄອເອ 6

ຄຸນລັກສະນະຕົ້ນຕໍຂອງການປະເມີນຜົນກະທົບສິ່ງແວດລ້ອມ 9

ຫຼັກການພື້ນຖານສຳຄັນຂອງການປະເມີນຜົນກະທົບສິ່ງແວດລ້ອມ 11

ຂະບວນການສອດຄອງກັບກົດໝາຍ, ຊັດເຈນ ແລະ ມີປະສິດຕິພາບ 11

ຜູ້ສະເໜີ ຮັບຜິດຊອບຄ່າໃຊ້ຈ່າຍໃນການນຳໃຊ້ແລະການປະເມີນ 11

ການດຳເນີນທີ່ມີສ່ວນຮ່ວມຂອງສາທາລະນະໃນທຸກຂັ້ນຕອງແລະຂະບວນການ 12

ຜູ້ໄດ້ຮັບຜົນກະທົບຈາກໂຄງການແລະຜູ້ມີສ່ວນຮ່ວມອື່ນໆສາມາດເຂົ້າເຖິງຂໍ້ມູນຂ່າວສານໄດ້ 12

ເຜີຍແຜ່ຂໍ້ມູນຂ່າວສານທີ່ກ່ຽວຂ້ອງທຸກຢ່າງ 12

ການຕັດສິນໃຈທີ່ເປີດເຜີຍແລະມີຫຼັກຖານອ້າງອີງ 12

ມີການຕິດຕາມກວດກາ, ການປະຕິບັດຕາມລະບຽບການແລະຂໍ້ບັງຄັບໃຊ້ຢ່າງມີປະສິດຕິພາບ 13

ກົນໄກສຳຄັນສຳລັບການປະເມີນຜົນກະທົບສິ່ງແວດລ້ອມ 13

ການເຊື່ອໝັ້ນຕໍ່ວິທີທາງແບບມີສ່ວນຮ່ວມ 14

ການນຳໃຊ້ຫຼັກການໃນການປ້ອງກັນ 14

ການນຳໃຊ້ຫຼັກການຂອງການມີສ່ວນຮ່ວມໃນແຕ່ລະຍຸກສະໄໝ 14

ການສະຫງວນໄວ້ເຊິ່ງ ຄວາມຫຼາກຫຼາຍທາງຊີວະພາບ ແລະ ການເຊື່ອມໂຍງຂອງລະບົບນິເວດ 15

ການປັບປຸງການປະເມີນ, ການກຳນົດລາຄາ ແລະສິ່ງຈູງໃຈ 15

ຫຼັກການທົ່ວໄປຂອງການມີສ່ວນຮ່ວມຂອງສາທາລະນະໃນການປະເມີນຜົນກະທົບສິ່ງແວດລ້ອມ 15

ຄວາມສຳຄັນຂອງການມີສ່ວນຮ່ວມຂອງສາທາລະນະ 19

ການປະຕິບັດການປະເມີນຜົນກະທົບທາງສິ່ງແວດລ້ອມ ແມ່ນ້ຳຂອງ 21

ການປະເມີນຜົນກະທົບທາງສິ່ງແວດລ້ອມ ໃນພາກພື້ນແມ່ນ້ຳຂອງ 22

ຂັ້ນຕອນໃນຂະບວນການ EIA 24

ຂັ້ນຕອນທີ 1: ການກັ່ນຕອງ 25

ຂັ້ນຕອນທີ 2: ການກຳນົດຂອບເຂດການສຶກສາ 25

ຂັ້ນຕອນທີ 3: ການກະກຽມບົດ ປຜສ 28

ຂັ້ນຕອນທີ 4: ການທົບທວນການປະເມີນຜົນຂອງບົດ ປຜສ 29

ຂັ້ນຕອນທີ 5: ການຮັບຮອງບົດລາຍງານ ປຜສ 30

ຂັ້ນຕອນທີ 6: ການຕິດຕາມແລະກວດກາ 30

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ 34

ບົດແນະນຳ 34

ຂັ້ນຕອນຂອງການ EIA 37

ການກະກຽມບົດລາຍງານ ESIA 46

ການມີສ່ວນຮ່ວມຂອງສາທາລະນະ 46
ຄຳຮ້ອງທຸກ ແລະ ກົນໄກຮັບການຮ້ອງທຸກ 52
ບັນຫາຂ້າມຊາຍແດນຂອງການປະເມີນຜົນສິ່ງແວດລ້ອມ 53
ສົນທິສັນຍາວ່າດ້ວຍການປະເມີນຜົນກະທົບສິ່ງແວດລ້ອມຂ້າມຊາຍແດນ (ສົນທິສັນຍາ Espoo) 55
ອະນຸສັນຍາໃນການປະເມີນຜົນກະທົບສິ່ງແວດລ້ອມແບບຍຸດທະສາດ(ອະນຸສັນຍາຂອງ SEA) 56
ສົນທິສັນຍາວ່າດ້ວຍການເຂົ້າເຖິງຂໍ້ມູນຂ່າວສານ, ການມີສ່ວນຮ່ວມສາທາລະນະຕໍ່ການຕັດສິນໃຈ ແລະ ການເຂົ້າເຖິງຄວາມຍຸດຕິທຳຕໍ່ບັນຫາສິ່ງແວດລ້ອມ(ສົນທິສັນຍາ Aarhus)).....57
ຂໍ້ຕົກລົງເຫັນດີຕາມລຳແມ່ນ້ຳຂອງ.....59
ຂັ້ນຕອນສຳລັບການແຈ້ງການ, ໄລຍະການປຶກສາຫາລື ແລະຂໍ້ຕົກລົງ.....60
ການພິຈາລະນາການປະເມີນ ປຜສ ຂ້າມຜ່ານຊາຍແດນໂດຍ MRC 61
ຂໍ້ຕົກລົງທາງສິ່ງແວດລ້ອມຂອງພາກພື້ນລຸ່ມແມ່ນ້ຳຂອງ (GMS) 63
ຄວາມຕ້ອງໃນລະບົບການ ປຜສ ຂ້າມຊາຍແດນທີ່ມີປະສິດຕິຜົນ 64
ສະຫຼຸບແນວຄວາມຄິດຕ່ຳ ການປະເມີນຜົນກະທົບສິ່ງແວດລ້ອມຂອງບັນດາປະເທດຕາມລ່ອງແມ່ນ້ຳຂອງ 65
ເອກະສານຊ້ອນທ້າຍ 1:ລາຍລະອຽດເນື້ອໃນຂອງໂຄງການໜຶ່ງ.....68
ເອກະສານຊ້ອຍທ້າຍທີ 2: ລະບຽບກົດໝາຍທີ່ກ່ຽວຂ້ອງ 71
ເອກະສານຊ້ອຍທ້າຍທີ 3: ແຫຼ່ງຂໍ້ມູນອື່ນໆ.....72
ລາຍການກັ່ນຕອງປະເພດ ປຜສ/ສສຕ ໃນຂົງເຂດປະເທດທີ່ຖືກເລືອກ ຕາມລຳແມ່ນ້ຳຂອງ.....72
ຮ່າງບົດແນະນຳວ່າດ້ວຍການມີສ່ວນຮ່ວມຂອງສາທາລະນະ ຕໍ່ການປະເມີນຜົນກະທົບສິ່ງແວດລ້ອມ.....72

ບົດບັນທຶກຂອງບັນນາທິການ: ເອກະສານສະບັບນີ້ເປັນບົດເພີ່ມເຕີມຂອງ ສປປ ລາວ ທີ່ລວມເອົາຫຼາຍໆອົງປະກອບຂອງລະບົບການປະເມີນຜົນກະທົບສິ່ງແວດລ້ອມຂອງ ຫົກ ປະເທດຕາມລຳແມ່ນ້ຳຂອງ. ເອກະສານສະບັບນີ້ ແລະ ບົດເພີ່ມເຕີມຂອງບັນດາປະເທດໄກ້ຄຽງແມ່ນບັນທຶກໄວ້ໃນເວັບໄຊສ https://www.earthrights.org/publications.

ບົດນຳຂອງສະບັບພິມຄັ້ງທຳອິດ

ການລິເລີ້ມໂຄງການນີ້ທາງທີມງານແມ່ນມີຄວາມຕັ້ງໃຈແລະທຸ້ມເທເປັນຢ່າງສູງ, ເປັນສິ່ງທີ່ທ້າທາຍໃນການສັງລວມບັນດາລະບົບການປະເມີນຜົນກະທົບສິ່ງແວດລ້ອມ(ອີໄອເອ)ຂອງທັງ ຫົກ ປະເທດ ຕາມລຳແມ່ນ້ຳຂອງໃຫ້ເຂົ້າເປັນອັນໜຶ່ງອັນດຽວກັນ. ເປັນໂຄງການທຳອິດທີ່ນຳເອົາຊ່ຽວຊານຂອງທັງ ຫົກ ປະເທດ ເຂົ້າມາຮວມຕົວກັນ ເພື່ອເປັນທີ່ການຢັ້ງຢືນ, ເປັນການປະກອບສ່ວນ ແລະ ເປັນແນວທາງໃນການດຳເນີນໂຄງການ.

ເປັນໂຄງການທຳອິດທີ່ນຳເອົາ ເຄື່ອຂ່າຍກົດໝາຍແມ່ນ້ຳຂອງ (MLN) ປະສານສົມທົບກັບ ເອີດໄຣສ ສາກົນ (ERI). ຜົນຕອບຮັບຄື ມີຫຼາກຫຼາຍການຮຽນຮູ້ເຖິງການຂະບວນການຮ່ວມມື ແລະ ການສົມທຽບຈາກທຸກພາກສ່ວນທີ່ກ່ຽວຂ້ອງ. ໃນຂະນະທີ່ ບັນດາສຳມະຊິກຂອງອົງການ MLN ທີ່ມີປະສົບການສູງທາງດ້ານກົດ ໝາຍ, ພວກເຮົາກໍ່ຍັງພົບເຫັນເຖິງຈຸດບົກຜ່ອງລະຫວ່າງລະບຽບກົດໝາຍ ແລະ ການປະຕິບັດຕົວຈິງ. ສິ່ງທີ່ສຳຄັນແມ່ນຈະຕ້ອງມີວິທີການສື່ສານທີ່ຊັດເຈນ ໃນຂະນະທີ່ການຮັບຮູ້ຂອງແຕ່ລະປະເທດມີຄວາມແຕກຕ່າງກັນ ແລະມີການນຳໃຊ້ຂະບວນການ ແລະ ວິທີທາງທີ່ແຕກຕ່າງກັນ ໃນການປະເມີນຜົນກະທົບສິ່ງແວດລ້ອມ(ປຜສ).

ສະບັບພິມຄັ້ງທຳອິດນີ້ເປັນຜົນມາຈາກການຮ່ວມມືກັນຂອງທຸກພາກສ່ວນ, ທີມງານໄດ້ໃຊ້ຄວາມພະຍາຍາມສູງເພື່ອໃຫ້ແນ່ໃຈເຖິງຄວາມຖືກຕ້ອງແລະສຳເລັດ. ເຖິງຢ່າງໃດກໍ່ຕາມ ທີມງານກໍເຫັນເຖິງຈຸດທີ່ຈະຕ້ອງມີການປັບປຸງ, ຍິນດີກັບທຸກການແນະນຳ ແລະການຕຳນິຕິຊົມຕ່າງໆ. ຈຸດປະສົງຫຼັກແມ່ນການສະໜອງບັນດາເອກະສານ ຂໍ້ມູນ ແລະ ການສືບຕໍ່ການປຶກສາຫາລືເຖິງຄຸນຄ່າຂອງການ ປຜສ ໃນເຂດພາກພື້ນ ແລະ ວິທີທາງໃນການປັບປຸງ ປຜສ.

ໜ້າທີ່ຂອງອົງການຮ່ວມມືແມ່ນ້ຳຂອງເພື່ອພັດທະນາສິ່ງແວດລ້ອມ MPE, ແລະ ໜ້າວຽກຂອງ PACT, ແມ່ນສຸມໃສ່ຕໍ່ພາລະບົດບາດຂອງ ປຜສ ໃຫ້ບຸນລຸເຖິງການພັດທະນາແບບຍືນຍົງ. ຕະຫຼອດການປະຕິບັດວຽກຂອງ PACT ແລະ ຫຼາຍໆ ຊ່ຽວຊານທີ່ທຶກສາ ແລະ ສາທາລະນະ, ທີ່ເຮັດໃຫ້ມີຮູບແບບຂອງ ປຜສ ເກີດຂຶ້ນໄດ້. ຈາກຫຼາຍໆການປຶກສາຫາລືທີ່ກໍ່ໃຫ້ເກີດເປັນການປັບປຸງມາດຕະຖານ ແລະ ການປະເມີນ ປຜສ. ໂດຍສະເພາະແມ່ນການພັດທະນາຂອງບົດແນະນຳວ່າດ້ວຍການມີສ່ວນຮ່ວມຂອງສາທາລະນະ ແລະ ການຮ່າງບົດແນະນຳລະດັບຊາດວ່າດ້ວຍການສ່ວນຮ່ວມຂອງສາທາລະນະໃນບົດ ປຜສ ຂອງທັງ ປະເທດ ກຳປູເຈຍ ແລະ ປະເທດ ມຽນມ້າ ທີ່ເປັນຕົວຊີ້ວັດທີ່ສຳຄັນເຂົ້າໃນການມີສ່ວນຮ່ວມ ຂອງການ ປຜສ. ສະບັບພິມຄັ້ງທຳອິດນີ້ ໄດ້ເລັ່ງໃສ່ ບັນດາ ຊ່ຽວຊານ, ປະຊາສັງຄົມ, ນັກກົດໝາຍ, ບໍລິສັດທີ່ປຶກສາ ແລະ ຜູ້ສະເໜີໂຄງການ. ທາງທີມງານ ຫວັງຢ່າງຍິ່ງວ່າ, ໂດຍຄວາມເຂົ້າໃຈທາງດ້ານລະບຽບພັນທະ ພາຍໃຕ້ ກົດໝາຍ ລະດັບຊາດ, ທຸກຜູ້ມີສ່ວນຮ່ວມຈະສາມາດປະຕິບັດໜ້າວຽກເປັນອັນໜຶ່ງອັນດຽວກັນເພື່ອສືບຕໍ່ດຳເນີນການປັບປຸງ ຂະບວນການຂອງ ປຜສ.

ທີມງານບັນນາທິການ
1 ກັນຍາ 2016

ປົດສະແດງຄວາມ ຮູ້ບຸນຄຸນ

ທີມງານບັນນາທິການຂໍສະແດງຄວາມຮູ້ບຸນຄຸນ ແລະ
ການດຳເນີນໂຄງການນີ້ຈະບໍ່ສາມາດສຳເລັດລົງໄດ້ຖ້າຂາດການຊຸກຍູ້ສົ່ງເສີມຈາກຫຼາຍໆ
ອົງການຈັດຕັ້ງແລະສ່ວນບຸກຄົນ. ໂດຍສະເພາະ, ທີມງານຂໍກ່າວຄວາມຂອບໃຈກັບຄຳແນະນຳແລະຄິດເຫັນ
ຂອງ ອົງການສາກົນ ເອີດໄຣສ, ທ່ານ ຄິລດຕີ ໂອເວັນ, ທ່ານ ເບລີ ຟາມມິງ, ດຣ. ວິງ ໂສກ, PACT MPE,
ດຣ.ປີເຕີ ເຈັ່ງເຊັ່ນ, ດຣ ລີຊາດ ແຟ່ງໂກລ, ດຣ. ປີເຕີ ຄິງ, ທ່ານ ເດວິດ ອານານເດວ, ທ່ານ ອຽນ ວັດຊັ່ນ,
ທ່ານ ມາລຕິນ ໂກເຊຍລ, ທ່ານ ບີເຈ ສກັດເຕ, ສຸຍ ທິບ ລາມ (ກົດໂຮງຮຽນ Vermont), ເວສນາ ໂກລາ
ເພນນສິກ, ທ່ານ ທາຫລາ ໂວເສ, ທ່ານ ຄິມ ສມາຊນິອກ.

ນອກຈາກລາຍຊື່ຂອງທຸກທ່ານທີ່ກ່າວມາຂ້າງເທິງ, ແມັດທິວ ບາຣາດ ຂໍສະແດງຄວາມຂອບໃຈຕໍ່ ທ່ານ ຄຣິສ
ຈັນ ສຳລັບການຊ່ວຍເຫຼືອເຂົ້າໃນໂຄງການນີ້ ແລະ ການດຳເນີນວຽກງານຂອງ ປຜສ ແລະ
ການມີສ່ວນຮ່ວມຂອງສາທາລະນະ ມາຕະຫຼອດ ສາມ ປີ ທີ່ຜ່ານມາ.

ການອ້າງອີງ: ຄູ່ມື ການປະເມີນຜົນກະທົບ ສິ່ງແວດລ້ອມ ໃນພາກພື້ນແມ່ນ້ຳຂອງ: ຄຳຄິດເຫັນ ແລະ
ເອກະສານຕ່າງໆ(ສະບັບພິມຄັ້ງທຳອິດ). ເຄື່ອຄ່າຍລະບຽບກົດໝາຍແມ່ນ້ຳຂອງ ແລະ ແມັດທິວ ບາຣາດ.
ອົງການສາກົນ ເອີດໄຣສ, ກັນຍາ 2016.

ຜູ້ຈັດພິມ: ແມັດທິວ ບາຣາດ, ສໍຣ ຣັດຕະນະມະນີ ໂປລກາລ, ສິງການລ ປົງບຸນຈັນ, ມະໂນລິນ ເທບຄຳວົງ,
ດາງ ດິນ ບາຈ, ຕິບ ເນັດ, ທັນ ອາເຢ, ໂອ ໄກຍ ທິນ, ຈິນເມ ລຸຍ, ເຣມີ ກົນນາ.

ເອເຊຍນ(ASEAN) ແລະ ການປະເມີນຜົນກະທົບສິ່ງແວດລ້ອມ

ການພັດທະນາແບບຍືນຍົງ

ໂດຍການຕົກລົງເຫັນດີຂອງ ສະມາຄົມແຫ່ງຊາດຂອງ ອາຊີຕາເວັນອອກສ່ຽງໄຕ້ (ASEAN), ທີ່ໄດ້ຊຸກຍູ້ສິ່ງເສີມ ໃນໄລຍະ ເດືອນ ທັນວາ 2008, ເຊິ່ງໄດ້ປະກອບເຂົ້າເປັນໜຶ່ງຂອງບັນດາຈຸປະສົງ ດັ່ງກ່າວໄວ້ຂ້າງລຸ່ມ:

> ເພື່ອສົ່ງເສີມ**ການພັດທະນາແບບຍືນຍົງ**ທີ່ຈະຮັບຮອງການປົກປັກຮັກສາສິ່ງແວດລ້ອມ ລະດັບພາກພື້ນໃຫ້ມີ**ຄວາມຍືນຍົງຂອງຊັບພະຍາກອນທຳມະຊາດ**, ການນຳສະເໜີມໍລະດົກທາງວັດທະນະທຳ ແລະ ຄຸນນະພາບການດຳລົງຊີວິດທີ່ດີຂອງປະຊາຊົນ.[1]

ຈຸດປະສົງອື່ນໆຂອງ ASEAN ປະກອບມີ:

- ເພື່ອຮັບຮອງເອົາຂະແໜງການທີ່ເໝາະສົມ ແລະ ລະບຽບກົດໝາຍ;
- ເພື່ອສ້າງຕະຫຼາດປະຕູດຽວ ແລະ ຜົນຜະລິດພື້ນຖານ[2];
- ເປັນການສົ່ງເສີມແລະ ການປົກປັກຮັກສາ ສິດທິດສ່ວນບຸກຄົນ ແລະ ເສລີພາບພື້ນຖານ[3]; ແລະ
- ເພື່ອສົ່ງເສີມປະຊາຊົມ ກຸ່ມ ASEAN. [4]

ມາດຕາທີ 2 ຂອງຂໍ້ກຳນົດການຢືນຢັນເຖິງຫຼັກການຂອງ ASEAN ລວມມີ (ແຕ່ບໍ່ໄດ້ຈຳກັດ) ການເຜີຍແຜ່ສັນຍາ ແລະ ລວບລວມມີໜ້າທີ່ຮັບຜິດຊອບ, ບໍ່ມີການແຊກແຊງວຽກງານພາຍໃນຂອງ ສຳມະຊິກ ASEAN, ເຄົາລົບຕໍ່ສິດເສລີພາບພື້ນຖານ, ມີການສົ່ງເສີມແລະ ການປົກປັກຮັກສາ ສິດທິດສ່ວນບຸກຄົນ, ມີການສົ່ງເສີມຄວາມຍຸຕິທຳທາງສັງຄົມ, ແລະ ສືບຕໍ່ ປະຕິບັດຕາມຂໍ້ກຳນົດຂອງສະຫະປະຊາຊາດ ແລະ ກົດໝາຍສາກົນ.[5]

> ສະບັບ 2020 ສຳລັບກຸ່ມ ASEAN ທີ່ເປັນໜຶ່ງໃນ “ສະອາດ ແລະ ສີຂຽວ.... ພ້ອມທັງສ້າງຕັ້ງກົນໄກເພື່ອການພັດທະນາແບບຍືນຍົງ …”

ການຮັບຮູ້ກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (ປຜສ) ແມ່ນເປັນພື້ນຖານສຳລັບໂຄງການພັດທະ ນາແບບຍືນຍົງໃນ ASEAN ທີ່ຖືກເພີ່ມຕື່ມການຮັບຮູ້ເຂົ້າໃນການຖະແຫຼງຂອງ ບາງກອກ ປະເທດໄທ ຕໍ່ກັບ ສິ່ງແວດລ້ອມ ASEAN ປີ 1984.[6] ການຖະແຫຼ່ງຂອງ ບາງກອກ ສົ່ງເສີມເຖິງ “ ຄວາມເຄັ່ງຂັດໃນການນຳໃຊ້ຂະບວນການ ປຜສ ແລະ ຂະຫຍາຍການວິເຄາະ ມູນຄ່າ-ຜົນປະໂຫຍດ

[1] ປົດ ASEAN ມາດຕາທີ 1(9).
[2] ມາດຕາທີ 1(5).
[3] ມາດຕາທີ 1(7).
[4] ມາດຕາທີ 1(13).
[5] ມາດຕາທີ 2(2).
[6] ການຖະແຫຼງຂອງ ບາງກອກ ຂອງສິ່ງແວດລ້ອມ ASEAN ໃນວັນທີ 29 ພະຈິກ1984, ກໍຫ, 2009, ໜ້າທີ 657.

ເພື່ອຫຼຸດຜ່ອນຜົນກະທົບທາງລົບ ແລະ ເພື່ອຮັບຮອງການພິຈາລະນາ
ທີ່ເໝາະສົມຕໍ່ຄວາມສຳຄັນສິ່ງແວດລ້ອມໃນທຸກໆໂຄງການ ແລະ ກິດຈະການຕ່າງໆ
ພາຍໄຕ້ການຄຸ້ມຄອງຂອງລັດຖະບານ ຕໍ່ບັນດາຜົນກະທົບທີ່ຮ້າຍແຮງຕໍ່ສິ່ງແວດລ້ອມ ແລະ
ການຂະຫຍາຍຕົວຂອງພາກສ່ວນເອກະຊົນ ລວມທັງ ພາກສ່ວນອຸສະຫະກຳຕ່າງໆ."[7]

ການແກ້ໄຂບັນຫາການພັດທະນາແບບຍືນຍົງຢູ່ ປະເທດ ຈັກກະຕ້າ ປີ 1987, ເຊິ່ງເປັນທີ່ຮັບຮູ້ກັນວ່າ
"ຄວາມຍືນຍົງຂອງການພັດທະນາຈຳເປັນຕ້ອງມີການພັດທະນາຂະບວນການ ແລະ
ການຄຸ້ມຄອງສິ່ງແວດລ້ອມພາຍໄຕ້ການດຳເນີນງານທີ່ມີລັກສະນະແບບປະສົມປະສານ." ແລະ
ນອກນັ້ນຍັງເປັນທີ່ຮູ້ກັນວ່າ "
ການພິຈາລະນາສິ່ງແວດລ້ອມແບບປະສົມປະສານເຂົ້າໃຂຂະບວນການພັດທະນາຈະຕ້ອງການລິເລີ້ມການປະສາ
ນສົມທົບກັບລະບົບພາກພື້ນແລະສາກົນຢ່າງເຕັມສ່ວນແລະເອົາຈິງເອົາຈັງ."[8] ບັນຫາທີ່ຖືກແກ້ໄຂໃນ ປະເທດ
ຈັກກ່າຕ້າ ທີ່ເປັນສະມະຊິກ ຂອງ ASEAN ໄດ້ກ່າວໄວ້ວ່າ"
ການຕົກລົງເຫັນດີໃນຫຼັກການການພັດທະນາແບບຍືນຍົງແມ່ນເປັນແນວທາງແລະສິ່ງເສີມທີ່ເປັນດັ່ງປັດໃຈລວ
ມໃນການຈັດຕັ້ງປະຕິບັດວຽກງານ."

ການປະກາດໃຊ້ ຂອງ ASEAN ວ່າດ້ວຍສິ່ງແວດລ້ອມແບບຍືນຍົງ, ທີ່ເຊັນສັນຍາກັນ ທີ່ປະເທດ ສິງກະໂປ
ໃນວັນທີ 20 ພະຈິກ 2007 ໂດຍ ຫົວໜ້າ ສຳມະຊິກປະເທດ ASEAN,
ໄດ້ນຳເອົາຂໍ້ຕົກລົງເຂົ້າໃນການສົ່ງເສີມເສດຖະກິດ ແລະ ເປັນມິດຕໍ່ສິ່ງແວດລ້ອມໃນຂົງເຂດປະເທດອາຊີ
ASEAN ທີ່ກ່າວວ່າ " ທັງປັດຈຸບັນແລະ ອານາຄົດຈະສາມາດນຳໃຊ້ສິ່ງແວດລ້ອມທີ່ສະອາດ ແລະ ຍືນຍົງ."
ມີຂໍ້ກຳນົດຢູ່ໃນລະບຽບການປົກປັກຮັກສາ ແລະ
ຄຸ້ມຄອງສິ່ງແວດລ້ອມທີ່ອີງໃສ່ຫຼາກຫຼາຍກົນໄກໃນການສົ່ງເສີມການປະຕິບັດແບບຍືນຍົງ.

ສິດທິສ່ວນບຸກຄົນ

ໃນປັດຈຸບັນການຖະແຫຼງສິດທິສ່ວນບຸກຄົນຂອງ ASEAN
ແມ່ນຈະຕິດພັນກັບບາງຫຼັກການທີ່ກ່ຽວຂ້ອງກັບສິດທິ ແລະ ຊັບສິນທີ່ພຽງພໍຕໍ່ມາດຕະຖານການດຳລົງຊີວິດ
ລວມທັງ "ສິດຕໍ່ການພັດທະນາແບບຍືນຍົງ ແລະປອດໄພ" ແລະ ເຂົ້າເຖິງການຮັກສາສຸກຂະພາບ.

> **ມາດຕາທີ 28:**
> ທຸກຄົນມີສິດ ທີຈະມີມາດຕະຖານການດຳລົງຊີວິດທີ່ພຽງພໍຂອງຕົນເອງ ແລະ ຂອງຄອບຄົວ ທີ່ປະກອບມີ:
> (e) ສິດໃນການນຳໃຊ້ນ້ຳ ແລະສຸກຂາອານາໄມທີ່ປອດໄພ;
> (f) ສິດຕໍ່ການນຳໃຊ້ສິ່ງແວດລ້ອມທີ່ຍືນຍົງ, ສະອາດ ແລະ ປອດໄພ.

ອີກຢ່າງໜຶ່ງ, ຂະນະທີ່ສິດທິໃນການພັດທະນາທີ່ຮັບຮູ້ກັນພາຍໄຕ້ການປະກາດໃຊ້ສິດທິດສ່ວນບຸກຄົນ ຂອງ
ASEAN ໄດ້ຖືກປັງຄັບໃຊ້

[7] Koh, 2009, p.658.
[8] Koh, 2009, p.663.

ສະນັ້ນສິດທິໃນການພັດທະນາກໍ່ຄວນຈະຄຳນຶງເຖິງຄວາມສົມດຸນທາງດ້ານການພັດທະນາ ແລະ ສິ່ງແວດລ້ອມທີ່ຈຳເປັນຕໍ່ຍຸກສະໄໝປັດຈຸບັນ ແລະ ອານາຄົດ.[9]

ແມ່ນຫຍັງຄືການປະເມີນຜົນກະທົບສິ່ງແວດລ້ອມ?

> ຫຼັກການທີ 17:
> ການປະເມີນຜົນກະທົບສິ່ງແວດລ້ອມ,
> ເປັນເຄື່ອງມືລະດັບຊາດທີ່ຈະຖືກດຳເນີນການເພື່ອກິດຈະກຳສະເໜີທີ່ເຫັນວ່າມີຜົນກະທົບທາງລົບຕໍ່ສິ່ງແວດລ້ອມ ແລະ ເຊື່ອມໂຍງເຂົ້າໃນການຕັດສິນໃຈຂອງຂະແໜງການຊ່ຽວຊານແຫ່ງຊາດ .[10]

ການປະເມີນຜົນກະທົບສິ່ງແວດລ້ອມຈະສາມາດກຳນົດໄດ້ດັ່ງນີ້:

> ຂະບວນການກຳນົດໄຈ້ແຍກ, ຄາດຄະເນ, ຕີລາຄາ, ແລະ ຫຼຸດຜ່ອນຜົນກະທົບທາງຊີວະພາບ, ສັງຄົມ ແລະ ອື່ນໆ ທີ່ກ່ຽວຂ້ອງໃນບົດສະເໜີການພັດທະນາ (ແລະກິດຈະກຳອື່ນໆ)
> ກ່ອນທີ່ຈະດຳເນີນການຕັດສິນໃຈແລະ ຕົກລົງເຫັນດີໃນສັນຍາ.

ຈຸດປະສົງຂອງ ການປະເມີນຜົນກະທົບສິ່ງແວດລ້ອມ(ປຜສ)

- ເພື່ອຮັບປະກັນວ່າ ການພິຈາລະນາທາງດ້ານສິ່ງແວດລ້ອມ ແມ່ນໄດ້ຮັບການລະບຸໄວ້ຢ່າງຊັດເຈນ ແລະ ໄດ້ລວມເຂົ້າໃນການພັດທະນາຂະບວນການ ການຕັດສິນໃຈ;
- ເພື່ອຄາດຄະເນ ແລະ ຫຼີກລ້ຽງ, ຫຼຸດຜ່ອນ ຫຼື ທົດແທນ ຜົນກະທົບທາງລົບທີ່ຮ້າຍແຮງຕໍ່ຊີວະພາບ, ສັງຄົມ ແລະ ຜົນກະທົບອື່ນໆທີ່ກ່ຽວກັບບົດສະເໜີການພັດທະນາ;
- ເພື່ອປ້ອງກັນຜົນຜະລິດ ແລະ ຄວາມສາມາດຂອງລະບົບທຳມະຊາດ ແລະ ຂະບວນການທາງນິເວດເຊິ່ງເປັນການບົວລະບັດຮັກສາກົນໄກຂອງລະບົບທຳມະຊາດ; ແລະ
- ເພື່ອສົ່ງເສີມການພັດທະນາທີ່ມີຄວາມຍືນຍົງ ແລະ ເພີ້ມປະສິດທິພາບໃນການນຳໃຊ້ຊັບພະຍາກອນແລະ ການຄຸ້ມຄອງກາລະໂອກາດຕ່າງໆ. [11]

ບົດ ປຜສ ໄດ້ຖືກນຳສະເໜີຄັ້ງທຳອິດໃນ USA ຂອງຕົ້ນປີ 1970 ພ້ອມດຽວກັນກັບ ຂໍ້ກຳນົດໃນນະໂຍບາຍສິ່ງແວດລ້ອມແຫ່ງຊາດ (NEPA). [12] ເລີ້ມແຕ່ນັ້ນມາ ບັນດາຮູບແບບ ແລະ ການຈັດຕັ້ງປະຕິບັດຂອງ ປຜສ ກໍ່ມີຄວາມສຳຄັນ ແລະ ໄດ້ຮັບການພັດທະນາຢ່າງເປັນທາງການ. ໃນປີ 1996 ການທົບທວນຄືນໂດຍ[13] ສະມາຄົມສາກົນຂອງການປະເມີນຜົນກະທົບ (IAIA),

---

[9] ການປະກາດໃຊ້ສິດທິດສ່ວນບຸກຄົນ ຂອງ ASEAN, ມາດຕະຖານ 35.

[10]ຫຼັກການທີ 17ຂອງປະກາດໃຊ້ Rio ວ່າດ້ວຍການພັດທະນາສິ່ງແວດລ້ອມ ປີ 1992.

[11] ລາຍລະອຽດໄດ້ບັນທຶກໃນເວັບໄຊລນີ້
www.iaia.org/publicdocuments/specialpublications/principles%20of%20IA_web.pdf.

[12] Elliot,2014, p.103.

[13] Sadler, 1996.

ຂອງບັນດາປະສົບການຂອງ EIA ທີ່ກວ້າງ ຂວາງໄດ້ຖືກແນະນຳ ສີ່ ອົງປະກອບທີ່ສຳຄັນ ທີ່ມີປະສິດຕິຜົນໃນການນຳໃຊ້ເຂົ້າໃນ ປຜສ:

- ການຈັດການເວລາທີ່ເໝາະສົມເຂົ້າໃນການລິເລີ່ມການປະເມີນ ເຊິ່ງຈະພຽງພໍຕໍ່ການທົບທວນບົດສະເໜີເພື່ອຈະສາມາດກຳນົດຂອບເຂດການສຶກສາເຂົ້າໃນການພັດທະນາຢ່າງສົມເຫດສົມຜົນ;
- ມີແນວທາງສະເພາະ ແລະ ຊັດເຈນ ໃນການຮູບແບບການກຳນົດໜ້າວຽກ ຫຼືບົດແນະນຳທີ່ກວມ ລວມບັນຫາທີ່ສຳຄັນ ຕາມໄລຍະເວລາ ແລະ ໂອກາດເພື່ອສະໜອງຂໍ້ມູນເຂົ້າໃນຂັ້ນຕອນສຳຄັນໃນການຕັດສິນໃຈ;
- ມີຂໍ້ມູນທີ່ມີຄຸນນະພາບ ແລະ ຜົນຜະລິດທີ່ສອດຄ່ອງກັບມາດຕະຖານຂອງຂັ້ນຕອນບົດແນະນຳ ແລະການນຳໃຊ້ “ຕົວແບບທີ່ດີ”; ແລະ
- ມີການເປີດເຜີຍຕໍ່ການຕັດສິນໃຈ ແລະ ນຳສະເໜີຜົນຂອງ ການ ປຜສ, ມີການປະສານງານທີ່ດີ ແລະເຊື່ອໃຈໄດ້.

ອົງປະກອບເຫຼົ່ານີ້ຈະຕ້ອງຖືກລວມເຂົ້າໃນພັນທະເພື່ອການມີສ່ວນຮ່ວມມຂອງສາທາລະນະ.

ຄຳນິຍາມຂ້າງລຸ່ມນີ້ໄດ້ຖືກອານຸມັດໂດຍການທົບທວນເອກະສານໃນປີ 1996 ແລະ ປະຈຸບັນ:

ການປະເມີນສິ່ງແວດລ້ອມ (ປສ) ແມ່ນລະບົບຂອງຂະບວນການການຕີລາຄາ ແລະ ການເກັບກຳຂໍ້ມູນທີ່ມີ, ຄວາມອາດສາມາດ ແລະ ໜ້າທີ່ຂອງລະບົບ ແລະ ຊັບພະຍາກອນທຳມະຊາດ ທີ່ອຳນວຍຄວາມສະດວກໃນການສ້າງແຜນການພັດທະນາ ແລະ ຕັດສິນໃຈໂດຍລວມ, ແລະເພື່ອປະເມີນ ແລະຈັດການຜົນກະທົບທີ່ຮ້າຍແຮງ ແລະຜົນສະທ້ອນຕໍ່ການນຳສະເໜີການປະຕິບັດຂອງແຕ່ລະໜ້າວຽກສະເພາະ.

ການປະເມີນຜົນກະທົບສິ່ງແວດລ້ອມ (*ປຜສ*) ແມ່ນຂະບວນການກຳນົດ, ການຄາດຄະເນ, ການຕີລາຄາ ແລະ ການຫຼຸດຜ່ອນ ຜົນກະທົບທາງ ຊີວະພາບ, ສັງຄົມ, ແລະ ຜົນສະທ້ອນອື່ນໆຂອງໂຄງການສະເໜີ ແລະ ໄລຍະເວລາຂອງກິດຈະກຳພື້ນຖານທີ່ຈະເປັນປັດໄຈຫຼັກໃນການຕັດສິນໃຈ ແລະ ການຕົກລົງເຫັນດີໃນສັນ ຍາ.

ການປະເມີນຜົນສິ່ງແວດລ້ອມແບບຍຸດທະສາດ (SEA) ແມ່ນຂະບວນການໃນໄລຍະການກວດສອບ ແລະຕີລາຄາທາງດ້ານນະໂຍບາຍ, ແຜນການ, ແລະ ກິດຈະການ ແລະ ລະດັບໃຫຍ່ກວ່າ ຫຼື ກ່ອນການລິເລີ່ມໂຄງການ.

ການປະເມີນຜົນກະທົບທາງສັງຄົມ (SIA) ແມ່ນຂະບວນການຕີລາຄາຂໍ້ຂັດແຍ່ງທາງສັງຄົມ ທີ່ອີງຕາມນະໂຍບາຍສະເພາະ ແລະ ບົດສະເໜີລັດຖະບານ, ໂດຍສະເພາະໃນມາດຖານຂອງຄວາມຕ້ອງການຂອງ ປຜສ ແຫ່ງຊາດ (ຄະນະກຳມະການ ຂອງອົງການຈັດຕັ້ງສາກົນ ວ່ດ້ວຍບົດແນະນຳ ແລະ ຫຼັກການ ໃນປີ, 1994, 108).[14]

[14] Sadler, 1996, ໜ້າທີ.13.

ຍິ່ງໄປກວ່ານັ້ນ,ໃນການທົບທວນເອກະສານປີ 1996 ໄດ້ສະເໜີ ສອງ ຈຸດປະສົງພື້ນຖານຂອງ ປຜສ :

> *ຈຸດປະສົງທຳອິດ*, ເປົ້າໝາຍຫຼັກແມ່ນສິ່ງອຳນວຍຄວາມສະດວກ, ການຕັດສິນໃຈທີ່ຕິດພັນກັບການພິຈາລະນາທາງສິ່ງແວດລ້ອມທີ່ຊັດເຈນ. ຂະບວນການ ປຜສ ກໍ່ເຊັ່ນດຽວກັນ ຈະຕ້ອງມີການກຳນົດທີ່ຊັດເຈນ, ມີການຈັດການຂໍ້ມູນຂອງຜົນກະທົບສິ່ງແວດລ້ອມທີ່ຖືກຕ້ອງ, ຄຳນຶງເຖິງຄວາມສ່ຽງ ແລະ ຄວາມສຳຄັນຕໍ່ທາງເລືອກ ແລະ ການສະເໜີການພິດທະນາ.
>
> *ຈຸດປະສົງທີ ສອງ*, ຂະບວນການຂອງ ປສ
> ຈະແນ່ໃສການບັນລຸເຖິງເປົ້າໝາຍສຳຄັນສຸດທ້າຍ(ແຕ່ບໍ່ຈຳກັດທັງໝົດ) ຂອງ
> ການປົກປັກຮັກສາສິ່ງແວດລ້ອມ ແລະ ການພັດທະນາແບບຍືນຍົງ. ບັນດາບົດອ້າງອີງ ຫຼື
> ຜົນສຳເລັດຂອງເປົ້າໝາຍ ແມ່ນມີຫຼາກຫຼາຍໄລຍະແລະໜ້າວຽກ ພາຍໄຕ້ກົດໝາຍ ປສ ແລະ ນະໂຍບາຍ, ທີ່ແມ່ນຈຸດປະສົງສະເພາະທີ່ສຳເລັດໄດ້ໂດຍການນຳໃຊ້ຂະບວນການ ປສ.[15]

ບົດ ປຜສ ໄດ້ຖືກປັບປຸງມາໄດ້ ສີ່ ປີທີ່ຜ່ານມາ ໃນ " ຂະບວນການທີ່ມີຫຼາຍຈຸດປະສົງ", ມີຄວາມສຳຄັນຫຼາຍຂຶ້ນໃນໜ້າວຽກໄລຍະຍາວ,ເປົ້າໝາຍທາງສັງຄົມທີ່ມີຜົນສະທ້ອນ ແລະ ມີມາດຖານໂດຍກົງຕໍ່ການພັດທະນາແບບຍືນຍົງ. ອົງປະກອບອື່ນໆ ທີ່ຖືກກຳນົດ(ທີ່ຕື່ມເຂົ້າໃນເປົ້າໝາຍຂ້າງເທິງ), ປະກອບມີ;

- ການປົກປັກຮັກສາຄຸນຄ່າຂອງຂະວນການທາງນິເວດວິທະຍາ ແລະ ສະຖານທີ່ມໍລະດົກ;
- ຫຼີກລ້ຽງການສູນເສຍທີ່ເປັນຖາວອນ ແລະ ຍອມຮັບບໍ່ໄດ້ ແລະ ເປັນການຫຼຸດຜ່ອນຜົນຄຸນຄ່າທາງທຳມະຊາດ;
- ຮັບຮອງການພັດທະນາທີ່ຖືກປັບປຸງທີ່ມີທ່າອ່ຽງ ແລະ ສາມາດເຂົ້າກັບພື້ນຖານຂອງຊັບພະຍາກອນທຳມະຊາດ;
- ນຳໃຊ້ຊັບພະຍາກອນທຳມະຊາດຢ່າງມີປະສິດຕິພາບ, ພະຍາຍາມ ສະຫງວນໄວ້ ແລະຄຸ້ມຄອງໄວ້ເທົ່າທີ່ເປັນໄປໄດ້;
- ປົກປ້ອງສຸຂະພາບຂອງປະຊາຊົນ ແລະ ຊຸມຊົນໃຫ້ຢູ່ດີ;
- ດຳເນີນ ການແກ້ໄຂຂໍ້ຂ້ອງໃຈທີ່ກ່ຽວກັບຂໍ້ຂັດແຍ່ງຂອງປະຊາຊົນ ແລະ ຕໍ່ປະເພນີຂອງການດຳລົງຊີວິດພື້ນເມືອງ;
- ປັບປຸງການປະສານງານລະຫວ່າງຕົວແທນຜູ້ມີສ່ວນຮ່ວມ ແລະ ຈັດຕັ້ງປະຕິບັດ;
- ພັດທະນາຮູບແບບ ແລະ ແຜນການການພັດທະນາໃຫ້ດີຂຶ້ນກວ່າເກົ່າ ເຊັ່ນ: ມີພື້ນທີ່ສີຂຽວຂຶ້ນ ແລະ ມີປະສິດທິພາບໃນການປະຫຍັດງົບປະມານ;
- ໃຫ້ສິດທິຕໍ່ຊຸມຊົນໃນການພັດທະນາ ແລະ ສ້າງຄວາມອາດສາມາດເຂົ້າໃນການມີສ່ວນຮ່ວມຂອງສາທາລະນະ;
- ເສີມສ້າງຄຸນຄ່າທາງສິ່ງແວດລ້ອມ ແລະ ໜ້າທີ່ຮັບຜິດຊອບໃນທຸກລະດັບຂອງແຕ່ລະສະຖາບັນ; ແລະ
- ປະເມີນລາຄາຜົນກະທົບສິ່ງແວດລ້ອມ ແລະ ຜົນເສຍຫາຍໃນຂົງເຂດສະຫະກຳທີ່ສອດຄ່ອງຕໍ່ຫຼັກການ ການທົດແທນຜົນເສັຍຫາຍຈາກມົນລະຜິດ.[16]

[15] Sadler, 1996, ໜ້າທີ.13.

[16] Sadler, 1996, ໜ້າທີ.14.

ຄຸນລັກສະນະຕົ້ນຕໍ່ຂອງຂະບວນການປະເມີນຜົນກະທົບສິ່ງແວດລ້ອມ

ໃນບາງລັກສະນະຂອງຂະບວນການ ປຜສ ໃນປັດຈຸບັນຄວນລວມມີ:

- ການກັ່ນຕອງ - ຈະກຳນົດໄດ້ວ່າຄວນຈະມີການສະເໜີຫຼືບໍ່ເພື່ອດຳເນີນ ປຜສ ແລະ ຖ້າສົມຄວນຈະດຳເນີນຢູ່ໃນລະດັບໃດ.
- ການກຳນົດຂອບເຂດການສຶກສາ - ເພື່ອຈະກຳນົດບັນຫາ ແລະ ຜົນກະທົບທີ່ຄາດວ່າຈະມີຄວາມສຳຄັນທີ່ຈະເປັນຈຸດອ້າງອີງໃນການດຳເນີນການ ປຜສ.
- ການສຳຫຼວດບັນດາທາງເລືອກອື່ນໆທີ່ເປັນໄປໄດ້ - ເພື່ອສ້າງທາງເລືອກທີ່ມີຈຸດອ້າງອີງຫຼືເປັນມິດກັບສິ່ງແວດລ້ອມຫຼາຍທີ່ສຸດ ແລະ ເລີ່ມດຳເນີນເພື່ອໃຫ້ບັນລຸບົດສະເໜີຈຸດປະສົງຕ່າງໆ.
- ການວິເຄາະຜົນກະທົບ - ເພື່ອກຳນົດ ແລະ ຄາດຄະເນເງື່ອນໄຂທາງສິ່ງແວດລ້ອມ-ສັງຄົມ ແລະຜົນກະທົບອື່ນໆໃນບົດສະເໜີ.
- ການຫຼຸດຜ່ອນ ແລະ ການຄວບຄຸມຜົນກະທົບ - ເພື່ອສ້າງມາດຕະການທີ່ຈຳເປັນໃນການຫຼີກລ້ຽງ, ຫຼຸດຜ່ອນ ຫຼືຊົດເຊີຍຜົນກະທົບທາງລົບທີ່ຄາດວ່າຈະເກີດຂຶ້ນ ແລະ ທີ່ເຫັນສົມຄວນ, ເພື່ອລວບລວມເຂົ້າໃນແຜນການຄຸ້ມຄອງຜົນກະທົບ (EMP) ຫຼືລະບົບ.
- ການຕີລາຄາຈຸດພົ້ນເດັ່ນ - ເພື່ອກຳນົດຜົນກະທົບທີ່ມີຄວາມສຳຄັນ ແລະ ສິ່ງທີ່ຕົກຄ້າງທີ່ສາມາດຍອມຮັບໄດ້(ຕົວຢ່າງເຊັ່ນ: ຜົນກະທົບທີ່ບໍ່ສາມາດຈະຫຼີກລ້ຽງໄດ້).
- ການກະກຽມການຖະແຫຼ່ງການປະເມີນຜົນກະທົບສິ່ງແວດລ້ອມ ຫຼືປະກອບບົດລາຍງານ(ບົດລາຍງານ ປຜສ EIA) - ເພື່ອລາຍງານຄວາມຊັດເຈນແລະທ່ຽງທຳເຂົ້າໃນບົດສະເໜີ, ສະເໜີມາດຕະການຫຼຸດຜ່ອນ, ຈຸດເດັ່ນຂອງຜົນສະທ້ອນ, ແລະ ຂໍ້ສົງໃສຈາກຄວາມຂ້ອງໃຈຂອງສາທາລະນະ ແລະຊຸມຊົນທີ່ຖືກກະທົບເຂົ້າໃນບົດສະເໜີດັ່ງກ່າວນີ້.
- ການທົບທວນບົດລາຍງານ EIA - ເພື່ອກຳນົດໄດ້ບົດລາຍງານຈະສາມາດບັນລຸເປົ້າໝາຍໃນເອກະສານທີ່ອ້າງອີງ, ມີການປະເມີນຜົນທີ່ພຽງພໍຕໍ່ບົດສະເໜີ ແລະປະກອບດ້ວຍຂໍ້ມູນທີ່ຕ້ອງການເຂົ້າໃນຂະບວນການຕັດສິນໃຈ.
- ຂັ້ນຕອນການຕັດສິນໃຈ. - ເພື່ອຮັບຮອງຫຼືບໍ່ຮັບຮອງບົດສະເໜີ ແລະ ເພື່ອສ້າງຂໍ້ກຳນົດ ແລະ ເງື່ອນໄຂເຂົ້າໃນການຈັດຕັ້ງປະຕິບັດ.
- ການສືບຕໍ່ ຕິດຕາມ ກວດກາ, ຄວາມສອດຄອງຕໍ່ລະບຽບການ ແລະ ການບັງຄັບໃຊ້ - ເພື່ອໃຫ້ຮັບຮອງວ່າຂໍ້ກຳນົດແລະເງື່ອນໄຂຂອງບົດສະເໜີໄດ້ບັນລຸເຖິງຈຸດປະສົງ; ເພື່ອຕິດຕາມຜົນກະທົບຂອງການພັດທະນາ ແລະ ປະສິດທິພາບຂອງມາດຕະການຫຼຸດຜ່ອນ; ເພື່ອສ້າງຄວາມເຂັ້ມແຂງໃຫ້ ຂະບວນການ ປຜສ ໃນອານາຄົດ ແລະ ເສີມສ້າງມາດຕະການ ການຫຼຸດຜ່ອນທີ່ຈຳເປັນ ແລະ ຕ້ອງການ, ດຳເນີນການກວດສອບ ແລະ ມີການຕີລາຄາໃນການປັບປຸງການຄຸ້ມຄອງສິ່ງແວດລ້ອມ.

ສິດທິ ແລະ ຄວາມຖືກຕ້ອງ ຕໍ່ສິ່ງແວດລ້ອມສະອາດ

ຄຳຕັດສິນຂອງສານລັດຖະທຳມະນູນປະເທດໄທ ເລກທີ. 32/2552 (2009)

ພາກສ່ວນ: ທ່ານ.ໄພບູນ ກົງເກີດ ແລະ ອີກ 210 ໂຈດ, ໝາຍໂດຍທ້ອງການສານປົກຄອງທີ່ເປັນຜູ້ຮ້ອງຂໍ

- **ສະຫຼຸບຫຍໍ້ສະພາບຕົວຈິງ:** ໂຈດໄດ້ຍື່ນຟ້ອງຄະດີຕໍ່ສານປົກຄອງ ຕໍ່ ສາມ ເທດສະບານທ້ອງຖິ່ນ ໃນ ຂອນແກ່ນ ປະເທດໄທ, ຊຶ່ງໄດ້ອ້າງວ່າ ທາງເທດສະບານໄດ້ອະນຸມັດການແກ້ໄຂທີ່ຜິດກົດໝາຍໂດຍການສ້າງຂຸມຂີ້ເຫຍື້ອໃນເຂດຊຸມຊົນ ຂອນແກ່ນ ໂດຍບໍ່ມີການກະກຽມການປະເມີນຜົນກະທົບຕໍ່ສຸກຂະພາບ(EHIA), ຫຼື ບໍ່ມີການຮັບຟັງສຽງຂອງສາທາລະນະ ຫຼື ບໍ່ຮັບຄຳຄິດເຫັນຈາກຊ່ຽວຊານທາງສຸກຂະພາບ ແລະສິ່ງແວດ ລ້ອມ.
- ສານປົກຄອງຂອງ ຂອນແກ່ນ ໄດ້ປະຕິເສດ ຂໍ້ຮ້ອງຟ້ອງເນື່ອງຈາກວ່າ: ອີງຕາມລະບຽບກົດໝາຍທາງສິ່ງແວດລ້ອມ ສະບັບ ພ.ສ. 2535 (1992), ເປັນພຽງກົດໝາຍດຽວທີ່ກ່ຽວຂ້ອງກັບການປະເມີນຜົນກະທົບສິ່ງແວດລ້ອມ, ມາດຕາທີ 46 ແລະ ດຳລັດທີ່ກ່ຽວຂ້ອງ, ເຊິ່ງໃນກໍລະນີຂອງໂຄງການດັ່ງກ່າວນີ້ ບໍ່ໄດ້ຮຽກຮ້ອງໃຫ້ມີການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແຕ່ຢ່າງໃດ.
- ການຮັບຟັງສຽງຂອງສາທາລະນະແມ່ນເປັນພາລະໜ້າທີ່ຂອງ ທ້ອງການລັດຖະບານວ່າດ້ວຍການມີສ່ວນຮ່ວມຂອງສາທາລະນະ ພ.ສ.2548 (2005) ເຊິ່ງອີງຕາມເງື່ອນໄຂ ແລະ ແມ່ນບໍ່ມີຂໍ້ບັງຄັບທີ່ຈະຕ້ອງປະຕິບັດການຮັບຟັງສາທາລະນະ ເຊິ່ງເປັນພຽງແຕ່ທາງເລືອກໃຫ້ທາງລັດຖະບານຂອງ ຂອນແກ່ນ ແລະ ບໍ່ມີຫຼັກຖານໃດໃດທີ່ສະແດງໃຫ້ເຫັນວ່າ ມີການລ່ວງລະເມີດລະບຽບການລັດຖະບານ, ສະນັ້ນ ຈຶ່ງຖືວ່າບໍ່ມີການຜິດຕໍ່ກົດ ໝາຍແຕ່ຢ່າງໃດ.
- ໂຈດໄດ້ຍື່ນການອຸທອນເຖິງສານປົກຄອງປະຊາຊົນສູງສຸດ ແລະ ຮຽກຮ້ອງໃຫ້ ສານປົກຄອງປະຊາຊົນສູງສຸດ ໃຫ້ອ້າງອີງຕໍ່ບັນຫາລັດຖະທຳມະນູນ ທີ່ໃຫ້ລັດຖະທຳມະນູນເປັນຜູ້ຕັດສິນບັນຫາ.
- **ບັນຫາທາງລະບຽບກົດໝາຍ:** ບັນຫາກໍ່ຄືວ່າ ໃນມາດຕາ 46 ຂອງລະບຽການສິ່ງແວດລ້ອມ ສະບັບ ພ.ສ 2535 (1992) ຂັດກັບ ມາດຕາ 56 ຂອງລັດຖະທຳມະນູນປະເທດໄທ ສະບັບ ພ.ສ. 2540 (1997) ຫຼືມາດຕາ 67 ຂອງ ຂອງລັດຖະທຳມະນູນປະເທດໄທ ສະບັບ ພ.ສ 2550 (2007)ແມ່ນບໍ່?
- **ການຕັດສິນ:** ສານລັດຖະທຳມະນູນມີຍົດບາດຕໍ່ ມາດຕາ 46 ຂອງລະບຽບການສິ່ງແວດລ້ອມ ສະບັບ ພ.ສ 2535 (1992) ຂັດກັບ ມາດຕາ 56 ຂອງລັດຖະທຳມະນູນປະເທດໄທ ສະບັບ ພ.ສ. 2540 (1997) ຫຼືມາດຕາ 67 ຂອງລັດຖະທຳມະນູນປະເທດໄທ ສະບັບ ພ.ສ. 2550 (2007). ສານຍັງສ້າງຕັ້ງຮູບແບບວ່າດ້ວຍສິດໃນການດຳລົງຊີວິດຕໍ່ສິ່ງແວດລ້ອມ ທີ່ອີງຕາມ ມາດຕາ 67 ປີ 2007 ຂອງລັດ ຖະທຳມະນູນທີ່ໄດ້ຢັ້ງຢືນໄວ້. ໄດ້ຮຽກຮ້ອງໃຫ້ທຸກຂະແໜງການທີ່ກ່ຽວຂ້ອງພິຈາລະນາຖ້າຫາກວ່າມີໂຄງ ການໃດທີ່ມີ ແລະບໍ່ມີພັນທະຕໍ່ການກະກຽມ ປົດ ປຜສ ທີ່ເຫັນວ່າອາດຈະມີຜົນກະທົບຕໍ່ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂອງຊຸມຊົນ ຫຼືເປັນເຫດໃຫ້ເກີດຜົນກະທົບຕໍ່ສຸກຂະພາບຂອງປະຊາຊົນ. ຂະ ແໜງການທີ່ກ່ຽວຂ້ອງ ຈະຕ້ອງຕິດຕາມການດຳເນີນງານນີ້ ຖ້າບໍ່ມີຄວາມຄືບໜ້າປະຊາຊົນມີສິດທີ່ຈະສະ ເໜີໃຫ້ໂຄງການຈະຕ້ອງດຳເນີນການປະເມີນຜົນກະທົບຕໍ່ສຸກຂະພາບ ແລະສິ່ງແວດລ້ອມ, ໂດຍການຮັບຟັງແລະ ຂໍຄຳແນະນຳຈາກຊ່ຽວຊານທາງດ້ານສຸກຂະພາບແລະສິ່ງແວດລ້ອມ.

ຫຼັກການພື້ນຖານສຳຄັນຂອງການປະເມີນຜົນກະທົບສິ່ງແວດລ້ອມ

ປະສິດຕິພາບຂອງ ປຜສ ທີ່ຈະສາມາດບັນລຸຜົນສຳເລັດໄດ້
ແມ່ນຂຶ້ນກັບການນຳໃຊ້ຫຼັກການພື້ນຖານດັ່ງຕໍ່ໄປນີ້:

- ມີຂະບວນການສອດຄ່ອງກັບກົດໝາຍ, ຈະແຈ້ງ ແລະ ມີປະສິດຕິພາບ;
- ຜູ້ສະເໜີ ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍໃນການນຳໃຊ້ ແລະ ການປະເມີນ;
- ການດຳເນີນການມີສ່ວນຮ່ວມຂອງສາທາລະນະໃນທຸກຂັ້ນຕອນ ແລະ ຂະບວນການ;
- ຜູ້ໄດ້ຮັບຜົນກະທົບຈາກໂຄງການ ແລະ ຜູ້ມີສ່ວນຮ່ວມອື່ນໆສາມາດເຂົ້າເຖິງຂໍ້ມູນຂ່າວສານໄດ້;
- ເຜີຍແຜ່ຂໍ້ມູນຂ່າວສານທີ່ກ່ຽວຂ້ອງທຸກຢ່າງ;
- ມີການຕັດສິນໃຈທີ່ເປີດເຜີຍ ແລະ ມີຫຼັກຖານອ້າງອີງ; ແລະ
- ມີການຕິດຕາມກວດກາ, ການປະຕິບັດຕາມລະບຽບການ ແລະ ຂໍ້ບັງຄັບໃຊ້ຢ່າງມີປະສິດຕິພາບ.[17]

ຂະບວນການສອດຄ່ອງກັບກົດໝາຍ, ຊັດເຈນ ແລະ ມີປະສິດຕິພາບ:

ຂະບວນການ ປຜສ ອາດຈະມີຂໍ້ຫຍຸ້ງຍາກສັບສົນ, ໃຊ້ເວລາຫຼາຍ ແລະ ມີຄ່າໃຊ້ຈ່າຍແພງ.
ສະນັ້ນຈຶ່ງຈຳເປັນຕ້ອງເອົາໃຈໃສ່ຕໍ່ທຸກລະບຽບການຢ່າງຊັດເຈນ ດັ່ງທີ່ໄດ້ຈັດລຽງຂັ້ນຕອນໃນການຕິດຕາມ.
ກຳນົດຊັດເຈນທຸກພາກສ່ວນທີ່ມີສ່ວນຮ່ວມ ເຊິ່ງລວມມີ ຜູ້ຖືກກະທົບ,ຜູ້ສະເໜີໂຄງການ, ທີ່ປຶກສາ ປຜສ,
ຜູ້ຮັກສາລະບຽບການຂອງລັດຖະບານ(ບໍ່ຈຳກັດພຽງແຕ່ລະບຽບການທາງສິ່ງແວດລ້ອມເທົ່ານັ້ນ) , ແລະ
ພາກສ່ວນອື່ນໆທີ່ສົນໃຈ ແລະ ທີ່ສອດຄ່ອງກັບຊ່ວງໄລຍະເວລາອີກດ້ວຍ.
ປະຕິບັດຕາມຂັ້ນຕອນທາງດ້ານລະບຽບກົດໝາຍແມ່ນເປັນທີ່ເຂົ້າໃຈຢ່າງກວ້າງຂວາງພ້ອມທັງຫຼຸດຜ່ອນຄວາມ
ຂັດແຍ່ງທີ່ອາດຈະເກີດຂຶ້ນເມື່ອຕ້ອງການການຕັດສິນໃຈຂັ້ນສຸດທ້າຍ.

ຜູ້ສະເໜີ ຮັບຜິດຊອບຄ່າໃຊ້ຈ່າຍໃນການນຳໃຊ້ແລະການປະເມີນ:
ຂະບວນການ ປຜສ ຈະໃຊ້ງົບປະມານຫຼາຍ
ໂດຍສະເພາະໃນການນຳສະເໜີການພັດທະນາທີ່ປະກອບດ້ວຍຫຼາຍໆອົງປະກອບ ແລະ ຫຼາຍໄລຍະ.

ການລົງທຶນທີ່ເໝາະສົມ ແລະ
ການວິເຄາະຜົນກະທົບທີ່ອາດຈະເກີດຂຶ້ນໃນບົດສະເໜີແມ່ນຕິດພັນກັບລາຍລະອຽດຂອງວຽກງານທາງເຕັກນິ
ກເຊັ່ນດຽວກັນ. ການມີສ່ວນຮ່ວມຂອງສາທາລະນະແມ່ນອົງປະກອບທີ່ສຳຄັນໃນຂະບວນການ ປຜສ.

ບັນດາສາທາລະນະທົ່ວໄປບໍ່ຈຳເປັນຕ້ອງຈ່າຍຄ່າເຂົ້າຮ່ວມຂະບວນການ ປຜສ ຫຼືການປະເມີນຜົນ ປຜສ
ຂອງລັດ ຖະບານ. ມູນຄ່າການໃຊ້ຈ່າຍທັງໝົດຕ້ອງລວມເຂົ້າໃນງົບປະມານລວມຂອງ ປຜສ. ປຜສ
ອາດຈະມີຜົນຕໍ່ຂອບເຂດໜ້າທີ່ໃນການຕິດຕາມກວດກາ ແລະ
ການຄຸ້ມຄອງໂຄງການທີ່ນຳສະເໜີເພື່ອສືບຕໍ່ຈັດຕັ້ງປະຕິບັດ.
ງົບປະມານຂອງໂຄງການຕ້ອງສະໜອງໃຫ້ພຽງພໍສຳລັບທຸກກິດຈະກຳເຫຼົ່ານີ້.

[17] Baird ແລະ Cosier, 2014, ປັບປຸງໂດຍ Baird ແລະ Cosier, 2016.

ການດຳເນີນທີ່ມີສ່ວນຮ່ວມຂອງສາທາລະນະໃນທຸກຂັ້ນຕອນ ແລະ ຂະບວນການ:
ເປົ້າໝາຍສຳຄັນຂອງ ປຜສ ແມ່ນເພື່ອຫຼຸດຜ່ອນຄວາມສ່ຽງ
ຂໍ້ຂັດແຍ່ງໃນສັງຄົມທີ່ອາດຈະເກີດຂຶ້ນຈາກໂຄງການ
ເພື່ອຮັບປະກັນວ່າປະຊາຊົນຜູ້ທີ່ຖືກກະທົບຈາກໂຄງການທັງໝົດ ແລະ ຜູ້ມີສ່ວນຮ່ວມອື່ນໆໄດ້ເຂົ້າຮ່ວມ,
ເປັນສ່ວນສຳຄັນ ແລະ ໄດ້ຮັບຄວາມນັບຖືໃນການຕັດສິນໃຈກ່ຽວກັບບົດສະເໜີການຜັດທະນາ.
ເພື່ອໃຫ້ມີປະສິດທິພາບໃນເລື່ອງນີ້, ການມີສ່ວນຮ່ວມຂອງສາທາລະນະຕ້ອງໄດ້ດຳເນີນການກະກຽມ ແລະ
ວາງແຜນການຕະຫຼອດຂະບວນການ ປຜສ (ແລະ ຕະຫຼອດການຈັດຕັ້ງປະຕິບັດ ແລະ
ການດຳເນີນການຂອງໂຄງການ). ພະຍາຍາມໃຫ້ສາທາລະນະໄດ້ມີສ່ວນຮ່ວມຢ່າງຖືກຕ້ອງ
ບໍ່ແມ່ນພຽງເພື່ອໄດ້ເຂົ້າຮ່ວມຫຼືດຳເນີນການເພື່ອໃຫ້ສຳເລັດຕາມຂໍ້ກຳນົດຂອງລະບຽບການເທົ່ານັ້ນ.
ການມີສ່ວນຮ່ວມຂອງສາທາລະນະຈະຕ້ອງໃຫ້ມີຄວາມສອດຄ່ອງກັບໂຄງການ ແລະ
ສະຖານະສະເພາະຂອງຜູ້ມີສ່ວນຮ່ວມ ແລະ ຜູ້ເຂົ້າຮ່ວມທັງໝົດ.

ຜູ້ໄດ້ຮັບຜົນກະທົບຈາກໂຄງການ(ຜຜກ) ແລະຜູ້ມີສ່ວນຮ່ວມອື່ນໆສາມາດເຂົ້າເຖິງຂໍ້ມູນຂ່າວສານໄດ້:

ເພື່ອຈະເຮັດໃຫ້ການມີສ່ວນຮ່ວມໃນຂະບວນການ ປຜສ ມີປະສິດທິພາບ ແລະ
ມີຂໍ້ມູນໃນການພິຈາລະນາຮັບຮອງເອົາການ ປຜສ, ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ແລະ
ຜູ້ມີສ່ວນຮ່ວມອື່ນໆຈະໄດ້ເຂົ້າເຖິງຂໍ້ມູນເອກະສານທີ່ກ່ຽວຂ້ອງທັງໝົດ.
ໃນນີ້ລວມເຖິງການເຂົ້າເຖິງຂໍ້ມູນຂ່າວສານທາງດ້ານເຕັກນິກ. ຂໍ້ມູນຂ່າວສານທີ່ໄດ້ຖືກສະໜອງໃນຮູບແບບ
ແລະ ພາສາທີ່ເຂົ້າໃຈງ່າຍ ແລະ ໄດ້ຖືກນຳໃຊ້ໂດຍກຸ່ມເປົ້າໝາຍ, ແລະ
ພ້ອມທັງມີເວລາພຽງພໍສຳລັບການທຳຄວາມເຂົ້າໃຈ, ພິຈາລະນາ ແລະ ການໃຫ້ຄຳຕອບ.

ເຜີຍແຜ່ຂໍ້ມູນຂ່າວສານທີ່ກ່ຽວຂ້ອງທຸກຢ່າງ:

ສຳລັບການ ປຜສ ຂໍ້ມູນຂ່າວສານແມ່ນເປັນເຄື່ອງມືໃນການວາງແຜນ ແລະ ສະໜັບສະໜູນ-ການຕັດສິນໃຈ
ທີ່ມີປະໂຫຍດໂດຍອີງໃສ່ຂໍ້ມູນຂ່າວສານທີ່ກ່ຽວຂ້ອງທັງໝົດ.ຂໍ້ມູນຂ່າວສານຕ່າງໆຈະຕ້ອງ ຕິດພັນ ແລະ
ເຂົ້າເຖິງຜູ້ຖືກກະທົບ ແລະ ຜູ້ມີສ່ວນຮ່ວມ ທັງໝົດ.
ເຊິ່ງກວມເອົາຂໍ້ມູນທາງດ້ານວິທະຍາສາດພ້ອມທັງຂໍ້ມູນທ້ອງຖິ່ນ ແລະ ຄວາມຮູ້ຂອງຊົນເຜົ່າພື້ນເມືອງ
ທີ່ສາມາດເກັບກຳໄດ້ໂດຍຜ່ານການເຂົ້າຮ່ວມຂອງສາທາລະນະຢ່າງແທ້ຈິງ
(ເຊິ່ງເປັນສິ່ງສຳຄັນທີ່ຕ້ອງສົ່ງເສີມຫຼັກການນີ້ແຕ່ເລີ່ມຕົ້ນ). ການກຳນົດຂໍ້ມູນຂ່າວສານທີ່ມີຢູ່ ແລະ
ກ່ຽວຂ້ອງທັງໝົດພົວພັນເຖິງຄວາມສົມດຸນລະຫວ່າງຂໍ້ມູນທີ່ໄດ້ຮັບລ່າສຸດ ແລະ ການຮັບຮູ້ທີ່ແທດເໝາະ ແລະ
ຂໍ້ມູນທີ່ສາມາດເກັບກຳໄດ້ (ແລະ ສາມາດຫາໄດ້ພາຍໃຕ້ຂອບເຂດຂອງບົດສະເໜີການຜັດທະນາສະເພາະ).

ການຕັດສິນໃຈທີ່ເປີດເຜີຍ ແລະມີຫຼັກຖານອ້າງອີງ:

ຂະບວນການ ປຜສ ທີ່ມີປະສິດທິພາບແມ່ນຕ້ອງ ມີທັງ ການກະກຽມ ບົດ ປຜສ ຈາກຜູ້ສະເໜີໂຄງການ(
ແລະ ຫຼື ທີ່ປຶກສາ ປຜສ) ແລະ ການທົບທວນຄືນບົດລາຍງານໂດຍລັກດຖະບານ,
ເພື່ອກຳນົດວ່າໂຄງການຄວນຈະໄດ້ຮັບການດຳເນີນ ຫຼື ບໍ່. ຂະບວນການນີ້ຕ້ອງໄດ້ດຳເນີນຢ່າງໂປ່ງໃສ
ແລະຕາມພື້ນຖານການວິເຄາະຢ່າງສົມບູນແບບ.
ການທົບທວນບົດລາຍງານໂດຍລັດຖະບານຈະຕ້ອງແຍກອອກຈາກວຽກງານກະກຽມ ປຜສ ແລະ

ອາດຈະຕ້ອງເຂົ້າຮ່ວມໃນການທົບທວນທາງດ້ານເຕັກນິກ,
ພ້ອມທັງເຂົ້າຮ່ວມຈາກຂະບວນການມີສ່ວນຮ່ວມຂອງສາທາລະນະ. ການພິຈາລະນາຮັບຮອງຄັ້ງສຸດທ້າຍ.
ເຖິງແມ່ນວ່າຈະຮັບຮອງບົດລາຍງານ ປຜສ ຫຼື ບໍ່ ແລະ
ໂຄງການຕ້ອງດຳເນີນຕາມຫຼັກຖານທີ່ກຳນົດຢູ່ໃນບົດລາຍງານ ປຜສ ແລະ ສາທາລະນະທົ່ວໄປ
ສາມາດຕິດຕາມ ແລະ ສະແດງຄຳຄິດເຫັນເຂົ້າໃນຂະບວນການຕ່າງໆ ແລະ
ເຂົ້າເຖິງການຕັດສິນໃຈທີ່ຖືກຕ້ອງທີ່ສຸດ ແລະ ສົມເຫດສົມຜົນ.

ມີການຕິດຕາມກວດກາ, ການປະຕິບັດຕາມລະບຽບການແລະຂໍ້ບັງຄັບໃຊ້ຢ່າງມີປະສິດຕິພາບ:

ຂະບວນການ ປຜສ ຈະສິ້ນສຸດຢ່າງເປັນທາງການດ້ວຍການຕັດສິນໃຈໃດໜຶ່ງ, ແຕ່ ບົດລາຍງານ ປຜສ ແລະ
ແຜນການຄຸ້ມຄອງຕິດຕາມສິ່ງແວດລ້ອມ (ຜຄຕສ)
ສະບັບຮັບຮອງແມ່ນເປັນເຄື່ອງມືທີ່ສຳຄັນເພື່ອຮັບປະກັນຜົນກະທົບຂອງໂຄງການທີ່ໄດ້ຖືກແກ້ໄຂດ້ວຍວິທີກາ
ນທີ່ໄດ້ກຳນົດໄວ້ຢູ່ໃນບົດລາຍງານທີ່ໄດ້ຮັບຮອງ. ສິ່ງສຳຄັນທີ່ຖືກຕ້ອງ ແລະ ຄົບຖ້ວນໃນລະບົບການ ປຜສ
ແມ່ນການມີສ່ວນຮ່ວມ ຈາກພາກລັດຖະບານ, ແລະ ພາກສ່ວນພາຍນອກອື່ນໆ ເຂົ້າໃນການຕິດຕາມກວດກາ
ການຈັດຕັ້ງປະຕິບັດຂອງໂຄງການ ແລະ ເພື່ອຮັບປະກັນວ່າໂຄງການໄດ້ປະຕິບັດຕາມພັນທະ ແລະ
ໜ້າທີ່ຮັບຜິດຊອບທັງໝົດທີ່ກຳນົດໄວ້ໃນບົດ ປຜສ ແລະ ຜຄຕສ.

ກົນໄກການຕິດຕາມກວດກາ ແລະ
ຜົນຂອງການຄົ້ນພົບທີ່ຮັບຮອງພາຍໃນໂຄງການຕ້ອງນຳມາເຜີຍແຜ່ໃຫ້ແກ່ຜູ້ມີສ່ວນຮ່ວມທັງໝົດເພື່ອສ້າງຄວາ
ມເຊື່ອໝັ້ນໃຫ້ໂຄງການເອງແລະ ການ ປຜສ ໃນອານາຄົດ.

ກົນໄກສຳຄັນສຳລັບການປະເມີນຜົນກະທົບສິ່ງແວດລ້ອມ:

ເພື່ອບັນລຸດເຖິງເປົ້າໝາຍຂອງການພັດທະນາແບບຍືນຍົງ, ບົດ ປຜສ
ຄວນນຳໃຊ້ມາດຕະການໃນການວິເຄາະບັນຫາທີ່ສຳຄັນເຂົ້າໃນຂະບວນການປະເມີນ.
ກົນໄກດັ່ງກ່າວນີ້ຈະມີຜົນຕໍ່ການນຳໃຊ້ຮູບແບບຂອງກົດໝາຍສິ່ງແວດລ້ອມສາກົນໃນປະຈຸ.ໃນຫຼາຍໆກົນໄກແ
ມ່ນລວມຢູ່ໃນການປະກາດໃຊ້ ການພັດທະນາສິ່ງແວດ ລ້ອມ ຣິໂອ ປີ 1992 ຂອງກອງປະຊຸມໂລກ
(ການປະກາດໃຊ້ລະບຽບການຂອງ Rio).

ປະກອບມີ ຫ້າ ກົນໄກພື້ນຖານ ທີ່ສາມາດກຳນົດໄດ້ດັ່ງລຸ່ມນີ້:

- ການເຊື່ອໝັ້ນຕໍ່ວິທີທາງແບບມີສ່ວນຮ່ວມ[18];
- ການນຳໃຊ້ຫຼັກການໃນການປ້ອງກັນ[19;]
- ການນຳໃຊ້ຫຼັກການຂອງຜູ້ມີສ່ວນຮ່ວມໃນແຕ່ລະສະໃໝ[20;]
- ການສະຫງວນໄວ້ເຊິ່ງ ຄວາມຫຼາກຫຼາຍທາງຊີວະພາບ ແລະ ການເຊື່ອມໂຍງຂອງລະບົບນິເວດ
  ຈະຕ້ອງຖືກພິຈາລະນາກ່ອນ [21]; ແລະ

[18] ການປະກາດໃຊ້ລະບຽບການຂອງ Rio ວ່າດ້ວຍການພັດທະນາສິ່ງແວດລ້ອມ, 1992, ຫຼັກການທີ 10.
[19] ການປະກາດໃຊ້ລະບຽບການຂອງ Rio 1992, ຫຼັກການທີ 15.
[20] ການປະກາດໃຊ້ລະບຽບການຂອງ Rio 1992, ຫຼັກການທີ 3.
[21] ການປະກາດໃຊ້ລະບຽບການຂອງ Rio 1992, ຫຼັກການທີ e 4.

- ການປັບປຸງການປະເມີນ, ການກຳນົດລາຄາ ແລະ ສິ່ງຈູງໃຈອື່ນໆ[22]

ການເຊື່ອໝັ້ນຕໍ່ວິທີທາງແບບມີສ່ວນຮ່ວມ:

ຄຸນລັກສະນະພື້ນຖານຂອງ ປຜສ ແມ່ນ ແນ່ໃສ່ການເສີມຂະຫຍາຍໂອກາດການມີສ່ວນຮ່ວມຂອງຜູ້ທີ່ກ່ຽວ
ຂ້ອງທີ່ມີສ່ວນຮ່ວມ. ຜູ້ທີ່ມີສ່ວນຮ່ວມປະກອບມີ ຂະແໜງການລັດຖະບານ,
ອົງການທີ່ບໍ່ຂຶ້ນກັບລັດຖະບານ(NGOs), ອົງການປະຊາສັງຄົມ (CSOs),
ຊຸມຊົນທົ່ວໄປ(ລວມທັງຜົນກະທົບທາງລ້ອມ ແລະ ທາງກົງ), ຊຸມຊົນພື້ນເມືອງ ແລະ ພາກສ່ວນເອກະຊົນ.
ແບບຢ່າງການປະຕິບັດ ປຜສ ທີ່ດີຈະກຳນົດໃຫ້ມີການມີສ່ວນຮ່ວມສະເພາະທີ່ສອດຄ່ອງກັບລະບຽບການແລະ
ມີການຕິດຕາມກວດກາຕາມແຕ່ໄລຍະຂອງການພັດ ທະນາ. ແບບຢ່າງການປະຕິບັດ ປຜສ ທີ່ດີ
ຈະຕ້ອງປະກອບມີຍຸດທະສາດການມີສ່ວນຮ່ວມຂອງແມ່ຍິງ[23] ແລະປະຊາຊົນພື້ນເມືອງ ແລະ
ຊຸມຊົນຂອງເຂົາເຈົ້າ.[24]

ການນຳໃຊ້ຫຼັກການໃນການປ້ອງກັນ:

ເຂດພື້ນທີ່ໃດທີ່ມີໄພຂຸກຄຸກຮ້າຍແຮງ ຫຼືມີການສູນເສຍສິ່ງແວດລ້ອມທີ່ຟື້ນຟູຄືນບໍ່ໄດ້
ທີ່ຂາດຄວາມແນ່ນອນທາງດ້ານວິທະຍາສາດ,
ບໍ່ຄວນທີ່ຈະເຜີດເສີຍຕໍ່ການຫຼີກລ້ຽງແລະປ້ອງກັນຄວາມຊຸດໂຊມຂອງສິ່ງແວດລ້ອມ.
ໃຫ້ມີການນຳໃຊ້ຫຼັກການທີ່ປອດໄພ, ມີພາກສ່ວນລັດຖະບານ ແລະ ເອກະຊົນຮ່ວມກັນໃນການຕັດສິນໃຈ
ທີ່ຈະອີງຕາມການແນະນຳດັ່ງນີ້:

- ມີຄວາມເອົາໃຈໃສ່ໃນການຕີລາຄາເພື່ອຫຼີກລ້ຽງຄວາມເສຍຫາຍທີ່ເກີດຈາກການຈັດຕັ້ງປະຕິບັດ,
  ການສູນເສຍທີ່ຮ້າຍແຮງ ແລະ ທີ່ບໍ່ສາມາດຟື້ນຟູຄືນໄດ້; ແລະ
- ການປະເມີນຕີລາຄາຄວາມສ່ຽງທີ່ສຳຄັນຂອງຫຼາຍໆວິທີການ.[25]

ການນຳໃຊ້ຫຼັກການຂອງການມີສ່ວນຮ່ວມໃນແຕ່ລະຍຸກສະໄໝ:

ຫຼັກການຂອງຜູ້ມີສ່ວນຮ່ວມໃນແຕ່ລະຍຸກສະໄໝກຳນົດໄວ້ວ່າ ຈະຕ້ອງຮັບຮອງວ່າ
ມີເງື່ອນໄຂທາງສຸກຂະພາບ, ມີຄວາມຫຼາກຫຼາຍ ແລະ ຜະລິດຕະພັນ ຂອງສິ່ງແວດລ້ອມ
ທີ່ຈະໄດ້ຮັບການບຶອລະບັດຮັກສາ ຫຼື ຖືກປັບປຸງ ເພື່ອຜົນປະໂຫຍດຂອງຍຸກສະໄໝໃນອານາຄົດຕໍ່ໄປ.
ສິ່ງຕ່າງໆເຫຼົ່ານັ້ນ ໄດ້ຮຽກຮ້ອງໃຫ້ມີການພິຈາລະນາຜົນກະທົບຂອງກິດຈະການ ຫຼືໂຄງການທີ່ຖືກສະເໜີ
ທີ່ຈະມີຜົນກະທົບໃນໄລຍະຍາວ. ແລະ ສິ່ງເຫຼົ່ານັ້ນຍັງຮຽກຮ້ອງໃຫ້ມີການພິຈາລະນາ ວິທີການປິດໂຄງການ
ແລະ ການເກັບມ້ຽນອານາໄມພື້ນທີ່ໂຄງການໃຫ້ເປັນມິດຕໍ່ສິ່ງແວດລ້ອມ.

---

[22] ການປະກາດໃຊ້ລະບຽບການຂອງ Rio 1992, ຫຼັກການທີ 8, ຫຼັກການທີ 12, ຫຼັກການທີ 13, ຫຼັກການທີ 16.

[23] ການປະກາດໃຊ້ລະບຽບການຂອງ Rio 1992, ຫຼັກການທີ 20.

[24] ການປະກາດໃຊ້ລະບຽບການຂອງ Rio 1992, ຫຼັກການທີ 22.

[25] ຂໍ້ຕົກລົງຂອງລັດຖະບານສາກົນສິ່ງແວດ້ອມດ ເຊັນສັນຍາໂດຍລັດຖະບານ ອ໋ອດລເຕເລຍ ແລະ ສະຫະລັດ ແລະ
ພາກພື້ນແລະລັດຖະບານທ້ອງຖິ່ນ, 1 ພຶດສະພາ 1992, www.environment.gov.au/about-us/esd/publications/intergovernmental-agreement.

ການສະຫງວນໄວ້ເຊິ່ງ ຄວາມຫຼາກຫຼາຍທາງຊີວະນາໆພັນ ແລະ ການເຊື່ອມໂຍງຂອງລະບົບນິເວດ ຈະຕ້ອງຖືກພິຈາລະນາກ່ອນ:

ໃນຈຸດເລີ້ມຕົ້ນສຳລັບການປະເມີນຜົນຂອງການປົດສະເໜີໂຄງການແມ່ນການສະຫງວນໄວ້ເຊິ່ງຄວາມຫຼາກຫຼາຍທາງຊີວະພາບ ແລະ ຄວາມສົມດຸນຂອງນິເວດວິທະຍາ
ທີ່ຄວນຈະຖືກພິຈາລະນາເພື່ອຮັກສາໄວ້ເປັນເງື່ອນໄຂພື້ນຖານທາງສິ່ງແວດລ້ອມ.[26]
ເຊິ່ງມັນກໍ່ບໍ່ແມ່ນວ່າຈະບໍ່ມີໂຄງການໃດເລີຍທີ່ໄດ້ຖືກຮັບຮອງໂດຍທີ່ບໍ່ມີຜົນກະທົບຕໍ່ສິ່ງແວດລ້ອມ,
ພຽງແຕ່ຜົນກະທົບ ແລະ ຜົນເສຍຫາຍດັ່ງກ່າວນັ້ນຕ້ອງຖືກຍອມຮັບໂດຍໂຄງການ.
ທາງໂຄງການເອງຈະຕ້ອງປະເມີນຫຼາຍໆທາງເລືອກ ແລະ
ສະເໜີວິທີທາງຫຼີກລ້ຽງຫຼືບັນເທົາຜົນກະທົບທີ່ອາດຈະເກີດຂຶ້ນ. ແຕ່ຖ້າຫາກຫຼີກລ້ຽງຜົນກະທົບບໍ່ໄດ້
ກໍ່ຕ້ອງກຳນົດມາດຕະການການທົດແທນຄືນຕໍ່ການສູນເສຍດັ່ງກ່າວ.

ການປັບປຸງການປະເມີນ, ການກຳນົດລາຄາ ແລະສິ່ງຈູງໃຈອື່ນໆ:

ການນຳໃຊ້ເຄື່ອງມືທາງເສດຖະກິດແມ່ນມີຜົນສະທ້ອນສຳຄັນຕໍ່ປະສິດທິພາບຂອງການ ປຜສ.
ປັດໄຈສິ່ງແວດລ້ອມຄວນລວມຢູ່ໃນການຕີລາຄາຊັບສິນ ແລະ ການນຳໃຊ້ບໍລິການທີ່ລວມທັງ
ການນຳໃຊ້ລະບົບນິເວດ. ສິ່ງເຫຼົ່ານີ້ມີຄວາມສຳຄັນສະເພາະຕໍ່ຄວາມແນ່ນອນຂອງການປະເມີນລາຄາ ແລະ
ຜົນປະໂຫຍດຂອງໂຄງການ. ອີກຢ່າງໜຶ່ງ, ຂະບວນການ ປຜສ ຄວນຮັບຮອງເອົາຫຼັກການວ່າດ້ວຍ
“ການແທນຄືນຈາກຜົນກະ ທົບຈາກມົນລະພິດ.”[27] ຫຼັກການນີ້ໄດ້ຖືກກຳນົດມາເພື່ອໃຫ້ຮັບຮູ້ວ່າ
ຜູ້ໃດເຮັດໃຫ້ເກີດມົນລະພິດ ແລະ ສິ່ງເສດເຫຼືອຜູ້ນັ້ນກໍ່ຕ້ອງຮັບຜິດຊອບໃນການທົດແທນມູນຄ່າເສຍຫາຍ
ແລະ ທີ່ຖືກທຳລາຍ, ລະເລີຍ ຫຼືຖືກຕັດອອກ.

ອີກໜຶ່ງໃນມາດຕະການທາງເສດຖະກິດແມ່ນໃຫ້ຜູ້ໃຊ້ສິນຄ້າ ແລະ
ການບໍລິການຄວນຈະຕ້ອງຈ່າຍຕາມມູນຄ່າຮອບວຽນການດຳລົງຊີວິດຕາມລາຄາຂອງສິນຄ້າ ແລະ
ການບໍລິການທີ່ດີ, ເຊັ່ນດຽວກັບການນຳໃຊ້ຊັບພະຍາ ກອນທຳມະຊາດ ແລະ ຊັບສິນ ແລະ
ການຖິ້ມສິ່ງເສດເຫຼືອ.[28]

ຫຼັກການທົ່ວໄປຂອງການມີສ່ວນຮ່ວມຂອງສາທາລະນະໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ(ປຜສ)

ການມີສ່ວນຮ່ວມ ກໍ່ຄືກັບການເປັນສ່ວນໜຶ່ງຂອງຂະບວນການ ປຜສ. ໃນລະດັບສາກົນ,
ໄດ້ມີການກຳນົດສະເພາະກັບການມີສ່ວນຮ່ວມຂອງສາທາລະນະໃນຂະແໜງການ ຣິໄອ(Rio) ປີ 1992 ແລະ
ໄດ້ຮັບການຍອມຮັບວ່າເປັນພາກສ່ວນສຳຄັນຂອງການ ປຜສ ຕັ້ງແຕ່ໄດ້ມີການລິເລີ່ມການ ປຜສ ໃນຊຸມປີ
1970.

---

[26] ເບິ່ງຕົວຢ່າງຂອງນະໂຍບາຍສິ່ງແວດລ້ອມແຫ່ງຊາດຂອງ ປະເທດມຽນມ້າ ປີ 1994
ທີ່ເຮັດໃຫ້ການປົກປັກຮັກສາສິ່ງແວດລ້ອມເປັນຈຸດປະສົງຫຼັກໃນການຄົ້ນຄ້ວາການພັດທະນາ.

[27] ການປະກາດໃຊ້ລະບຽບການຂອງ Rio 1992, ຫຼັກການທີ 16.

[28] ການປະກາດໃຊ້ລະບຽບການຂອງ Rio 1992, ຫຼັກການທີ 8, ຫຼັກການທີ13, ຫຼັກການທີ 16.

10 ຫຼັກການຂອງການປະກາດໃຊ້ລະບຽບການຂອງ ຣິໂອ Rio:
ບັນຫາຕ່າງໆທາງດ້ານສິ່ງແວດລ້ອມແມ່ນຕ້ອງໄດ້ຮັບການຈັດການໃຫ້ດີທີ່ສຸດໂດຍການມີສ່ວນຮ່ວມຂອງພົ
ນ ລະເມືອງທັງໝົດ, ໃນລະດັບຊາດ, ແຕ່ລະບຸກຄົນຕ້ອງໄດ້ເຂົ້າເຖິງຂໍ້ມູນຂ່າວສານທີ່ກ່ຽວຂ້ອງກັບສິ່ງແວດ
ລ້ອມຕາມຄວາມເໝາະສົມທີ່ໄດ້ຈັດຕຽມໂດຍອົງການຈັດຕັ້ງຂອງລັດ,
ເຊິ່ງຂໍ້ມູນດັ່ງກ່າວປະກອບດ້ວຍຂໍ້ມູນຂ່າວສານທີ່ປະກອບດ້ວຍ ວັດຖຸດິບອັນຕະລາຍ ແລະ
ກິດຈະກຳຕ່າງໆຢູ່ໃນຊຸມຊົນຂອງເຂົາເຈົ້າ ແລະ ມີໂອກາດເຂົ້າຮ່ວມໃນຂະບວນການ ການຕັດສິນໃຈ.
ພາກລັດຕ້ອງອຳນວຍຄວາມສະດວກ ແລະສົ່ງເສີມການສ້າງຈິດສຳນຶກໃຫ້ສາທາລະນະ ແລະ
ການມີສ່ວນຮ່ວມໂດຍການເຜີຍແຜ່ຂໍ້ມູນຂ່າວສານຢ່າງກວ້າງຂວາງ. ການເຂົ້າເຖິງຂະບວນການຢຸດຕິທຳ
ແລະ ການບໍລິຫານທີ່ມີປະສິດທິຜົນ, ລວມທັງການແກ້ໄຂແລະການປົວແປງ, ຕ້ອງໄດ້ຮັບການສະໜອງ.[29]

ບາງຜົນປະໂຫຍດກໍ່ເຮັດໃຫ້ພົບກັບຄວາມຫຍຸ້ງຍາກໃນການກຳນົດ, ເຊັ່ນ: ການຕັດສິນໃຈທີ່ຖືກຕ້ອງ ຫຼື
ການສ້າງຄວາມເຊື່ອໝັ້ນຕໍ່ອົງການຈັດຕັ້ງຂອງລັດຖະບານລະດັບສູງຂຶ້ນ. ຜົນປະໂຫຍດອີກດ້ານອື່ນໆ ເຊັ່ນ:
ການອອກແບບໂຄງການທີ່ດີທີ່ສຸດ ຫຼື ການຄຸ້ມຄອງສິ່ງແວດລ້ອມທີ່ມີປະສິດທິຜົນ ຫຼື ການຮ້ອງທຸກທີ່ມີປະສິດ
ທິພາບອາດຈະມີຄວາມຫຍຸ້ງຍາກໃນການວັດແທກແຕ່ວ່າສາມາດຕອບສະໜອງຜົນປະໂຫຍດຢ່າງແທ້ຈິງຕໍ່ຊຸມ
ຊົນທີ່ໄດ້ຮັບຜົນກະທົບຈາກການພັດທະນາ.

ແລະເນື່ອງຈາກການມີສ່ວນຮ່ວມຂອງສາທາລະນະທີ່ອອກນອກຂອບເຂດຂອງວິທີການ ແລະ ການປະຕິບັດ,
ມີຄວາມຫຍຸ້ງຍາກຕໍ່ການຄັດເລືອກ ແລະ ກຳນົດວິທີການທີ່ມີປະສິດທິພາບ.
ສະມາຄົມສາກົນສຳລັບການມີສ່ວນຮ່ວມຂອງສາທາລະນະ(IAP2)ມີການປັບປຸງຂອບເຂດການມີສ່ວນຮ່ວມຂ
ອງສາທາລະນະ. ທີມງານນຳໃຊ້ຂອບເຂດ ນີ້ເຂົ້າໃນບົດແນະນຳ.
ການມີສ່ວນຮ່ວມຂອງສາທາລະນະທີ່ດີຈະຂຶ້ນກັບວ່າຈະມີການຈັດການບໍລິຫານບັນ ດາຂັ້ນຕອນແນວໃດ.

ມີຫຼາຍກໍລະນີທີ່ຜູ້ສະເໜີໂຄງການ ແລະ ທີ່ປຶກສາ ປຜສ ຄວນທີ່ຈະມີການພັດທະນາຕື່ມ
ໃນການປຶກສາຫາລືກັບຜູ້ທີ່ຖືກກະທົບ ແລະ ຜູ້ທີ່ສົນໃຈມີສ່ວນຮ່ວມ,
ແຜນການມີສ່ວນຮ່ວມຂອງສາທາລະນະ. ແຜນດັ່ງກ່າວນີ້ແມ່ນແຜນການປະຕິບັດຂອງຜູ້ທີ່ມີສ່ວນຮ່ວມ,
ເປັນແຜນອານາຄົດ ຫຼື ເປັນບົດແນະນຳທີ່ກ່ຽວຂ້ອງ ແລະ
ເປັນການປຶກສາຫາລືທີ່ຈະເກີດຂຶ້ນໃນຊ້ວງໄລຍະຂະບວນການຂອງ ປຜສ.
ແຜນການມີສ່ວນຮ່ວມຂອງສາທາລະນະທີ່ແທດເໝາະກັບໂຄງການ ແລະ ສິ່ງແວດລ້ອມທ້ອງຖິ່ນ ແລະ
ມີການຈັດຕັ້ງປະຕິບັດສະເພາະຂອງໂຄງການ ນັ້ນໆ.

ຈະຕ້ອງເຂົ້າໃຈສະເໝີວ່າການປຶກສາຫາລືບໍ່ພຽງແຕ່ເປັນການໃຫ້ມີໜ້າເຂົ້າຮ່ວມ, ແຕ່ເປັນໜຶ່ງໃນຂະບວນການ
ປຜສ. ການແລກປ່ຽນຂໍ້ມູນຂ່າວສານແມ່ນມີຄວາມສຳຄັນ ແລະ
ຕອບສະໜອງບັນຫາທີ່ເກີດຂຶ້ນຈາກຜູ້ທີ່ມີສ່ວນຮ່ວມ

[29] ການປະກາດໃຊ້ລະບຽບການຂອງ Rio, ຫຼັກການທີ10.

ລະດັບການເພີ້ມຂຶ້ນຂອງການມີສ່ວນຮ່ວມຂອງມວນຊົນ

	ການແຈ້ງການ	ການປຶກສາຫາລື	ການມີສ່ວນຮ່ວມ	ການຮ່ວມງານກັນ	ການໃຫ້ສິດອຳນາດ
ເປົ້າໝາຍການມີສ່ວນຮ່ວມຂອງສາທາລະນະ	ແຈ້ງໃຫ້ຊຸມຊົນກ່ຽວກັບຄວາມສົມດຸນຂອງຈຸດປະສົງ ແລະ ຂໍ້ມູນຂ່າວສານເພື່ອຊ່ວຍໃຫ້ເຂົາເຈົ້າສາມາດເຂົ້າໃຈກ່ຽວກັບບັນຫາ, ທາງເລືອກ, ໂອກາດ ແລະ/ຫຼື ການແກ້ໄຂບັນຫາ	ເພື່ອໃຫ້ໄດ້ຮັບຄຳຄິດເຫັນກ່ຽວກັບການວິເຄາະທາງເລືອກຕ່າງໆ ແລະ/ ຫຼື ການຕັດສິນໃຈ	ດຳເນີນການມີສ່ວນຮ່ວມກັບສາທາລະນະໂດຍກົງໃນຕະຫຼອດຂະບວນການເພື່ອຮັບປະກັນວ່າຂໍ້ຂ້ອງໃຈແລະຄວາມມຸ້ງມາດປາດຖະໜາຂອງສາທາລະນະແມ່ນໄດ້ຮັບການພິຈາລະນາແລະມີຄວາມເຂົ້າໃຈທີ່ຖືກຕ້ອງ	ໃຫ້ຄວາມຮ່ວມມືກັບສາທາລະນະໃນແຕ່ລະດ້ານຂອງການຕັດສິນໃຈລວມທັງການພັດທະນາທາງເລືອກຕ່າງໆແລະການກຳນົດການແກ້ໄຂບັນຫາທີ່ໄດ້ລະບຸໄວ້.	ການເຈລະຈາການຕັດສິນໃຈຂັ້ນສຸດທ້າຍລະຫວ່າງສາທາລະນະແລະຜູ້ມີສິດໃນການພິຈາລະນາຮັບຮອງ.
ການໃຫ້ຄຳສັນຍາຕໍ່ສາທາລະນະ ໂດຍຜູ້ສະ ເໜີໂຄງການ ແລະອົງການຈັດຕັ້ງຕ່າງໆທີ່ກ່ຽວຂ້ອງ	ພວກເຮົາຈະແຈ້ງໃຫ້ຮັບຊາບທົ່ວເຖິງ	ພວກເຮົາຈະແຈ້ງໃຫ້ທ່ານຮັບຊາບ, ຮັບຟັງ ແລະ ຮັບຮູ້ ຄວາມຂ້ອງໃຈ ແລະຄວາມປາດຖະໜາ ແລະ ອະທິບາຍຊີ້ແຈງກ່ຽວກັບຄຳຄິດເຫັນສາທາລະນະໄດ້ມີອິດທິພົນຕໍ່ການຕັດສິນໃຈແນວໃດ	ພວກເຮົາຈະເຮັດວຽກຮ່ວມກັບພວກທ່ານເພື່ອຮັບປະກັນວ່າຄວາມຂ້ອງໃຈແລະຄວາມປາດຖະໜາຂອງພວກທ່ານຈະສະທ້ອນໃຫ້ເຫັນໂດຍກົງໃນການສ້າງທາງເລືອກແລະອະທິບາຍຊີ້ແຈງກ່ຽວກັບຄຳຄິດເຫັນສາທາລະນະໄດ້ມີອິດຕິພົນຕໍ່ການຕັດສິນໃຈແນວໃດ	ພວກເຮົາຈະພິຈາລະນາຄຳຄິດເຫັນຂອງພວກທ່ານໃນການກຳນົດການແກ້ໄຂບັນຫາ ແລະ ນຳເອົາຄຳຄິດເຫັນຂອງພວກທ່ານເຈົ້າໃນການຕັດສິນໃຈໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້.	ພວກເຮົາຈະຈັດຕັ້ງປະຕິບັດຕາມທີ່ໄດ້ຕົກລົງກັນ
ຕົວຢ່າງດ້ານເຕັກນິກ	• ແຜ່ນຂ່າວສານ • ເວບໄຊສ • ໄປສເຕີແລະປ້າຍ • ແຈ້ງການທາງໜັງສືພິມ • ປະກາດທາງວິທະຍຸ	• ຄຳເຫັນຂອງສາທາລະນະ • ກຸ່ມເປົ້າໝາຍ • ການສຳຫຼວດ • ກອງປະຊຸມສາທາລະນະ	• ກອງປະຊຸມຄົ້ນຄວ້າ	• ສ້າງຄວາມເຫັນດີເຫັນພ້ອມ • ມີສ່ວນຮ່ວມໃນການຕັດສິນໃຈ	• ບັດລົງຄະແນນ • ການຕັດສິນໃຈທີ່ໄດ້ຮັບມອບໝາຍ • ການເຈລະຈາ

ການມີສ່ວນຮ່ວມຂອງສາທາລະນະແມ່ນໜຶ່ງອົງປະກອບຂອງຂະບວນການ ປຜສ ເລີ້ມມາຕັ້ງແຕ່ ກົດໝາຍສິ່ງແວດລ້ອມແຫ່ງຊາດຂອງສະຫະລັດອາເມຣິກາ(NEPA), ທີ່ໄດ້ມີການປະກາດໃຊ້ EIA ຢ່າງເປັນທາງການສະຫະລັດອາເມລິກາ ໃນປີ 1969. ເຊັ່ນດຽວກັບສະມາຄົມສາກົນທີ່ປັບປຸງ ແລະ ຮັບຮອງເອົາ ປຜສ, ການມີສ່ວນຮ່ວມຂອງສາທາລະນະໄດ້ສືບຕໍ່ຄຸນລັກສະນະທີ່ສຳຄັນຂອງຂະບວນການ. ເຊິ່ງໄດ້ຊີ້ແຈງໃນຫຼັກການທີ 10 ຂອງການປະກາດໃຊ້ລະບຽບການຂອງ Rio ໃນປີ 1992, ທີ່ໄດ້ກ່າວວ່າ: “ ບັນຫາສິ່ງແວດລ້ອມຈະຖືກແກ້ໄຂໄປພ້ອມກັບການມີສ່ວນຮ່ວມ ຂອງທຸກພາກສ່ວນທຸກລະດັບ ທີ່ກ່ຽວຂ້ອງ.” ໃນປີ 1998 ຄະນະກຳມະການດ້ານເສດຖະກິດສະຫະປະຊາຊາດເອີລົບ (UNECE) ໄດ້ເຈລະຈາວ່າດ້ວຍສົນທິສັນຍາຂອງການເຂົ້າເຖິງຂໍ້ມູນຂ່າວສານ, ການມີສ່ວນຮ່ວມຂອງສາທາລະນະຕໍ່ການຕັດສິນໃຈ ແລະ ເຂົ້າເຖິງຄວາມຍຸດຕິທຳຕໍ່ບັນຫາສິ່ງແວດລ້ອມ (ສົນທິສັນຍາ Aarhus). ສົນທິສັນຍາ Aarhus ໄດ້ນຳເອົາການມີສ່ວນຮ່ວມຂອງສາທາລະນະ ປັບປຸງເຂົ້າໃນການຕັດສິນໃຈ ແລະ ພັດທະນາຄຸນນະພາບ ແລະ ການດຳເນີນການຕັດສິນໃຈ.

ສົນທິສັນຍາ Aarhus ປະກອບມີບາງຈຳນວນຂອງຄຳນິຍາມດັ່ງນີ້:

> “**ສາທາລະນະ**” ໝາຍເຖິງ ໜຶ່ງ ຫຼື ຫຼາຍທຳມະຊາດ ຫຼືຜູ້ຮັກສາລະບຽບການ ແລະ ອົງຕາມລະບຽບກົດໝາຍແຫ່ງຊາດ ຫຼື ການປະຕິບັດ, ບັນດາສະມາຄົມ, ອົງການຈັດຕັ້ງ ຫຼື ກຸ່ມຄົນ;
>
> “ຄວາມກັງວົນຂອງ**ສາທາລະນະ**”ໝາຍເຖິງຜົນກະທົບສາທາລະນະຫຼືແມ່ນຄາດຄະເນວ່າຈະມີຜົນກະທົບທີ່ເກີດຂຶ້ນ ຫຼືມີຄວາມສົນໃຈໃນ, ການຕັດສິນໃຈທາງສິ່ງແວດລ້ອມ; ສຳລັບຈຸດປະສົງຂອງຄຳນິຍາມ, ອົງການທີ່ບໍ່ແມ່ນໜ່ວຍງານຂອລັດຖະບານມີການສົ່ງເສີມ ແລະ ປົກປັກຮັກສາສິ່ງແວດລ້ອມ ແລະ ປົກສາຫາລືໃນທຸກການຮຽກຮ້ອງຕ້ອງການພາຍໃຕ້ກົດໝາຍແຫ່ງຊາດທີ່ຈະຕ້ອງໃຫ້ມີເຫດຜົນທີ່ໜ້າສົນໃຈ .

ເຖິງວ່າ ມາດຕາທີ 6
ມີການກຳນົດລາຍລະອຽດສຳລັບການມີສ່ວນຮ່ວມເຂົ້າໃນການຕັດສິນໃຈຂອງແຕ່ລະກິດຈະການ, ທີ່ຖືວ່າຍັງບໍ່ຊັດເຈນພຽງພໍຕໍ່ລັດຖະທຳມະນູນຂອງການມີສ່ວນຮ່ວມຂອງສາທາລະນະ.
ອົງປະກອບທີ່ສຳຄັນໃນມາດຕາທີ 6 ມີດັ່ງນີ້:

- ການປະກາດແຕ່ງຕັ້ງກ່ອນ;
- ມີຄວາມພ້ອມ ແລະ ພຽງພໍ;
- ປະຕິບັດຕາມເວລາທີ່ກຳນົດ;
- ມີປະສິດທິພາບ;
- ພື້ນຖານຂອງບົດສະເໜີ;
- ການາກຳນົດການຕັດສິນໃຈ;
- ຂັ້ນຕອນ ທາງສາທາລະນະສຳລັບທີ່ມີຄຳຄິດເຫັນ;
- ກຳນົດເວລາຂອງໜ້າວຽກໃຫ້ພຽງພໍຕໍ່ຄຳແນະນຳ; ແລະ
- ບົດສະເໜີ ປຜລ ທີ່ລວມທັງຂັ້ນຕອນຂອງ ປຜສ ແລະ ປສ ຂ້າມຊາຍແດນ

ຄວາມສຳຄັນຂອງການມີສ່ວນຮ່ວມຂອງສາທາລະນະ

ຈາກຜົນການທົບທວນການມີສ່ວນຮ່ວມຂອງສາທາລະນະ ໃນການ ປຜສ
ໄດ້ສະແດງໃຫ້ເຫັນວ່າສ່ວນຫຼາຍແມ່ນຍັງບໍ່ຈະແຈ້ງ ຕໍ່ຄວາມໝາຍຂອງການມີສ່ວນຮ່ວມຂອງສາທາລະນະ
ຫຼືການປຶກສາຫາລືຊຸມຊົນ. ທີ່ບໍ່ພຽງແຕ່ບໍ່ມີຄວາມໝາຍທີ່ຈະແຈ້ງໃນ ຄຳວ່າ "ສາທາລະນະ" ຫຼື "ຊຸມຊົນ".
ເຊິ່ງໄດ້ມີການບັນທຶກໄວ້ເຖິງການບໍ່ເຫັນດີຕໍ່ຈຸດປະສົງສະເພາະຂອງການມີສ່ວນຮ່ວມໃນ ປຜສ.[30]
ເຊິ່ງບໍ່ພຽງແຕ່ກ່ຽວຂ້ອງກັບ ຂໍ້ຂັດແຍ່ງທາງດ້ານວິຊາການແຕ່ "ແມ່ນຜົນສະທ້ອນໃນການປະຕິບັດ ປຜສ."[31]

ນອກນັ້ນຍັງມີ " ການພິຈາລະນາຂໍ້ຂັດແຍ່ງ" ທີ່ເປັນເປົ້າໝາຍຂອງ ການມີສ່ວນຮ່ວມຂອງສາທາລະນະ.[32]
ທ່ານ ຄລັກເກີ ແລະ ຜູ້ອື່ນໆ, ໄດ້ກຳນົດ ເກົ້າ ຈຸດປະສົງຫຼັກສຳລັບການມີສ່ວນຮ່ວມຂອງສາທາລະນະ:

- ການຕັດສິນໃຈທີ່ທັນເວລາ;
- ເຂົ້າເຖິງການປັບປຸງຄວາມອາດສາມາດ;
- ການສຶກສາທາງສັງຄົມ;
- ການມອບໝາຍໜ້າວຽກ ແລະ ຊຸກຍູ້ຜູ້ທີ່ດ້ອຍໂອກາດທັງສ່ວນຕົວ ແລະ ເປັນກຸ່ມ;
- ປະສານສົມທົບຂໍ້ມູນ ແລະ ການຮັບຮູ້ຂອງທ້ອງຖິ່ນ.;
- ການປະສົມປະສານການທົດລອງ ແລະ ຈາກຄວາມຮູ້ພື້ນຖານ;
- ການທົດສອບຄວາມຖືກຕ້ອງຂອງຂໍ້ມູນ ແລະ ຈາກແຫຼ່ງຂໍ້ມູນອື່ນ.;
- ການປະຕິບັດທີ່ຍຸຕິທຳໃນການຕັດສິນໃຈ; ແລະ
- ການແກ້ໄຂບັນຫາຂໍ້ຂັດແຍ່ງ.

ອີກຢ່າງໜຶ່ງ, ມີຄວາມເຂົ້າໃຈທີ່ບໍ່ຊັດເຈນ ຫຼືເຫັນດີ ວ່າຄວນຈະແມ່ນໃຜ ແລະ
ພາກສ່ວນໃດແດ່ທີ່ຈະຕ້ອງເຂົ້າຮ່ວມ. ຈະແມ່ນທຸກຄົນທີ່ສົນໃຈໃນໂຄງການ ຫຼືຜົນໄດ້ຮັບ,
ຫຼືພຽງແຕ່ມີຄວາມສົນໃຈ? ວິທີການທີ່ສົມບູນຈະນຳມາເຊິ່ງຄວາມຖືກຕ້ອງ
ແຕ່ອາດຈະມີຜົນກະທົບຕໍ່ຊັບພະຍາກອນ ແລະ ຈຳກັດຄວາມອາດສາມາດ
ທີ່ອາດຈະເກີດເປັນວິທີການໃນລະບົບ ປຜສ?[33]

ໃນຫຼາຍໆປະເທດ, ລວມມີ ປະເທດ ກອດສຕາ ຣິກາ ແລະ ນິໂກລາກົວ,
ທີ່ບໍ່ສຳເລັດໃນການຕອບສະໜອງຄຳຄິດເຫັນຂອງສາທາລະນະ ແລະ
ໄດ້ຮັບການສະເໜີຈາກສາທາລະນະທີ່ເຮັດໃຫ້ປະຊາຊົນ ຕ້ອງ "
ຍົກເວັ້ນການມີສ່ວນຮ່ວມທີ່ເປັນທາງການໃນຂະບວນການ ປຜສ ແລະ
ນຳໃຊ້ຮູບແບບການມີສ່ວນຮ່ວມທີ່ບໍ່ເປັນທາງການແທນ (ເຊັ່ນ ການເດີນປະທ້ວງ, ການປະຕິເສດຂໍ້ສະເໜີ
ແລະ ອື່ນໆ)."[34]

[30] ຄລັກເກີ, ແລະອື່ນໆ, 2013, ໜ້າທີ.104.
[31] ຄລັກເກີ, ແລະອື່ນໆ, 2013, ໜ້າທີ.106.
[32] ຄລັກເກີ, ແລະອື່ນໆ, 2013, ໜ້າທີ.106.
[33] ຄລັກເກີ, ແລະອື່ນໆ, 2013, ໜ້າທີ.109.
[34] ຄລັກເກີ, ແລະອື່ນໆ, 2013, ໜ້າທີ.109.

ເຊີລີ ວໍສແມນ ອົງການປົກປັກຮັກສາສິ່ງແວດລ້ອມຂອງ ສະຫະລັດ ອາເມລິກາ (USEPA) ບັນທຶກວ່າ “ ຄວາມສຳຄັນຂອງການມີສ່ວນຮ່ວມຮຽກຮ້ອງຫຼາຍກວ່າການປະຊຸມສາທາລະນະ ຫຼືການຮັບຟັງ ຫຼື ການເກັບກຳຄຳແນະນຳທາງສາທາລະນະ.”[35] ໃນສະຫະລັດ ອາເມລິກາ ມີຫຼາຍການຈັດຕັ້ງ ແລະ ພິຈາລະນາບັນຫາທີ່ເກີດຂຶ້ນໂດຍຕັ້ງໃຈ.[36]
ໃນລະດັບສູງສຸດຂອງການມີສ່ວນຮ່ວມແມ່ນຈະອານຸຍາດໃຫ້ສາທາລະນະມີສ່ວນຮ່ວມໃນການຕັດສິນໃຈໃນທ າງລະບຽບກົດໝາຍທີ່ສຳຄັນ.
ລາວຈະກຳນົດບາງເຫດຜົນພື້ນຖານທີ່ຖືກບັງໄວ້ໃນຮູບແບບການມີສ່ວນຮ່ວມສາທາລະນະໃນບົດ ປຜສ :

- ຂໍ້ມູນທີ່ກ່ຽວຂ້ອງ;
- ການຕັດສິນທີ່ດີກວ່າ;
- ສ້າງຄວາມເຂົ້າໃຈແລະຍຸຕິທຳ;
- ມີໝາກຜົນໃນການແກ້ໄຂບັນຫາ;
- ບົດບາດໜ້າທີ່ທີ່ມີຜົນດີຕໍ່ການຕິດຕາມວຽກງານ;
- ຫຼຸດຜ່ອນງົບປະມານລາຄາ ແລະ ຄວາມຫຼ້າຊ້າຈາກການແກ້ໄຂບັນຫາຂໍ້ຂັດແຍ່ງ; ແລະ
- ສິ່ງອຳນວຍຄວາມສະດວກໃນການປະຕິບັດວຽກງານ.

ມີ ເກົ້າ ອົງປະກອບ ທີ່ກຳນົດພາລະໜ້າທີ່ຂອງການມີສ່ວນຮ່ວມໃນຂະບວນການ ປຜສ:

- ຮຽກຮ້ອງໃຫ້ມີຄວາມເຂົ້າໃຈເຖິງການມີສ່ວນຮ່ວມສາທາລະນະຂອງ ປຜສ;
- ການປະສົມປະສານຫຼັກການການມີສ່ວນຮ່ວມສາທາລະນະຂອງ ປຜສ ;
- ກຳນົດ ສາທາລະນະ ແລະ ຜູ້ທີ່ມີສ່ວນຮ່ວມ;
- ການນິດລະບຽບການຕັດສິນໃຈ ຂອງ ຜູ້ມີສ່ວນຮ່ວມ/ສາທາລະນະ;
- ມີຄວາມລະມັດລະວັງໃນການນຳໃຊ້ເຄື່ອງມືຂອງການມີສ່ວນຮ່ວມສາທາລະນະ;
- ຕອບຂໍ້ສົນໃຈ: ຫຼີກລ້ຽງ/ຫຼຸດຜ່ອນ/ທົດແທນ;
- ປະຕິບັດການແກ້ໄຂບັນຫາຂໍ້ຂັດແຍ່ງ;
- ມີເອກະສານທີ່ໂປ່ງໃສ; ແລະ
- ອະທິບາຍການປະຕິບັດໃນຂໍ້ກຳນົດຂອງຕົວຊີ້ວັດຄວາມສຳເລັດ.[37]

ອົງການປົກປັກຮັກສາສິ່ງແວດລ້ອມຂອງ ສະຫະລັດ ອາເມລິກ (USEPA) ໄດ້ກຳນົດ ຫ້າ ບົດຮຽນທີ່ສອດ ຄ່ອງເພື່ອໃຫ້ບັນລຸຜົນສຳເລັດໃນການມີສ່ວນຮ່ວມທາງສາທາລະນະຂອງການ ປຜສ:

- ປັບປຸງຂະບວນການເພື່ອແທດເໝາະໃນສະຖານະການທີ່ຈຳເປັນ;
- ເຂົ້າເຖິງແລະເຂົ້າໃຈເຖິງຜູ້ຮັບຟັງ;
- ລິເລີ່ມຂະບວນການຂອງ ປຜສ;

[35] ວໍເສີແມນ (2012), ເຊີລີ ວໍເສີແມນ, USEPA, ນຳໃຊ້ການມີສ່ວນຮ່ວມມວນຊົນເຂົ້າໃນ ການ ປຜສ ໃນປະເທດ ຈັກກະຕ້າ, ອິນໂດເນເຊຍ, 10-11ກໍລະກົດ 2012.
ວໍເສີແມນ (2014), ເຊີລີ ວໍເສີແມນ, USEPA, ອຳນວຍການຊ່ວຍການວິເຄາະນະໂຍບາຍ, ກົດລະບຽບນະໂຍບາຍສິ່ງແວດລ້ອມແຫ່ງຊາດ (NEPA) ລະບຽບການ,ບົດແນະນຳ ແລະ ປະສົບການ, ພະຈິກ 19, 2014, epa.connectsolutions.com/p6qgkt3cfqh.
[36] ບົດແນະນຳປະຊາຊົນຂອງ NEPA, USEPA, 2007, https://ceq.doe.gov/nepa/Citizens_Guide_Dec07.pdf.
[37] ວໍເສີແມນ, 2014.

- ພິຈາລະນາຂະບວນການທີ່ກ່ຽວຂ້ອງ ແລະ ການປຶກສາຫາລືສາທາລະນະ, ໂດຍໃຫ້ປະຕິບັດຫຼາຍຄັ້ງ; ແລະ
- ພະຍາຍາມຊອກຫາທາງແກ້ໄຂຂໍ້ຂັດແຍ່ງທີ່ບໍ່ສາມາດປະນີປະນອມໃນພື້ນຖານຄວາມເປັນຈິງ, ກົດໝາຍ ຫຼື ຄວາມເປັນໄປໄດ້.[38]

ຍິ່ງໄປກວ່ານັ້ນ, ສະຫະລັດອາເມລິການ ແລະ ອອດສເຕເລຍ ໄດ້ກຳນົດກົນໄກທີ່ແຕກຕ່າງໃນການເກັບກຳ ແລະ ລົງຖານຂໍ້ມູນ ຈາກບັນດາຜູ້ມີສ່ວນຮ່ວມ. ເຊິ່ງສາມາດຮວບລວມໄດ້ດັ່ງລຸ່ມນີ້:

- ການຮັບຟັງທາງສາທາລະນະ;
- ໄລຍະທີ່ມີຄຳຄິດເຫັນຂອງສາທາລະນະ ເປັນຄຳແນະທີ່ມີລາຍລັກອັກສອນ;
- ການປະຊຸມກັບສາທາລະນະ;
- ຈັດປະຊຸມເປັນກຸ່ມນ້ອຍ, ກຸ່ມສະເພາະ ຫຼື ການຝຶກອົບຮົມ;
- ບັນດາກຸ່ມແນະນຳອາວຸດໂສ ແລະ ທ່າແຮງຂອງໜ້າວຽກ;
- ການເຜີຍແຜ່ຂ່າວສານ, ຈົດໝາຍຂ່າວສານ ທີ່ກ່ຽວກັບຮູບແບບຄຳແນະນຳ,ທາງສາທາລະນະ, ຈາກຄວາມເປັນຈິງ ແລະຂ່າວລື;
- ສື່ສາທາລະນະ – ຮູບແບບເລື້ອງລາວ, ການສຳພາບ, ການປະກາດການຮັບໃຊ້ທາງສາທາລະນະ;
- ໂຄງການ/ກົດຈະການຜ່ານຖານຂໍ້ມູນ ອອນລາຍ;
- ຂໍ້ມູນພື້ນຖານ ຫຼື ຂໍ້ມູນການຕອບ ຖາມຕາມສະພາບການຕົວຈິງ;
- ຫ້ອງການ ປະກາດຂ່າວ;
- ການສຳຫຼວດຫຼືການເລືອກເຟັ້ນ;
- ລາຍການຈົດໝາຍ;
- ການສະຫຼຸບຫຍໍ້ ແລະ ເພື່ອສາທາລະນະລັດຖະການ;
- ເຄື່ອຂ່າຍທາງສັງຄົມ(ແຟດສບຸກ, ທະວິດເຕີ ແລະ ອື່ນໆ);ແລະ
- ທັດສະນະຄະຕິ.[39]

ການປະຕິບັດການປະເມີນຜົນກະທົບທາງສິ່ງແວດລ້ອມ ແມ່ນ້ຳຂອງ

ການ ປຜລ ໄດ້ຖືກປະຕິບັດໃນທຸກປະເທດໃນໂລກ. ເຊິ່ງໄດ້ມີບົດແນະນຳທີ 191 ຂອງ 193 ສຳມະຊິກນາໆຊາດ ທີ່ມີທັງລະບຽບກົດໝາຍແຫ່ງຊາດ ຫຼືການອະນຸມັດບາງຮູບແບບເຄື່ອງມືຂອງກົດໝາຍສາກົນເພື່ອນຳໃຊ້ເຂົ້າໃນການ ປຜສ.[40] ປຜສ ໄດ້ຖືກແຜ່ຂະຫຍາຍໄປທົ່ວໂລກໂດຍການສະໜັບສະໜູນຂອງ ຫຼັກການທີ 17 ຂອງການປະກາດໃຊ້ Rio, ເຊິ່ງໄດ້ກຳນົດໃນບັນດາປະເທດພາຄີ ທີ່ວ່າດ້ວຍການນຳໃຊ້ ປຜສ “ ເພື່ອບັນດາກົດຈະການທີ່ນຳສະເໜີວ່າອາດຈະມີຜົນກະທົບທາງລົບຕໍ່ສິ່ງແວດລ້ອມ ແລະ ເພື່ອປະກອບເຂົ້າໃນການຕັດສິນໃຈຂອງຂະແໜງການແຫ່ງຊາດ.”[41]


[38] ວໍເສີແມນ, 2012.
[39] ວໍເສີແມນ, 2012.
[40] ມໍລແກນ, 2012.
[41] ມໍລິສັນ-ສາວມເດີ້, 2012, ໜ້າທີ 34-41.

ການປະເມີນຜົນກະທົບທາງສິ່ງແວດລ້ອມ ໃນພາກພື້ນແມ່ນ້ຳຂອງ

ຂະບວນການ ປຜສ ທີ່ນຳໃຊ້ໂດຍລັດຖະບານໃນຂົງເຂດຕາມລຳແມ່ນ້ຳຂອງ
ເພື່ອປະເມີນຜົນກະທົບທີ່ອາດຈະເກີດຂຶ້ນຈາກການພັດທະນາທີ່ນຳສະເໜີ ແລະ
ການພິຈາລະນາຫາທາງເລືອກອື່ນ ແລະ
ຍຸດທະສາດການຄຸ້ມຄອງຂອງຂະບວນການຕັດສິນໃຈເພື່ອກຳນົດເຂົ້າໃນໂຄງການ.

ຂະບວນການ ປຜສ ເປັນເຄື່ອງມືທີ່ສຳຄັນໃນການປະເມີນ ແລະ ວິເຄາະຜົນກະທົບທາງສິ່ງແວດລ້ອມ, ສັງຄົມ, ເສດຖະກິດ, ແລະ ຜົນກະທົບອື່ນຈາກໂຄງການ ແລະ ມີການພັດທະນາແນວທາງເພື່ອຫຼີກລ້ຽງ: ຫຼຸດຜ່ອນ ຫຼື ຈັດການຜົນກະທົບທີ່ອາດຈະເກີດຂຶ້ນ. ເຊັ່ນດຽວກັນກັບຂະບວນການທີ່ໃຊ້ເຂົ້າໃນການກຳນົດ ແລະ ຕອບຂໍ້ສົນໃຈສຳຄັນຈາກຜູ້ທີ່ຖືກກະທົບໂຄງການ ແລະ ຜູ້ມີສ່ວນຮ່ວມອື່ນໆ.

ໃນຂະບວນການທັງໝົດຂອງ ປຜສ ຈະຕ້ອງສຳເລັດກ່ອນການຮັບຮອງເອົາແຕ່ລະພື້ນທີ່ໂຄງການ,
ເຊິ່ງເປັນສິ່ງສຳຄັນອັນໜຶ່ງຂອງຈຸດປະສົງຫຼັກຂອງ ປຜສ
ທີ່ຈະຕ້ອງຮັບຮອງວ່າມີການຫຼີກລ້ຽງຜົນກະທົບທາງລົບຈາກການນຳສະເໜີ,
ຫຼືຢ່າງນ້ອຍຕ້ອງບັນເທົາຫຼືຫຼຸດຜ່ອນກ່ອນທີ່ຈະມີບັນຫາເກີດຂຶ້ນຫຼາຍກວ່ານີ້.
ສິ່ງສຳຄັນອີກຢ່າງໜຶ່ງທີ່ຈະເຮັດໃຫ້ບັນລຸເປົ້າໝາຍກໍ່ຄືການຮັບຮອງວ່າປະຊາຊົນຜູ້ຖືກກະທົບຈາກໂຄງການຈະ
ມີໂອກາດເຂົ້າຮ່ວມໃນຂະບວນການຕັດສິນໃຈ.


ການກໍ່ນຕອງ
ບໍ່ມີຜົນກະທົບຫຼາຍ
ການສຶກສາດ້ານ ສິ່ງແວດລ້ອມເບື້ອງຕົ້ນ
ການປະເມີນຜົນກະທົບ ດ້ານສິ່ງແວດລ້ອມ
ກຳນົດຂອບເຂດສຶກສາ
ເກັບກຳຂໍ້ມູນໂດຍທີ່ປຶກສາຂອງການ ປະເມີນຜົນກະທົບທາງສິ່ງແວດລ້ອມ
ກະກຽມຮ່າງບົດ ປະເມີນຜົນກະທົບຕໍ່ສິ່ງແວດລ້ອມ/ ແຜນ ຄຸ້ມຄອງສິ່ງແວດລ້ອມແລະສັງຄົມ
ນຳສົ່ງບົດ ປະເມີນຜົນກະທົບທາງ ສິ່ງແວດລ້ອມ
ການປະເມີນຜົນຂອງບົດ ປະເມີນຜົນກະທົບຕໍ່ ສິ່ງແວດລ້ອມ/ ແຜນຄຸ້ມຄອງສິ່ງແວດລ້ອມແລະສັງຄົມ
ການປະຕິເສດບົດ ປະເມີນຜົນ ກະທົບທາງສິ່ງແວດລ້ອມ
ຂັ້ນຕອນຍື່ນຄຳຮ້ອງຂໍ ພິຈາລະນາຮັບຮອງບົດຄືນ
ຮັບຮອງ ບົດ ປະເມີນຜົນກະທົບຕໍ່ສິ່ງແວດລ້ອມ/ ແຜນຄຸ້ມຄອງສິ່ງແວດລ້ອມແລະສັງຄົມ
ອອກໃບຮັບຮອງໃນການປະຕິບັດຕາມ ລະບຽບການຄຸ້ມຄອງສິ່ງແວດລ້ອມ
ຂະບວນອະນຸຍາດ ອື່ນໆ
ເລີ່ມການກໍ່ສ້າງ ໂຄງການ
ເລີ່ມດຳເນີນງານ ໂຄງການ
ຕິດຕາມກວດກາ ແລະ ຄວາມສອດຄ່ອງກັບໃບຮັບຮອງໃນການ ປະຕິບັດຕາມລະບຽບການຄຸ້ມຄອງສິ່ງແວດລ້ອມ
ປິດໂຄງການທີ່ສຳ ເລັດແລ້ວ
ຂະບວນ ອະນຸຍາດອື່ນໆ
ເລີ່ມການກໍ່ສ້າງ
ເລີ່ມດຳເນີນງານ
ປິດໂຄງການທີ່ສຳ ເລັດແລ້ວ
ສຳຫຼວດ/ການລາຍງານ
ຂະບວນການທົບທວນ ແລະ ຮັບຮອງ
ອອກໃບຮັບຮອງໃນການປະຕິບັດຕາມລະບຽບ ການຄຸ້ມຄອງສິ່ງແວດລ້ອມ
ຂະບວນອະນຸຍາດ ອື່ນໆ
ເລີ່ມດຳເນີນງານ
ຕິດຕາມກວດກາ ແລະ ຄວາມສອດຄ່ອງກັບໃບຮັບຮອງໃນການ ປະຕິບັດຕາມລະບຽບການຄຸ້ມຄອງສິ່ງແວດລ້ອມ
ປິດໂຄງການທີ່ສຳ ເລັດແລ້ວ
ສີເຫຼືອງ = ມີ ສ່ວນຮ້ວມຂອງມວນ ຊົນ

ແຕ່ລະປະເທດມີການກຳນົດສະເພາະຂອງຕົນ ໃນຂັ້ນກະຊວງ ຫຼື ກົມກອງ ທີ່ຮັບຜິດຊອບໃນຂະບວນການ ປຜສ. ໃນບັນດາປະເທດລຽບຕາມລຳແມ່ນ້ຳຂອງ, ການສຳຫຼວດ ປຜສ ແລະການກະກຽມບົດ ປຜສ ແມ່ນຈະຕ້ອງດຳເນີນໂດຍບໍລິສັດທີ່ປຶກສາ ໂດຍຜູ້ສະເໜີໂຄງການ. ບໍລິສັດທີ່ປຶກສາ ປຜສ ຈະຕ້ອງດຳເນີນການປະເມີນ ແລະ ກະກຽມການສຶກສາບັນດາຮູບແແບພື້ນຖານຂອງບົດ ປຜສ.

ການ ປຜສ ເປັນຂະບວນການທີ່ສາມາດຈັດແບ່ງຕາມຈຳນວນຂັ້ນຕອນ.
ໃນແຕ່ລະຂັ້ນຕອນແມ່ນອີງປະກອບຂອງຂະບວບການປະເມີນ.
ທຸກຂັ້ນຕອນຈະຕ້ອງຖືກດຳເນີນໃຫ້ສອດຄ່ອງກັບລະບຽບຫຼັກການຂອງ ການ ປຜສ.
ເຖິງແມ່ນວ່າໃນແຕ່ລະປະເທດຈະມີລະບົບການ ປຜສ ສະເພາະຂອງແຕ່ລະປະເທດ
ແຕ່ກໍ່ຍັງມີຫຼາຍຂັ້ນຕອນທີ່ຄ້າຍຄືກັນ.

ຂັ້ນຕອນໃນຂະບວນການປະເມີນຜົນກະທົບສິ່ງແວດລ້ອມ

ລະບົບຂອງ ປຜສ
ໃນພາກພື້ນແມ່ນ້ຳຂອງແລະໃນທຸກຂົງເຂດຂອງໂລກແມ່ນມີທັງໝົດຫຼືເກືອບໝົດຂັ້ນຕອນດັ່ງລຸ່ມນີ້:

1. ການກັ່ນຕອງ;
2. ການກຳນົດຂອບເຂດການສຶກສາ/ການກຳນົດບົດເອກະສານອ້າງອີງ;
3. ການເກັບກຳຂໍ້ມູນໂດຍທີ່ປຶກສາສິ່ງແວດລ້ອມ;
4. ການກະກຽມບົດ ປຜສ;
5. ການກະກຽມແຜນຄຸ້ມຄອງສິ່ງແວດລ້ອມແລະສັງຄົມ(ຜຄສສ);
6. ການນຳສະເໜີບົດ ປຜສ ;
7. ການປະເມີນຂອງບົດ ປຜສ ແລະ ຜຄສສ;
8. ການຕັດສິນໃຈຕໍ່ການອະນຸມັດບົດ ປຜສ ແລະ ຜຄສສ;
9. ການປະກາດຮັບຮອງຄວາມສອດຄ່ອງທາງສິ່ງແວດລ້ອມຂອງໂຄງການ;
10. ການຮັບຮອງໃບອະນຸຍາດ ແລະ ການອະນຸມັດຕ່າງໆ;
11. ການລິເລີ້ມກໍ່ສ້າງໂຄງການ ;
12. ການລິເລີ້ມການດຳເນີນງານໂຄງການ;
13. ການຕິດຕາມ ແລະກວດກາຄວາມສອດຄ່ອງກັບ ໃບຮັບຮອງ ແລະ ຜຄສສ ; ແລະ
14. ການປິດ ຫຼືສຳເລັດໂຄງການ.

ຂະບວນການດັ່ງກ່າວຈະຖືກກຳນົດຢູ່ໃນແຜນວາດທີ2 ທີ່ນຳມາຈາກການຮ່ວມມືແມ່ນ້ຳຂອງເພື່ອການພັດທະນາສິ່ງແວດລ້ອມ ຂອງການປຶກສາຫາລືແບບເປັນກຸ່ມຂອງ ປຜສ (MPE RTWG).

ເພື່ອພິຈາລະນາສິ່ງອຳນວຍຄວາມສະດວກໃນວິທີທາງຂອງ ປຜສ,
ໃນຂັ້ນຕອນລຸ່ມນີ້ຈະກຳນົດຈຸດທີ່ສຳຄັນຂອງຂະບວນການ ປຜສ:

1. ການກັ່ນຕອງ;
2. ການກຳນົດຂອບເຂດການສຶກສາ;
3. ການດຳເນີນຜົນກະທົບສິ່ງແວດລ້ອມ ແລະ ການກະກຽມບົດ ປຜສ ແລະ ຜຄສສ;
4. ການທົບທວນຄືນ ບົດ ປຜສ ແລະ ຜຄສສ;

5. ການຕັດສິນໃຈຕໍ່ບົດ ປຜສ ແລະ ຜຄສສ;
6. ການຕິດຕາມ ແລະ ຄວາມສອດຄອງຕໍ່ລະບຽບການ.

ໃນແຕ່ລະຂັ້ນຕອນແມ່ນກຳນົດໃຫ້ມີໂອກາດສຳລັບສາທາລະນະຜູ້ທີ່ຖືກກະທົບຈາກໂຄງການ ແລະ ຜູ້ທີ່ມີສ່ວນຮ່ວມອື່ນ. ເຊິ່ງປະກອບດ້ວຍ ຫົກ ຂັ້ນຕອນທີ່ຖືກນຳໃຊ້ ເຂົ້າໃນເຂດຈຸດສຸມໃນຄູ່ມືນີ້.

ຂັ້ນຕອນທີ 1: **ການກັ່ນຕອງ**

ຂັ້ນຕອນທຳອິດຂອງຂະບວນການ ປຜສ ແມ່ນຂັ້ນຕອນການກັ່ນຕອງ.
ການກັ່ນຕອງແມ່ນພາກທີ່ສຳຄັນໃນຂະບວນການ ປຜສ,
ເຊິ່ງເປັນທີ່ຮັບຮູ້ກັນວ່າເປັນໄລຍະທຳອິດທີ່ຜູ້ສະເໜີຈະປຶກສາຫາລືກັບພາກສ່ວນລັດຖະ ບານ ແລະ ຊຸມຊົນເພື່ອນຳເຂົ້າໃນບົດສະເໜີໂຄງການ.
ຜົນໄດ້ຮັບພື້ນຖານຂອງຂັ້ນຕອນການກັ່ນຕອງກໍ່ຄືບົດລາຍງານການກັ່ນຕອງ.

ທຸກລາຍການຂອງການກັ່ນຕອງໃນປເທດພາກພື້ນລຸ່ມແມ່ນ້ຳຂອງ(GMS)ໄດ້ລວມເອົາບັນດາປັດໄຈເຂົ້າໃນການກຳນົດປະເພດໂຄງການທີ່ມີຄວາມຈຳເປັນໃນການກະກຽມບົດ ປຜສ.
ແຕ່ລາຍການກັ່ນຕອງສາມາດຖອນບາງຫົວຂໍ້ ບາງປະເພດຂອງໂຄງການຜັດທະນາອອກໄດ້.
ສິ່ງທີ່ສຳຄັນແມ່ນການຮັບຮອງວ່າໂຄງການດັ່ງກ່າວຈະມີຜົນກະທົບທາງລົບທີ່ພົ້ນເດັ່ນຕໍ່ດ້ານສິ່ງແວດລ້ອມ ຫຼື ສັງຄົມ ທີ່ຈຳເປັນຕໍ່ຕ້ອງດຳເນີນ ປຜສ ແລະ ທີ່ບໍ່ພຽງແຕ່ຈຳກັດໃນລາຍງານການກັ່ນຕອງເທົ່ານັ້ນ.

ຂັ້ນຕອນທີ 2: **ການກຳນົດຂອບເຂດການສຶກສາ**

ການກຳນົດຂອບເຂດການສຶກສາເປັນຂັ້ນຕອນທີ່ສຳຄັນໃນຂະບວນການ ປຜສ.
ການກຳນົດອົງປະກອບຂອງຂະບວນການການກຳນົດຂອບເຂດການສຶກສາໃນ ປຜສ (ຕົວຢ່າງເຊັ່ນ:
ບັນດາຂໍ້ມູນທີ່ກ່ຽວຂ້ອງທີ່ຈຳເປັນຕ້ອງມີການເກັບກຳ ແລະ ວິເຄາະ
ເພື່ອປະເມີນຜົນທີ່ອາດຈະເກີດຂຶ້ນຂອງໂຄງການ) ແລະ
ການກຳນົດຂອບເຂດໜ້າວຽກເພື່ອການກະກຽມບົດລາຍງານ ປຜສ.[42]

ດັ່ງທີ່ເຂົ້າໃຈກັນດີວ່າ ການກຳນົດຂອບເຂດການສຶກສາເປັນໄລຍະທຳອິດທີ່ຜູ້ສະເໜີຈະປຶກສາຫາລືກັບພາກສ່ວນລັດຖະບານ ແລະ ຊຸມຊົນເພື່ອນຳເຂົ້າໃນບົດສະເໜີໂຄງການ. ຜົນໄດ້ຮັບພື້ນຖານຂອງຂັ້ນຕອນການກຳນົດຂອບເຂດການສຶກສາກໍ່ຄືບົດລາຍງານການກຳນົດຂອບເຂດການສຶກສາ
ເພື່ອກະກຽມເຂົ້າໃນການ**ຮ່າງຂອບເຂດໜ້າວຽກ** ຂອງການ ປຜສ ຂອງບົດສະເໜີໂຄງການ.
ຮ່າງຂອບເຂດໜ້າວຽກ ຈະປະກອບມີຜົນກະທົບທີ່ສຳຄັນທາງສິ່ງແວດລ້ອມ ແລະ ສັງຄົມ
ທີ່ຈຳເປັນຕ້ອງໄດ້ມີການສຶກສາແລະປະເມີນໂດຍທີ່ປຶກສາ ທາງ ປຜສ. ນອກນັ້ນ
ຮ່າງຂອບເຂດໜ້າວຽກຈະຕ້ອງໄດ້ຮັບການຮັບຮອງຈາກພາກສ່ວນລັດຖະບານເພື່ອປະກອບເຂົ້າໃນບົດລາຍງານ
ການກຳນົດຂອບເຂດການສຶກສາ,

[42] ຂະບວນການ ປຜສ ຂອງ ປະເທດມຽນມ້າ 2015.

ເຊິ່ງຈະຕ້ອງລະບຸເຖິງການມີສ່ວນຮ່ວມຂອງສາທາລະນະຕາມວັນເວລາທີ່ໄດ້ກຳນົດໄວ້ ແລະ ແຜນການມີສ່ວນຮ່ວມຂອງສາທາລະນະໃນຄັ້ງຕໍ່ໄປ.

ໃນຂັ້ນຕອນການປະເມີນ ປຜສ ຈະລວບລວມ ແລະ
ວິເຄາະທຸກຜົນກະທົບທີ່ຖືກກຳນົດໃນຂອບເຂດໜ້າວຽກແລະ ເພື່ອພິຈາລະນາມາດຕະການຫຼຸດຜ່ອນຜົນກະທົບ ເຊິ່ງຈະລວມເຖິງການສຶກສາທາງເລືອກທີ່ເປັນໄປໄດ້.

ຂັ້ນຕອນການກຳນົດຂອບເຂດການສຶກສາຂອງບົດໂຄງການແມ່ນຈະອີງຕາມຈຸດປະສົງດັ່ງລຸ່ມນີ້:

- ກຳນົດເຂດການສຶກສາ, ພື້ນທີ່ທີ່ຖືກກະທົບ, ໄລຍະຂອບເຂດໂຄງການ, ໄລຍະການພັດທະນາໂຄງການ, ແລະ ຜູ້ທີ່ມີສ່ວນຮ່ວມ;
- ເລີ່ມທຳຄວາມເຂົ້າໃຈໃນລະບຽບການ, ກົດໝາຍ ແລະມາດຕະຖານ, ແລະ ອົງປະກອບໃນການອອກແບບໂຄງການ ແລະ ສຳເລັດການ ປຜສ;
- ກຳນົດໃຫ້ຄຳນິຍາມຜົນກະທົບທາງສິ່ງແວດລ້ອມ, ແນໃສ່ບັນຫາສະເພາະທາງດ້ານສິ່ງແວດລ້ອມ, ສັງຄົມ ແລະ ສຸກະພາບເພື່ອປະກອບເຂົ້າໃນບົດ ປຜສ;
- ກຳນົດຕົວຊີ້ວັດທີ່ເປັນປັດໃຈສຳຄັນຫຼັກຂອງການສຳຫຼວດບົດ ປຜສ ລວມທັງ ຂໍ້ມູນພື້ນຖານແລະຂໍ້ມູນທີ່ຈຳເປັນຕໍ່ການສຳຫຼວດ ແລະ ການສຶກສາໃນຄັ້ງຕໍ່ໄປ, ແລະ ຈະຕ້ອງດຳເນີນການຮຽນຮູ້ວິທີການເກັບກຳຂໍ້ມູນການສຶກສ າແລະ ການສຳຫຼວດ;
- ກຳນົດໃຫ້ມີໂອກາດຂອງທີ່ປຶກສາ, ອຳນາດການປົກຄອງທີ່ກ່ຽວຂ້ອງ, ຜູ້ພັດທະນາ, ຜູ້ທີ່ຖືກກະທົບແລະຜູ້ທີ່ສົນໃຈພາຍນອກ ເຂົ້າມາມີສ່ວນຮ່ວມໃຫ້ຄຳຄິດເຫັນຕໍ່ບົດສະເໜີໂຄງການກ່ອນການດຳເນີນຂະບວນການ ປຜສ;
- ສາມາດເຂົ້າເຖິງຂະບວນການທີ່ມີປະສິດທິຜົນ ແລະ ເປັນມີຂັ້ນຕອນການປະເມີນຜົນ ທີ່ສາມາດຈຳກັດເວລາ, ຊັບພະຍາກອນ ແລະ ງົບປະມານ, ແລະ ຫຼີກລ້ຽງການຫຼ້າຊ້າ, ແລະ
- ກຳນົດເຂດຊຸມຊົນທີ່ອາດຈະຖືກກະທົບ ແລະ ຜູ້ມີສ່ວນຮ່ວມອື່ນໆທີ່ສົນໃຈໃນໂຄງການພັດທະນານີ້.[43]

ສ່ວນໜຶ່ງຂອງ ການກຳນົດເຂດການສຶກສາ,
ຜູ້ສະເໜີໂຄງການຈະຕ້ອງຮັບຮອງໃຫ້ມີການເຜີຍແຜ່ການປຶກສາຫາລື ແລະ
ຂະບວນການມີສ່ວນຮ່ວມດັ່ງກ່າວໄວ້ຂ້າງລຸ່ມນີ້:

- ເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບບົດສະເໜີໂຄງການສູ່ສາທາລະນະ ແລະ ສັງຄົມຕະຫຼອດເຖິງການປ້ອນຂໍ້ມູນໂຄງການຫຼືອົງປະກອບໂຄງການເຂົ້າໃນຖານຂໍ້ມູນອອນລາຍຂອງ ໂຄງການ ແລະທາງວິທະ ຍຸຂອງທ້ອງຖິ່ນ, ລວມທັງການປະກອບເປັນເອກະສານທີ່ສາມາດອ່ານໄດ້ ແລະ ຕິດປ້າຍເຜີຍແຜ່ຕາມເຂດທ້ອງຖິ່ນຂອງໂຄງການພັດທະນານັ້ນໆ; ແລະ
- ສະເໜີໃຫ້ທາງກະຊວງຈັດຕັ້ງການປຶກສາຫາລື ປະຊຸມ ແລະ ສົນທະນາເພື່ອສ້າງຄວາມເຂົ້າໃຈ ກັບຊຸມຊົນທ້ອງຖິ່ນ, ຜູ້ທີ່ອາດຈະຖືກກະທົບຈາກໂຄງການ, ຂະແໜງການປົກຄອງທ້ອງຖິ່ນ, ອົງການ ຈັດຕັ້ງຂອງຊຸມຊົນ ແລະ ປະຊາຊົນ, ແລະ ກຳນົດໃຫ້ມີການຊີ້ແຈງທີ່ເໝາະສົມ ແລະ ຕົງຕາມຊ້ວງເວ ລາໃນການປະຊຸມ ແລະ ການສຳພາບ.[44]

[43] ຂະບວນການ ປຜສ ຂອງ ປະເທດມຽນມ້າ.

[44] ຂະບວນການ ປຜສ ຂອງ ປະເທດມຽນມ້າ, ມາດຕາ 50.

ລາຍການຜູ້ຖືກກະທົບຈາກໂຄງການແລະຜູ້ມີສ່ວນຮ່ວມ ໃນຂັ້ນຕອນການກຳນົດຂອບເຂດສຶກສາ[45]

1. **ຂະແໜງການລັດຖະບານ**
   - ລະດັບຊາດ, ຂັ້ນແຂວງ, ເມືອງ ແລະ ທ້ອງຖິ່ນ;
   - ອົງການຈັດຕັ້ງລັດມີໜ້າທີ່ຮັບຜິດຊອບຄວບຄຸມມົນລະພິດເຊິ່ງລວມມີ ນ້ຳເປື້ອນ, ສິ່ງເສດເຫຼືອ, ສຽງ ແລະມົນລະພິດທາງອາກາດ.;
   - ອົງການຈັດຕັ້ງລັດມີໜ້າທີ່ຮັບຜິດຊອບການປົກປັກຮັກສາທຳມະຊາດ, ມໍລະດົກວັດທະນະທຳ ແລະ ພູມສັນຖານ;
   - ອົງການຈັດຕັ້ງລັດມີໜ້າທີ່ຮັບຜິດຊອບດ້ານສາທາລະນະສຸກ ແລະ ຄວາມປອດໄພ;
   - ອົງການຈັດຕັ້ງລັດມີໜ້າທີ່ຮັບຜິດຊອບຄວມຄຸມການນຳໃຊ້ທີ່ດິນ, ການວາງແຜນ ການນຳໃຊ້ພື້ນທີ່ ແລະ ການຈັດສັນເຂດພື້ນທີ່; ແລະ
   - ອົງການຈັດຕັ້ງລັດຖະບານຢູ່ໃນປະເທດໄກ້ຄຽງທີ່ອາດຈະມີບັນຫາຈາກຜົນກະທົບຂ້າມຊາຍແດນ .

2. **ຜູ້ມີສ່ວນຮ່ວມອື່ນໆ**
   - ກຸ່ມທີ່ມີຄວາມສົນໃຈທາງດ້ານສິ່ງແວດລ້ອມ, ສັງຄົມ ແລະ ການພັດທະນາໃນລະດັບທ້ອງຖິ່ນ, ລະດັບຊາດ ແລະ ສາກົນ;
   - ກົມກອງລັດຖະບານທີ່ມີໜ້າທີ່ຮັບຜິດຊອບກ່ຽວກັບ ການກະສິກຳ, ພະລັງງານ, ປ່າໄມ້, ການປະມົງ ແລະ ອື່ນໆ(ທີ່ຜົນປະໂຫຍດຂອງພວກເຂົາອາດໄດ້ຮັບຜົນກະທົບ);
   - ອົງການຈັດຕັ້ງສາກົນຕ່າງໆທີ່ຜົນປະໂຫຍດຂອງພວກເຂົາອາດໄດ້ຮັບຜົນກະທົບ ເຊັ່ນ: ຄະນະກຳມະການແມ່ນ້ຳຂອງ;
   - ຜູ້ວ່າຈ້າງໃນທ້ອງຖິ່ນ ແລະ ສະມາຄົມທຸລະກິດ ເຊັ່ນ: ສະພາການຄ້າ, ສະມາ ຄົມການຄ້າ, ແລະ ອື່ນໆ.;
   - ອົງການຈັດຕັ້ງສັງຄົມ ເຊັ່ນ: ກຸ່ມແມ່ຍິງ, ກຸ່ມຊາວໜຸ່ມ ແລະ ກຸ່ມທ້ອງຖິ່ນ ແລະ ອື່ນໆ.;
   - ກຸ່ມຕົວແທນຜູ້ນຳໃຊ້ສິ່ງແວດລ້ອມ ເຊັ່ນ: ຊາວກະສິກອນ, ຊາວປະມົງ, ແມ່ຍິງ, ທີ່ນຳໃຊ້ຊັບພະຍາກອນທ້ອງຖິ່ນເພື່ອອຸປະໂພກ ບໍລິໂພກເອງ ແລະ ຄ້າຂາຍ, ຜູ້ດຳເນີນທຸລະກິດທ່ອງທ່ຽວ;
   - ສະຖາບັນຄົ້ນຄ້ວາ, ມະຫາວິທະຍາໄລ ແລະ ສູນກາງຊ່ຽວຊານສະເພາະດ້ານ; ແລະ
   - ສື່ມວນຊົນລະດັບທ້ອງຖິ່ນ ແລະ ລະດັບຊາດ.

3. **ຜູ້ຖືກກະທົບໂຄງການ ແລະ ຊຸມຊົນອ້ອມຂ້າງ**
   - ເຈົ້າຂອງທີ່ດິນ ແລະ ຜູ້ອາໄສ;
   - ປະຊາຊົນຊົນເຜົ່າພື້ນເມືອງ ແລະ ຊົນເຜົ່າຕ່າງໆທີ່ຢູ່ໃນຂອບເຂດພື້ນທີ່ ທີ່ໄດ້ຮັບຜົນກະທົບ.;
   - ຕົວແທນທີ່ຖືກເລືອກ ແລະ ຊຸມຊົນທັງໝົດ ເຊັ່ນ:ເຈົ້າກົກເຈົ້າເຫລົ່າ ຫຼືຄູອາຈານ;
   - ກຸ່ມຄົນທ້ອງຖິ່ນ, ກຸ່ມທີ່ອາໃສຢູ່ໄກ້ຄຽງ ແລະ ກຸ່ມອື່ນໆ; ແລະ
   - ສຳມະຊິກຂອງທ້ອງຖິ່ນ ແລະ ເຂດໄກ້ຄຽງ. .

[45] ປຶດແນະນຳ ປຜສ ຂອງ ສປປ ລາວ , ກຊສ, 2012. ຕູ້ 3.3, ໜ້າ.26.

ບັນຫາ ແລະ ຜົນກະທົບທີ່ສຳຄັນຄວນຈະແຍກອອກຕາມແຕ່ລະຊ່ວງການພັດທະນາໂຄງການ.
ເຊິ່ງຈະລວມມີຊ່ວງໄລຍະການກໍ່ສ້າງ, ການດຳເນີນ ແລະ ການປິດໂຄງການ.
ໃນບາງກໍລະນີໃນໄລຍະການດຳເນີນການອາດຈະລວມທັງການຂະຫຍາຍແຜນການ ຫຼື ເພີ້ມຕື່ມໂຄງການເຊັ່ນ:
ການສ້າງພື້ນທີ່ເສດຖະກິດພິເສດ ຫຼືຂຸດຄົ້ນບໍ່ແຮ່. ທີ່ປຶກສາທາງ ປຜສ
ຄວນຮ່າງບົດລາຍລະອຽດໃຫ້ຊັດເຈນໃນແຕ່ລະໄລຍະຂອງໂຄງການ ແລະ ການສະເໜີໂຄງການ ແລະ
ໄລຍະເວລາການດຳເນີນງານ.

ບາງບັນຫາທີ່ສຳຄັນທີ່ໄດ້ອະທິບາຍໂດຍທີ່ປຶກສາທາງ ປຜສ ໃນກອງປະຊຸມ
ຂອງຂັ້ນຕອນການກຳນົດຂອບເຂດການສຶກສາ ລວມມີ:

- ຂອບເຂດຊາຍແດນ ແລະ ຂໍ້ຈຳກັດຕ່າງໆ;
- ຂໍ້ຂ້ອງໃຈຕົ້ນຕໍ່ (ອີງຕາມໂຄງການທີ່ຄ້າຍຄືກັນ);
- ການກຳນົດ/ອະທິບາຍຂັ້ນຕອນຂອງຂະບວນການ ປຜສ;
- ຜົນກະທົບທາງລົບທີ່ອາດຈະເກີດຂຶ້ນ;
- ການກຳນົດພື້ນທີ່ທີ່ມີຄວາມສ່ຽງ/ພື້ນທີ່ທີ່ສຳຄັນ;
- ການກຳນົດທາງເລືອກ;
- ການກຳນົດບັນຫາທາງສິ່ງແວດລ້ອມ ແລະ ສັງຄົມ;
- ການກຳນົດຜູ້ທີ່ຖືກກະທົບຈາກໂຄງການ(ຜກຄ);
- ການກຳນົດຜູ້ມີສ່ວນຮ່ວມອື່ນໆ;
- ການວາງແຜນພົວພັນຂອງຜູ້ທີ່ມີສ່ວນຮ່ວມ(ແຜນການມີສ່ວນຮ່ວມຂອງສາທາລະນະ);ແລະ
- ຮ່າງແຜນໜ້າວຽກ.

ຂັ້ນຕອນທີ່ 3: **ການກະກຽມບົດ ປຜສ**

ທັນທີ່ທີ່ຂອບເຂດການສຶກສາແລະຂອບເຂດໜ້າວຽກຖືກຮັບຮອງຈາກຂະແໜງການທີ່ກ່ຽວຂ້ອງໃນການ
ປຜສ ຫຼື ຖືກອະເຄາະໂດຍທີ່ປຶກສາ ປຜສ, ວຽກງານການເກັບກຳຂໍ້ມູນ ແລະ ການກະກຽມບົດ ປຜສ
ກໍ່ຈະຖືກລິເລີ່ມ. ຂະບວນການນີ້ຈະສາມາດສຳເລັດໄດ້ພາຍໃນ ສາມ ເດືອນ ຫຼື ສາມ ປີ
ແມ່ນຂຶ້ນກັບປະເພດຂອງໂຄງການ ແລະ ການຈັດການບັນຫາສິ່ງແວດລ້ອມ ແລະ ສັງຄົມ.

ອີງຕາມການເກັບກຳຂໍ້ມູນ ທີ່ປຶກສາ ປຜສ ຈະກະກຽມບົດລາຍງານ ປຜສ. ໃນຂະນະທີ່ ທີ່ປຶກສາກຳລັງຮ່າງບົດ
ປຜສ, ທີ່ປຶກສາຈະຈັດຕັ້ງການປະຊຸມ(ຫຼາຍຄັ້ງ) ເພື່ອຈະສະເໜີບົດລາຍງານ ປຜສ ໃຫ້ທັງທາງກະຊວງ ແລະ
ຜູ້ທີ່ຖືກກະທົບໂຄງການ ແລະ ຜູ້ມີສ່ວນຮ່ວມຕ່າງໆ. ຕາມການພິຈາລະນາໂດຍທີ່ປຶກສາ ປຜສ
ຕໍ່ກັບຄຳຄິດເຫັນ ແລະ ບັນຫາ ທີ່ສະເໜີຂຶ້ນມາໂດຍ ຜູ້ທີ່ຖືກກະທົບ, ບົດລາຍງານ ປຜສ ກໍ່ຈະຖືກປັບປຸງ
ບົດລາຍງານ ປຜສ ກໍ່ຈະພ້ອມທີ່ຈະຖືກນຳສົ່ງໃຫ້ໜ່ວຍງານ ປຜສ ເພື່ອການທົບທວນຄືນ ແລະ
ການປະເມີນຄືນ.

ບົດ ປຜສ ຄວນຈະລວມຜາກສ່ວນທີ່ສຳຄັນພາຍໄຕ້ກົດໝາຍແຫ່ງຊາດ ທີ່ໄດ້ສະຫຼຸບດັ່ງລຸ່ມນີ້:

- ບົດສະຫຼຸບໂດຍລວມ;
- ສະພາບແວດລ້ອມຂອງໂຄງການ;

- ນະໂຍບາຍ, ລະບຽບກົດໝາຍ ແລະ ຮ່າງລັດຖະທຳມະນູນ (ລວມທັງມາດຕະຖານຂອງຄຸນນະພາບສິ່ງແວດລ້ອມ;
- ລາຍລະອຽດໂຄງການ ແລະ ທາງເລືອກອື່ນຂອງໂຄງການ;
- ລາຍລະອຽດຂອງສິ່ງແວດລ້ອມ(ລວມທັງຄຸນລັກສະນະທາງສັງຄົມ);
- ການປະເມີນຜົນກະທົບ ແລະ ມາດຕະການຫຼຸດຜ່ອນ;
- ການປະເມີນຜົນກະທົບແບບສະສົມ;
- ການປະເມີນຄວາມສ່ຽງ;
- ບົດລາຍງານການມີສ່ວນຮ່ວມຂອງສາທາລະນະ ແລະ ຄຳຄິດເຫັນ ; ແລະ
- ບົດລາຍງານ.

ໂຄງການຈະຕ້ອງມີການກະກຽມແຜນຄຸ້ມຄອງສິ່ງແວດລ້ອມ (ຜຄສ). ຜຄສ ຄວນຈະຖືກສະເໜີແຍກອອກເປັນເອກະສານຊ້ອນທ້າຍຂອງບົດ ປຜສ.
ເຊິ່ງຄວນຈະຖືກປັບປຸງຕາມແຕ່ລະຂັ້ນຕອນຂອງໂຄງການທີ່ຕ້ອງ ການເຊັ່ນ: ກ່ອນການກໍ່ສ້າງ, ໄລຍະການກໍ່ສ້າງ ແລະ ການດຳເນີນງານໂຄງການ, ການປິດໂຄງການ, ການຮື້ຖອນ ແລະ ການຟື້ນຟູຄືນ.

ຂັ້ນຕອນທີ 4: **ການທົບທວນຄືນ ແລະການປະເມີນຜົນຂອງ ປຜສ**

ການຕັດສິນໃຈຕົກລົງເພື່ອຮັບຮອງ, ການສະເໜີໃຫ້ປັບປຸງຄືນ, ຫຼືການປະຕິເສດ ບົດ ປຜສ ໂດຍລັດຖະບານ. ການຕັດສິນໃຈຕົກລົງນີ້ຈະຕ້ອງປະຕິບັດແບບເອກະລາດ ແລະ ໂປ່ງໃສ ແລະ ອີງຕາມຂໍ້ມູນຂ່າວສານທີ່ສົມບູນ ແລະ ມີຫຼັກຖານທາງວິທະຍາສາດ. ອີງຕາມ ຂັ້ນຕອນການທົບທວນທີ່ຈະແຈ້ງ, ແລະ ຕິດພັນກັບການມີສ່ວນຮ່ວມຂອງສາທາລະນະ.

ສິ່ງທີ່ສຳຄັນທີ່ສຸດໃນຂັ້ນຕອນການທົບທວນ
ແມ່ນການຮັບຜິດຊອບໃນການຈັດຕັ້ງການມີສ່ວນຮ່ວມຂອງສາທາລະນະ, ແລະ ກຸ່ມເປົ້າໝາຍຮັບຟັງເພື່ອການປະກອບສ່ວນຂອງຜູ້ທີ່ຖືກກະທົບ ແລະ ຜູ້ມີສ່ວນຮ່ວມ,ທີ່ປັບປຸງຈາກຜູ້ສະເໜີ(ແລະ ທີ່ປຶກສາ) ທີ່ຈະຮັບຜິດຊອບຕໍ່ຂະບວນການຕັດສິນໃຈ(ຂະແໜງການຂອງການ ປຜສ).

ການພິຈາລະນາທີ່ສຳຄັນຂອງຂະແໜງການ ປຜສ ໃນການທົບທວນບົດ ປຜສ ແລະ ການແບ່ງແຍກ ຫຼືບໍ່ແມ່ນຄວນຈະມີການຮັບຮອງທີ່ລວມມີ ດັ່ງລຸ່ມນີ້(ທີ່ບໍ່ຈຳກັດໃນ):

- ຈັດລຳດັບການຈັດຕັ້ງການມີສ່ວນຮ່ວມຂອງສາທາລະນະເຂົ້າໃນການກະກຽມບົດ ປຜສ;;
- ຜູ້ຖືກກະທົບ ແລະ ຜູ້ມີສ່ວນຮ່ວມສາມາດທົບທວນບົດສະເໜີໂຄງການ ລວມທັງ ຜຄສ ແລະ ການສະເໜີການຊົດເຊີຍ;
- ມີມາດຕະການການຫຼຸດຜ່ອນ ແລະ ຜຄສ ທີ່ສາມາດແກ້ໄຂ ບັນເທົາຜົນກະທົບ;
- ບັນດາຂໍ້ຜູກພັນທີ່ກ່ຽວຂ້ອງ ແລະ ສຳຄັນຂອງໂຄງການ(ເຊັ່ນ: ຜົນປະໂຫຍດທາງສັງຄົມໃນມາດຕະການຂອງ ຜຄສ);
- ສອດຄ່ອງກັບຈຸດປະສົງຂອງການພັດທະນາແບບຍືນຍົງທີ່ກ້ວາງຂວາງ;
- ສອດຄ່ອງກັບການຮັບຮອງ ຂອບເຂດໜ້າວຽກ;
- ບັນດາເງື່ອນໄຂທີ່ຖືກຄັດຕິດມາເພື່ອການຮັບຮອງ(ທີ່ຕື່ມເຂົ້າໃນຂໍ້ກຳນົດຂອງ ປຜສ ແລະ ຜຄສສ).

ຂັ້ນຕອນທີ່ 5: **ການຮັບຮອງ ບົດ ປຜສ**

ລັດຖະບານຈະມີການຕັດສິນຂັ້ນສຸດທ້າຍວ່າຈະຮັບຮອງບົດຫຼືບໍ່,
ເຊິ່ງຈະຕ້ອງການໃຫ້ມີການປັບປຸງເພີ່ມຕື່ມຫຼືຈະປະຕິເສດບົດ ປຜສ ທັນທີ.
ການຕັດສິນນີ້ຈະຕ້ອງປະຕິບັດແບບເອກະລາດ ແລະ ໂປ່ງໃສ ແລະ ອີງຕາມຂໍ້ມູນຂ່າວສານທີ່ສົມບູນ ແລະ ມີຫຼັກຖານທາງວິທະຍາສາດ.

ໃນຂະນະທີ່ມີການຕັດສິນ ບົດ ປຜສ , ສາທາລະນະ ແລະ
ຜູ້ສະເໜີໂຄງການຄວນຈະສາມາດເຂົ້າເຖິງຂະບວນການປະເມີນ.
ສຳລັບຂະບວນການປະເມີນຈະຕ້ອງມີປະສິດທິພາບ ແລະ ເຊື່ອຖືໄດ້,
ໃນການຕັດສິນຈະຕ້ອງຖືກເຜີຍແຜ່ສູ່ສາທາລະນະຢ່າງສົມເຫດສົມຜົນ.

ຕິດຕາມການຮັບຮອງຂອງບົດ ປຜສ, ເນື່ອງຈາກໂຄງການຈະຕ້ອງການທຸກໃບອະນຸຍາດ ແລະ ການອະນຸມັດ, ລວມທັງການອະນຸມັດການລົງທຶນການຕ່າງປະເທດ.

ຂັ້ນຕອນທີ່ 6: **ການຕິດຕາມ ແລະ ຄວາມສອດຄອງ**

ສຳລັບໂຄງການທີ່ໄດ້ຮັບການຮັບຮອງ ແລະ ມີຂັ້ນຕອນການຈັດຕັ້ງປະຕິບັດ, ຊຶ່ງເປັນຜົນໄດ້ຮັບສຳຄັນທັງສິ່ງແວດລ້ອມ ແລະ ສັງຄົມ ແລະ ເປັນທີ່ເຊື່ອໝັ້ນຕໍ່ລະບົບ ປຜສ ໃນໄລຍະການກໍ່ສ້າງ, ການດຳເນີນງານ ແລະການຮື້ຖອນທີ່ສອດຄອງຕໍ່ ປຜສ, ຜຄສສ ແລະເງື່ອນໄຂໃນການຮັບຮອງ.

ເພື່ອຮັບຮອງຄວາມສອດຄອງ, ແລະ ເພື່ອບັນລຸຂໍ້ກຳນົດໃນບົດ ປຜສ,
ໃນລະບົບການຕິດຕາມຈະຕ້ອງຕິດພັນກັບທັງການຕິດຕາມພາຍໃນໂດຍຜູ້ບໍລິຫານໂຄງການ ແລະ ການຕິດຕາມຈາກພາກສ່ວນພາຍນອກ. ການຕິດຕາມຈາກພາກສ່ວນພາຍນອກແມ່ນຈະຖືກດຳເນີນໂດຍ ພຽງແຕ່ຝ່າຍດຽວ (ຫຼື ທັງສອງຝ່າຍ)ຕາມຮູບແບບລັດຖະບານ ຫຼືອີງການຈັດຕັ້ງສາທາລະນະ.

ການຕິດຕາມກວດກາແມ່ນກິດຈະກຳທີ່ຕໍ່ເນື່ອງ. ການຕິດຕາມຈະຊ່ວຍໃຫ້ສາທາລະນະເພິ່ງພໍໃຈຕໍ່ການປະຕິບັດຂອງໂຄງການທີ່ອີງໃສ່ເງື່ອນໄຂການຮັບຮອງ. ແລະຍັງຊ່ວຍໃນການຕອບບັນຫາ ແລະ ຂໍຂ້ອງໃຈກ່ອນທີ່ຈະເກີດບັນຫາທີ່ຮ້າຍແຮງເພີ່ມຂຶ້ນ.

ມີຄວາມຈຳເປັນທີ່ຕ້ອງມີກົນໄກໃນການພົວພັນກັບສາທາລະນະດັ່ງທີ່ກຳນົດໄວ້ໃນບົດ ປຜສ ແລະ ຜຄສ ທີ່ກຳລັງດຳເນີນໃນໄລຍະການຈັດຕັ້ງປະຕິບັດ. ຄວນຈະມີການຕິດຕາມຈຸດບົກຜ່ອງທີ່ບໍ່ສອດຄ່ອງ ແລະ ລະເມີດອອກຈາກເງື່ອນໄຂ, ກົນໄກທີ່ເປັນຂໍ້ບັງຄັບໃຫ້ສອດຄອງແມ່ນຈຳເປັນຕ້ອງມີການກຽມພ້ອມ ແລະ ເຂົ້າໃຈໃນບົດສະເໜີໂຄງການ ເຊັ່ນດຽວກັບ ຜູ້ຖືກກະທົບ ແລະ ຜູ້ມີສ່ວນຮ່ວມອື່ນໆ.

ຄວາມສອດຄອງ, ການຕິດຕາມ ແລະ ຂໍ້ບັງຄັບ

ເຖິງແມ່ນວ່າຂະບວນການ ປຜສ ຈະຢຸດທີ່ການຮັບຮອງຂອງໂຄງການ,
ຊຶ່ງເມື່ອໃດຜົນກະທົບເກີດຂຶ້ນໂດຍການສະເໜີຂອງ ຜູ້ທີ່ຖືກກະທົບ.

ໂຄງການຈະຕ້ອງກຳນົດແນວທາງທີ່ເປັນໂອກາດໃຫ້ຜູ້ທີ່ຖືກກະທົບແລະຜູ້ມີສ່ວນຮ່ວມອື່ນໝັ້ນໃຈວ່າໂຄງການ
ສາມາດປະຕິບັດຕາມເງື່ອນໄຂຂອງການຮັບຮອງ ຫຼືອະນຸຍາດ ແລະ ສອດຄອງກັບພັນທະ ແລະ
ຂໍ້ກຳນົດທີ່ມີໃນຂະບວນການ ປຜສ.

ກ່ອນການກໍ່ສ້າງ:

ຜູ້ສະເໜີໂຄງການ ແລະ ຜູ້ກໍ່ສ້າງໂຄງການຄວນຈະຈັດຕັ້ງກອງປະຊຸມກັບຜູ້ທີ່ຖືກກະທົບກ່ອນການກໍ່ສ້າງ ແລະ
ໄລຍະການກໍ່ສ້າງ. ກອງປະຊຸມນີ້ຄວນຈະກຳນົດໃຫ້ມີລາຍລະອຽດຂອງແຜນສະເໜີການກໍ່ສ້າງ.
ລາຍລະອຽດຄວນຈະກຳນົດບັນຫາຂອງຈຳນວນການສັນຈອນຂອງລົດບັນທຸກ ແລະ
ພາຫະນະໃນການກໍ່ສ້າງໃນໜ້າວຽກຕ່າງໆ, ມີໄລຍະເວລາໃນການກໍ່ສ້າງຫຼາຍໜ້ອຍເທົ່າໃດທີ່ຜ່ານມາ ແລະ
ທີ່ອາດຈະເກີດຂຶ້ນຕໍ່ຜູ້ທີ່ຖືກກະທົບ ທີ່ຈະຕ້ອງມີການແຈ້ງ ແລະ ອະທິບາຍລະອຽດຕື່ມ.

ໄລຍະເວລາຂອງການກໍ່ສ້າງ:

ຜູ້ພັດທະນາໂຄງການຈະຕ້ອງສ້າງແຜນສະເໜີການມີສ່ວນຮ່ວມໃນໄລຍະການກໍ່ສ້າງ.
ເຊິ່ງຈະຕ້ອງຈັດຕັ້ງຄະນະກຳມະການປຶກສາຫາລືຊຸມຊົນ(ຄປຊ) ແລະ ກົນໄກການແກ້ໄຂການຮ້ອງທຸກ.
ສຳລັບໂຄງການທີ່ໃຫຍ່ ອາດຈະຕ້ອງໃຊ້ເວລາຫຼາຍເດືອນ(ຫຼືເປັນປີ) ແລະ
ຈະມີຜົນກະທົບທາງລົບໃນໄລຍະການກໍ່ສ້າງ, ສະນັ້ນ ຄປຊ
ຈະຕ້ອງມີພື້ນຖານການຈັດຕັ້ງປະຕິບັດວຽກງານດັ່ງກ່າວ..

ຜູ້ຖືກກະທົບໂຄງການ(ຖກຄ) ຈະຖືກນຳສະເໜີຕໍ່ ຄປຊ ແລະ ຖກຄ ຈະຕ້ອງແຕ່ງຕັ້ງຜູ້ຕາງໜ້າກຸ່ມ
ເຊັ່ນດຽວກັບ ອົງການປະຊາສັງຄົມ(ອປສ) ທີ່ຈະຕ້ອງນຳສະເໜີຕໍ ຄປຊ.
ຜູ້ພັດທະນາໂຄງການຈະຕ້ອງມີການນຳສະເໜີບົດໂຄງການເພື່ອຈະສາມາດດຳເນີນການຈັດການແກ້ໄຂ ແລະ
ປັບປຸງບັນດາຄຳແນະນຳ ແລະ ຂໍ້ຮຽກຮ້ອງຕ່າງໆໃຫ້ໄດ້ໄວທີ່ສຸດ.

ຄປຊ ຈະຕ້ອງຕິດພັນ ແລະ ໃຫ້ສິດແກ່ ຖກຄ ແລະ ຜູ້ມີສ່ວນຮ່ວມເພື່ອຈະສາມາດເຂົ້າເຖິງບັນຫາ ແລະ
ດຳເນີນການຈັດການແກ້ໄຂໄດ້ໄວ ແລະ ມີປະສິດທິພາບ.

ໄລຍະການດຳເນີນງານ:

ໄລຍະດຳເນີນງານແມ່ນຊ້ວງອາຍຸການທັງໝົດຂອງໂຄງການ ແລະຈະຕ້ອງມີ ຜຄສ. ຜຄສ
ຈະຕ້ອງລວມມີລາຍລະອຽດໃນການຄຸ້ມຄອງບໍລິຫານຜົນກະທົບຂອງໂຄງການ.

ໃນໄລຍະການດຳເນີນການໂຄງການຈະຕ້ອງມີການດຳເນີນການຕິດຕາມການເກີດມົນລະພິດຈາກການດຳເນີນ
ງານໂຄງການ. ເຊິ່ງອາດຈະລວມມີ ມົນລະພິດທາງ ອາກາດ, ທາງສຽງ, ທາງທົ່ວທັດ ຫຼື ມົນລະພິດທາງນ້ຳ.
ໂຄງການຈະຜະລິດສິ່ງເສດເຫຼືອ ທີ່ລວມມີສິ່ງເສດເຫຼືອທີ່ສາມາດນຳກັບມານຳໃຊ້ຄືນ, ສິ່ງເສດເຫຼືອທົ່ວໄປ
ຫຼືເປັນພິດ ຫຼື ສິ່ງເສດເຫຼືອອັນຕະລາຍ.

ຕາຕະລາງທີ 2: ສະຫຼຸບຂັ້ນຕອນສຳຄັນໃນໄລຍະຂອງການມີສ່ວນຮ່ວມຂອງສາທາລະນະໃນຂະບວນການ ປຜສ (EIA)

	ປະເທດກຳປູເຈ້ຍ	ສປປ ລາວ	ປະເທດມຽນມ້າ	ປະເທດໄທ	ປະເທດຫວຽດນາມ
ການກັ່ນຕອງ	ແມ່ນແລ້ວ, ມີໃນພາກປະຕິບັດ.	ບໍ່ມີ	ບໍ່ຈຳເປັນຕ້ອງມີການປຶກສາກັບຜູ້ຖືກຜົນກະທົບຈາກໂຄງການ(ຖກຄ ຫລື PAP) .	ບໍ່ມີຄວາມຈຳເປັນສຳລັບຜູ້ສະເໜີຝັດທະນາໂຄງການ(PP)	ການປະເມີນຄວາມເປັນໄປໄດ້ຄວນລວມມີບາງການປຶກສາຫາລື
ການກຳນົດຂອບການສຶກສາ/ຂອບເຂດໜ້າວຽກ	ມີ.	ມີ. ຜູ້ຖືກຜົນກະທົບຈາກໂຄງການ (ຖກຄ ຫລື PAP) ຈະຕ້ອງມີສ່ວນຮ່ວມໃນຂັ້ນຕອນນີ້.	ແມ່ນແລ້ວ, ມີຄວາມຈຳເປັນ ຢ່າງຊັດເຈນສຳລັບການມີສ່ວນຮ່ວມທາງ ສາທາລະນະ.	ມີ.	ບໍ່ໄດ້ກວດສອບ ກວດຄືນຕໍ່ ປຜສ EIA. ມີຄວາມຈຳເປັນຕ້ອງມີການດຳເນີນການມີສ່ວນຮ່ວມທາງສາທາລະນະ(PP).
ການກະກຽມ	ມີ.	ມີ. ຜູ້ຖືກຜົນກະທົບຈາກໂຄງການ(ຖກຄ ຫລື PAP) ແລະ ຊຸມຊົນທ້ອງຖິ່ນຕ້ອງມີການປຶກສາຫາລືກັນ.	ຂອບເຂດໜ້າວຽກຕ້ອງກຳນົດແຜນລາຍລະອຽດຂອງການ ມີສ່ວນຮ່ວມທາງສາທາລະນະ(PP) ເພື່ອຖືກອະນຸມັດຈາກ ກຊສປ	ມີ, ສອງຄັ້ງສຳລັບ ປຜສຜ.	ມີ, ແຕ່ມີຈຳກັດຂອບເຂດຂອງ ຄຳແນະນຳ.
ການປະເມີນ	ມີ, ເປັນຂໍ້ກຳນົດຂອງ ກະຊວງສິ່ງແວດລ້ອມ ໃຫ້ຈັດກອງປະຊຸມມີສ່ວນຮ່ວມທາງ ສາທາລະນະ	ມີ, ກຊສ /MONRE ຈະຕ້ອງມີການປຶກສາກັບໜ່ວຍງານຕ່າງໆໃນໄລຍະການປະເມີນລວມທັ້ງ ຜຄສ/EMP.	ກຊສປ ຈະຕ້ອງ ຈັດປະຊຸມການມີສ່ວນຮ່ວມທາງສາທາລະນະ(PP) ແລະ ການຮັບຟັງຄຳເຫັນ.	ຊ່ຽວຊານທົບທວນ ກວດ ສອບ ແລະອາດຈະຈັດປະຊຸມສາທາລະນະ ທີ່ເປັນຂໍ້ກຳນົດຂອງການ ປຜສຜ.	ບໍ່ຊັດເຈນ ວ່າ ມີຕ້ອງມີ ການຈັດກອງປະຊຸມອັນໃດຕື່ມສຳລັບການມີສ່ວນຮ່ວມ ທາງສາທາລະນະ(PP) ໃນໄລຍະການປະເມີນນີ້.
ການຮັບຮອງ	ບໍ່ມີຄວາມຈະແຈ້ງ ຖ້າມີການຮັບຮອງແລ້ວ ວ່າເປັນເອກະສານທາງສາທາລະນະ . ປຜສ(EIA) ແລະ ບຮສ(ECC) ຍັງບໍ່ທັນເປັນເອກ		ຮສຄ ຈະຕ້ອງ ເຜີຍແຜ່ ແລະ ລວມທັ້ງບົດ ຜຄສ.	ມີການຮັບຮອງເຜີຍແຜ່ ເອກະສານ ແລະຈະລວມເຂົ້າ ໃນ ຜຄສ.	ປຜສ EIA ຈະຕ້ອງຖືກຈັດໃຫ້ມີການຮັບຮອງ.

	ะสานທາງສາທາລະນະ.				
ການຕິດຕາມ	ມີ, ຜູ້ຖືກຜົນກະທົບຈາກໂຄງການ(ຖກຄ ຫລື PAP ຄວນຈະມີສ່ວນຮ່ວມເຂົ້າໃນກົນໄກການຮ້ອງທຸກ	ມີ, ຊຸມຊົນຈະຕ້ອງມີສ່ວນຮ່ວມເຂົ້າໃນ ຜຄສ/EMP.	ບໍ່ມີຄວາມການຮ້ອງຂໍໃຫ້ມີສ່ວນຮ່ວມຂອງຊຸມຊົນ.	ມີບົດລາຍງານທີ່ກຳນົດຢູ່ໃນ ຫນທສ ONEP ແລະ ມີບັນຂະແໜງການທີ່ອະນຸມັດ.	
ຂໍ້ບັງຄັບຂອງຂະບວນການ ປຜສ ຈາກຜູ້ທີ່ຖືກຜົນກະທົບໂຄງການ	ບໍ່	ບໍ່.	ບໍ່.	ຜົນລະເມືອງສາມາດຍື່ນໃຫ້ສານພິຈາລະນາດຳເນີນຄະດີຕໍ່ສານໄດ້	ບໍ່.

ຂໍ້ກຳນົດທີ່ຕ້ອງການປະຕິບັດຕາມ ພັນທະ ປຜສພ ຂອງລັດຖະທຳມະນູນປະເທດໄທ 2550 (2007)
ການຕັດສິນຂອງສານປົກຄອງສູນກາງ ເລກທີ.1352/2552

- **ພາກສ່ວນ:** ສະມາຄົມຕ້ານໄພໂລກຮ້ອນ ແລະ 42ໂຈດຂອງ ຄະນະສິ່ງແວດລ້ອມແຫ່ງຊາດ ແລະ 7 ຜູ້ຖືກກ່າວຟ້ອງ.
- **ສະຫຼຸບຫຍໍ້ສະພາບຕົວຈິງ:** ລັດຖະທຳມະນູນປະເທດໄທ 2550 (2007)ໄດ້ເຂົ້າມາມີຜົນບາດຂໍ້ບັງຄັບ ໃນວັນທີ 24 ສິງຫາ 2007. ຄຳຖາມໄດ້ຖືກສະເໜີໃນເວລາທີ່ຜູ້ຖືກກ່າວຟ້ອງມີໜ້າທີ່ໃນການພິຈາລະນາ ວ່າໂຄງການຫຼືກິດຈະການທີ່ເຮັດໃຫ້ເກີດມີຜົນກະທົບຕໍ່ຊັບພະຍາກອນທຳມະຊາດ ຫຼືສິ່ງແວດລ້ອມຂອງຊຸມຊົນຫຼືສຸຂະພາບຂອງປະຊາຊົນຫຼືບໍ່?. ຖ້າຫາກມີຜົນກະທົບທີ່ສອດຄ່ອງກັບມາດຕາທີ67 ຂອງລັດຖະທຳມະນູນ ຜູ້ທີ່ຖືກກ່າວຟ້ອງຈຳຕ້ອງດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສຸກຂະພາບ(ປຜປສພ) ຜູ້ຖືກກ່າວຟ້ອງ ແມ່ນຜູ້ທີ່ຖືກກ່າວວ່າມີການລະເລີຍຕໍ່ຂໍ້ກຳນົດຂອງ ປຜສພ ແລະ ໄດ້ຮັບຢ່າງນ້ອຍ 76 ຂໍອະນຸມັດ ສຳລັບໂຄງການ/ກິດຈະການ ທີ່ອາດຈະເປັນເຫດໃຫ້ເກີດຜົນກະທົບຕໍ່ຊຸມຊົນ, ມີການນຳໃຊ້ຂັ້ນຕອນທີ່ຖືກປັບປຸງກ່ອນການອອກຂໍ້ບັງຄັບໃຊ້ຂອງລັດຖະທຳມະນູນສະບັບນີ້.
- **ບັນຫາທາງດ້ານກົດໝາຍ:** ຖ້າຫາກ 76 ການອະນຸມັດໄດ້ຖືກມອບໃຫ້ເຈົ້າຂອງທຸລະກິດຫຼັງຈາກ ລັດຖະທຳມະນູນປະເທດໄທ 2007 ທີ່ມີຂໍ້ບັງຄັບທີ່ບໍ່ສອດຄ່ອງກັບຄວາມຕ້ອງການໃນມາດຕາ 67 ຂອງລັດຖະທຳມະນູນ 2007 ຫຼືບໍ່?
- **ການຕັດສິນ:** ສານປົກຄອງກາງ ໄດ້ອີງໃສ່ລັດຖະທຳນູນ 2007.ການປະຕິບັດທາງດ້ານລະບຽບກົດໝາຍ,ການບໍລິຫານ ແລະ ຕຸລາການຈະຕ້ອງສອດຄ່ອງກັບ ຂໍ້ກຳນົດຂອງກົດໝາຍ. ຍິ່ງໄປກ່ວານັ້ນ, ມາດຕາ 27 ຂອງລັດຖະທຳມະນູນ 2007 ໄດ້ກ່າວວ່າ ສິດ ແລະ ເສລີພາບທີ່ ຮັບຮອງໂດຍລັດຖະທຳມະນູນ ທັງທາງກົງແລະທາງອ້ອມ ຫຼືຮັບຮອງໂດຍສານລັດຖະທຳມະນູນ ທີ່ຈະຕ້ອງຖືກປ້ອງກັນ ແລະຈຳກັດໂດຍກົງທາງດ້ານລະບຽບກົດໝາຍ, ຕຸລາການ, ຫ້ອງການລັດຖະບານ, ໂຄງຮ່າງລັດຖະທຳມະນູນ ແລະ ຕາງໜ້າການປົກຄອງ ທາງດ້ານລະບຽບກົດໝາຍ, ການນຳໃຊ້ ແລະ ການແປເອກະສານກົດໝາຍ. ສານປົກຄອງ ໄດ້ຕິດພັນກັບການປ້ອງກັນສິດທິ ເສລີພາບຂອງປະຊາຊົນ ແລະ ມວນຊົນທີ່ມີຄວາມສົນໃຈຕໍ່ການຢຸດຕິຜົນກະທົບຕໍ່ຊຸມຊົນ, ຕໍ່ຄຸນນະພາບສິ່ງແວດລ້ອມ ແລະ ສຸຂະພາບຂອງປະຊາຊົນ, ທີ່ເກີດຂຶ້ນຢູ່ ມະຫາພຸ ແລະ ພື້ນທີ່ອ້ອມຂ້າງ, ໂດຍຂໍ້ບັງຄັບທີ່ກ່ຽວຂ້ອງຕໍ່ຜູ້ມີສ່ວນຮ່ວມທີ່ຈະຕ້ອງສອດຄ່ອງກັບຂັ້ນຕອນທີ່ບັນທຶກໄວ້ໃນມາດຕາ 67 ວັກທີ 2 ຂອງລັດຖະທຳມະນູນ.
- **ສານປົກຄອງກາງ** ໄດ້ປະຕິເສດການອະນຸມັດ, ທີ່ມີໃນລາຍການຜົນກະທົບໂຄງການ ຫຼື ກິດຈະການ ໂດຍ ລຳດັບຂອງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໃນປີ 2007 ທີ່ລັດຖະທຳມະນູນມີຂໍ້ບັງຄັບທີ່ບໍ່ສອດຄ່ອງກັບຂັ້ນຕອນທີ່ບັນທຶກໄວ້ໃນ ມາດຕາ 67 ວັກທີ 2 ຂອງ ລັດຖະທຳມະນູນ ປີ 2007.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ບົດແນະນຳ

ກົດໝາຍປົກປັກຮັກສາສິ່ງແວດລ້ອມ, 1999 (ກປປສ 1999)ໄດ້ສ້າງຮ່າງໜ້າວຽກສຳລັບການຄຸ້ມຄອງບໍລິຫານຊັບພະຍາກອນສິ່ງແວດລ້ອມ ພ້ອມກັບຈຸດປະສົງຂອງການສະຫງວນໄວ້ ແລະ ອຳນວຍຄວາມສະດວກໃນການນຳໃຊ້ຊັບພະຍາກອນແບບຍືນຍົງ. ເຊິ່ງໄດ້ປັບປຸງຈາກກົດໝາຍປົກປັກຮັກສາສິ່ງແວດລ້ອມ, 2012 041/ສພ (ກປປສ 2012).

ກອງປະເມີນຜົນກະທົບສິ່ງແວດລ້ອມ ແລະ ສັງຄົມ(ປຜສສ) ຂອງກະຊວງຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ(ກຊສ)ຮັບຜິດຊອບໃນການຄຸ້ມຄອງການຈັດຕັ້ງປະຕິບັດຂອງຂະບວນການ ປຜສ. ກຊສ ອອກໃບຮັບຮອງຄວາມສອດຄ່ອງຕໍ່ສິ່ງແວດລ້ອມ (ບຮຮສ) ສຳລັບໂຄງການທີ່ໄດ້ຮັບຜົນສຳເລັດໃນການປະຕິບັດຕາມຂະບວນການ ປຜສ ແລະ ການປະສານງານກັບຕົວແທນທີ່ກ່ຽວຂ້ອງ (DPRAs) ເພື່ອດຳເນີນການຕິດຕາມກວດກາ(ຄວາມສອດຄ່ອງ) ແລະ ຕີລາຄາ. ຜູ້ສະເໜີໂຄງການຈະຕ້ອງນຳສົ່ງບົດລາຍງານການຕິດຕາມໃຫ້ ກຊສ ທີ່ອີງຕາມແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ (ຜຄຕສ).[46]

- ກົດໝາຍປົກປັກຮັກສາສິ່ງແວດລ້ອມ *(ສະບັບປັບປຸງ)* ເລກທີ.29/ສພ, 2012*;*
- ຄຳແນະນຳຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ເລກທີ8029/ກຊສ, 17 ທັນວາ 2013;
- ຄຳແນະນຳຂະບວນການສຶກສາຜົນກະທົບຕໍ່ສິ່ງແວດລ້ອມເບື້ອງຕົ້ນຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ ເລກທີ8029/ກຊສ, 17 ທັນວາ 2013*;* ແລະ
- ຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ເລກທີ8030/ກຊສ, 17 ທັນວາ 2013.

ລັດ ຖະທຳມະນູນຂອງ ສປປ ລາວ ເລກທີ 63/ສພ

ມາດຕາທີ 17:
ທຸກອົງການ ແລະ ພົນລະເມືອງຈະຕ້ອງປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ: ທີ່ດິນ, ໃຕ້ດິນ, ປ່າໄມ້, ສັດປ່າ, ຊັບພະຍາກອນທາງນ້ຳ ແລະ ຊັ້ນບັນຍາກາດ.

ພາຍໄຕ້ກົດໝາຍປົກປັກຮັກສາສິ່ງແວດລ້ອມ ກປປສ 2012 ທີ່ ມີພັນທະຕໍ່ການປົກປັກຮັກສາສິ່ງແວດລ້ອມ ໃນມາດຕາທີ 3 ແລະ 7 ແລະ ຈະຕ້ອງດຳເນີນ ປຜສ ໃນຂໍ້ກຳນົດ ຂອງມາດຕາທີ 17 ແລະ 22 ແລະ ໄອອີອີ ໃນມາດຕາທີ 21.

[46] Wayakone, 2012, p. 1658.

ເຊິ່ງມີການປ່ຽນແປງບາງຈຸດໃນລະບົບການປະເມີນຜົນກະທົບສິ່ງແວດລ້ອມ ຢູ່ໃນ ສປປ ລາວ ໃນທົດສະວັດທີ່ຜ່ານມາ. ຄັ້ງທຳອິດທີ່ປະກາດໃຊ້ລະບຽບການ ປະເມີນສິ່ງແວດລ້ອມໃນປີ 2000 ແລະ ຖືກປັບປຸງຂຶ້ນເປັນ ປຜສ.
ດຳລັດໃນປີ 2010, ສປປ ລາວ ໄດ້ສ້າງດຳລັດ ວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, 2010 (ດຳລັດ ປຜສ *2010).*[47]
ເຊິ່ງໄດ້ເຫັນດີໃຫ້ກວມລວມບັນດາບັນຫາແລະຄາດຄະເນຜົນໄດ້ຮັບທີ່ຕ່າງກັນໃນແຕ່ລະຊ່ວງໄລຍະຂອງຂະບວນການ ປຜສ(ໄລຍະການກໍ່ສ້າງ, ການດຳເນີນການ ແລະ ການປິດໂຄງການ),ແລະ ໄດ້ກຳນົດອອກເປັນ ສອງ ກຸ່ມໂຄງການລົງທຶນທີ່ຕ້ອງດຳເນີນການປະເມີນຜົນກະທົບທາງສິ່ງແວດລ້ອມແລະ ສັງຄົມ:

- **ກຸ່ມທີ 1:** ແມ່ນໂຄງການລົງທຶນຂະໜາດນ້ອຍ ຫຼື ມີຜົນກະທົບໜ້ອຍຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ແລະ ຕ້ອງດຳເນີນການສຶກສາເບື້ອງຕົ້ນກ່ຽວກັບການຜົນກະທົບສິ່ງແວດລ້ອມ (ໄອອີອີ); ແລະ
- **ກຸ່ມທີ 2:** ແມ່ນໂຄງການລົງທຶນຂະໜາດໃຫຍ່ທີ່ມີຄວາມສັບຊ້ອນ ຫຼື ມີຜົນກະທົບຫຼາຍຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ແລະ ຕ້ອງດຳເນີນການຜີເມີນບົດ ປຜສ (ອີໄອເອ).

ໃນເດືອນ ທັນວາ ປີ 2013 ມີ ສອງ ຄຳແນະນຳທີ່ປະກາດໃຊ້ໂດຍ ກຊສ ເພື່ອປະຕິບັດຕາມຂໍ້ກຳນົດໃນມາດຕາທີ 21 ແລະ 22 ຂອງ ກົດໝາຍປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ) ເລກທີ.2929/ສພ 2012 .
ຄຳແນະນຳຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ເລກທີ8029/ກຊສ, 17 ທັນວາ 2013(ຄຳແນະນຳສິ່ງແວດລ້ອມແລະ ສັງຄົມ ປີ 2013) . ຄຳແນະນຳຂະບວນການສຶກສາຜົນກະທົບຕໍ່ສິ່ງແວດລ້ອມເບື້ອງຕົ້ນຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ ເລກທີ8029/ກຊສ, 17 ທັນວາ 2013; ແລະ ຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ເລກທີ8030/ກຊສ, 17 ທັນວາ 2013.ບັນດາດຳລັບເຫຼົ່ານີ້ຈະປັບປຸງ ທີ່ຈະແຍກອອກເປັນ ບົດສະເພາະ ໃນ ແຕ່ລະຂະບວນການຂອງ ປຜສ ແລະ ສສຕ.

ການຕົກລົງເຫັນດີຮັບຮອງ ແລະ ພັດທະນາລາຍການຂອງໂຄງການລົງທຶນ ແລະ ກິດຈະການອື່ນ ເພື່ອການດຳເນີນ ບົດ ສສຕ ແລະ ປຜສສ, ລາຍການ ປະກອບມີ ປະເພດ,ຂະໜາດຂອງໂຄງການທີ່ລວມມີໃນກຸ່ມ ທີ່ ໜຶ່ງ ແລະ ກຸ່ມທີສອງ. ຕົວຢ່າງເຊັ່ນ ໂຄງການເຂື່ອນພະລັງງານໄຟຟ້າທີ່ໃຫຍ່ກວ່າ 15 MW ແມ່ຕ້ອງດຳເນີນການ ປຜສສ.
ຍິ່ງໄປກວ່ານັ້ນ, ບົດ ປຜສສ ກຳນົດໃຫ້ທຸກໂຄງການທີ່ລວມມີການຍົກຍ້າຍຈັດສັນ ແລະ ການທົດແທນ(ທີ່ບໍ່ສາມາດຄືນສະພາບເດີມທາງຂະໜາດ ແລະ ປະເພດ) ທີ່ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການທົດແທນ ແລະ ແຜນການຍົກຍ້າຍຂອງຜູ້ທີ່ຖືກກະທົບໂດຍໂຄງການພັດທະນາ ເລກທີ 192/ນຍ ຫຼືໂຄງການທີ່ມີແຜນໂຄງການທີ່ຕັ້ງຢູ່ໃນພື້ນທີ່ທີ່ມີຄຸນຄ່າທາງສັງຄົມ ຫຼືສິ່ງແວດລ້ອມ ເຊັ່ນ:ຢູ່ໃນເຂດປ້ອງກັນ ແລະ ປ່າປ້ອງກັນແຫ່ງຊາດ.

ບົດແນະນຳການ ປຜສ 2012 ຂອງ ສປປ ລາວ(ບົດແນະນຳ ປຜສ) [48]
ປະກອບມີຂໍ້ກຳນົດລະອຽດສຳລັບການກະກຽມ ບົດ ປຜສ ຢູ່ໃນ ສປປ ລາວ. ບົດແນະນຳມີທັງໝົດ 140ໜ້າ.

[47] ເລກທີ. 112/ນຍ, 16 ກຸມພາ 2010.
[48] ຕຸລາ 2012.

ບົດແນະນຳ ປຜສ 2012ທີ່ຖືກພັດທະນາໂດຍ ກຊສ ຂອງ ສປປ ລາວ
ຈາກການປຶກສາຫາລືກັບບັນດາຕົວແທນກະຊວງ, ລັດຖະບານຂັ້ນແຂວງ, ຜູ້ພັດທະນາໂຄງການ ແລະ ທີ່ປຶກສາ ປຜສ ແລະ ຜູ້ຊ່ວຍທາງເຕັກນິກຈາກທີມງານຊ່ຽວຊານຂອງບໍລິສັດທີ່ປຶກສາສາກົນ Grontmij ແລະ ສະຖາບັນສິ່ງແວດລ້ອມ (SYKE).

ບົດແນະນຳການ ປຜສ 2012 ໄດ້ອີງຕາມປະສົບການປະຕິບັດຕົວຈິງໃນການກະກຽມ ແລະ ການທົບທວນ ບົດ ປຜສ ໃນສປປ ລາວ, ເຊັ່ນດຽວກັບ ປະເທດອື່ນທີ່ພັດທະນາ ແລະ ປະເທດແຫ່ງອຸສະຫະກຳ.
ບົດແນະນຳເຫຼົ່ານີ້ແມ່ນໄດ້ຖືກປັບປຸງໃນ ເດືອນ ຕຸລາ 2015. ບົດແນະນຳການ ປຜສສ 2015 ແມ່ນກຳລັງຢູ່ໃນຊ້ອງຮ່າງຮູບແບບ.
ບົດແນະນຳການ ປຜສ 2012 ມີການຕິດພັນກັບ ລຳດັບ ປຜສ ຂອງ ສປປ ລາວ ສຳລັບ ໂຄງການທີ່ມີ ຄຸນລັກສະນະ ທີ 2(ເຊັ່ນວ່າ: ໂຄງການທີ່ຖືກກຳນົດວ່າມີຜົນກະທົບຮ້າຍແຮງ ໃນມາດຕາທີ2); ນອກຈັບບົດແນະນຳໃນປະຈຸບັນທີ່ປະກາດໃຊ້ພາຍໄຕ້ດຳລັດ ແລະ ລະບຽບກົດໝາຍອື່ນໆ ແລະ ບົດແນະນຳໃນ ສປປ ລາວ. ບົດແນະນຳ ປຜສ ແມ່ນເປັນທີ່ຮັບຮູ້ໃນ ຄຳແນະນຳ ຂອງ ກຊສ ຂອງ ປຜສສ 2013 (ກຊສສ 2013).
ຮ່າງບົດແນະນຳຂອງ ປຜສ ໃນສປປ ລາວ 2015[49] ປະກອບມີລາຍລະອຽດຂໍ້ກຳນົດສຳລັບການກະກຽມຂອງ ຂະບວນການ ປຜສ ໃນ ສປປ ລາວ.

ຂັ້ນຕອນຂອງການປະເມີນຜົນກະທົບສິ່ງແວດລ້ອມ

ອີງຕາມກົດໝາຍປົກປັກຮັກສາສິ່ງແວດລ້ອມ 2012 ໄດ້ມີຜົນຕໍ່ການປັບປຸງຂໍ້ກຳນົດຂອງ ປຜສ ໃນ ສປປ ລາວ ແລະ ຍັງຕ້ອງປັບປຸງຫຼາຍບົດນິຍາມ.

ມາດຕາ 2. **ສິ່ງແວດລ້ອມ (ປັບປຸງ)**:
ສິ່ງແວດລ້ອມແມ່ນທຸກສິ່ງທຸກຢ່າງທີ່ມີຊີວິດ ແລະ ບໍ່ມີຊີວິດເຊິ່ງເກີດຂຶ້ນຕາມທຳມະຊາດ ແລະ ຫຼືຍ້ອນມະນຸດສ້າງຂຶ້ນ ທີ່ຢູ່ອ້ອມຂ້າງ ເຊັ່ນ: ຄົນ, ສັດ, ພືດ ແລະ ອື່ນໆ ທີ່ມີສາຍກ່ຽວພັນ ແລະ ສິ່ງຜົນສະທ້ອນເຊິ່ງກັນແລະກັນ ທັງທາງບວກ ແລະ ທາງລົບຕໍ່ ການດຳລົງຊີວິດ, ການຜະລິດ, ການຄົງຕົວ, ການຂະຫຍາຍຕົວຂອງມະນຸດ ແລະ ທຳມະຊາດ. ສິ່ງແວດລ້ອມປະກອບມີ ສິ່ງແວດລ້ອມສັງຄົມ ແລະ ສິ່ງແວດລ້ອມທຳມະຊາດ.

ພາກທີ II I ຂອງ ກປປສ 2012 ໄດ້ແນະນຳການກຳນົດໃໝ່ທີ່ຂ້ອງໃຈໃນຜົນກະທົບຕໍ່ສິ່ງແວດລ້ອມ.

ພາກທີ II:I **ຜົນກະທົບທາງສິ່ງແວດລ້ອມ**
ມາດຕາທີ 10. **ຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ(ໃໝ່)**:
ຜົນກະທົບຕໍ່ສິ່ງແວດລ້ອມສັງຄົມແມ່ນຜົນສະທ້ອນທາງລົບ ຕໍ່ຊີວິດ, ສຸຂະພາບ, ຊັບສິນ ແລະ ການດຳລົງຊີວິດປະຈຳວັນຂອງຄົນ ລວມທັງທີ່ຢູ່ອາໄສຂອງປະຊາຊົນ ແລະ ມໍຣະດົກທາງດ້ານວັດທະນະທຳ ແລະປະຫວັດສາດ.
ມາດຕາທີ 11. **ຜົນກະທົບຕໍ່ສິ່ງແວກລ້ອມທຳມະຊາດ(ໃໝ່)**:

[49] October 2012.

ຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດແມ່ນຜົນສະທ້ອນທາງລົບຕໍ່ພື້ນຖານລະບົບນິເວດທຳມະຊາດ, ຊັບພະຍາກອນທຳມະຊາດ, ຊີວະນາໆພັນ, ດິນປູກຝັງ, ແຫຼ່ງນ້ຳ ແລະ ການປ່ຽນແປງດິນຟ້າອາກາດ ລວມທັງມໍຣະດົກທາງດ້ານທຳມະຊາດ.

ໃນມາດຕາທີ 17, ສສຕ ແລະ ປຜສ
ໄດ້ຖືກຈັດເຂົ້າໃນກຸ່ມໃໝ່ຂອງໜ້າວຽກການປົກປັກຮັກສາສິ່ງແວດລ້ອມ.
ໃນບົດນີ້ໄດ້ລວມເອົາການກຳນົດທີ່ກ່ຽວກັບ ຍຸດທະສາດໃນການປະເມີນຜົນກະທົບສິ່ງແວດລ້ອມ (ມາດຕາທີ 19), ການສຶກສາເບື້ອງຕົ້ນ(ສສຕ)ກ່ຽວກັບການຜົນກະທົບສິ່ງແວດລ້ອມ (ມາດຕາທີ 21), ການປະເມີນຜົນກະທົບສິ່ງແວດລ້ອມ ປຜສ (ມາດຕາທີ 22), ແລະ ການນຳໃຊ້ເຕັກໂນໂລຊີສະອາດ (ມາດຕາທີ 24).

ມາດຕາທີ 21. **ການສຶກສາເບື້ອງຕົ້ນກ່ຽວກັບການຜົນກະທົບສິ່ງແວດລ້ອມ (ໃໝ່)**:
ໄອອີອີ ແມ່ນການສຶກສາ, ສຳຫຼວດ ແລະ
ຄົ້ນຄ້ວາວິໄຈຂໍ້ມູນເພື່ອຄາດຄະເນຜົນກະທົບຕໍ່ສິ່ງແວດລ້ອມທີ່ບໍ່ຮຸນແຮງຊຶ່ງອາດຈະເກີດຂຶ້ນພ້ອມທັງການກຳ
ນົດວິທີການ ແລະ ມາດຕະການທີ່ເໝາະສົມເພື່ອປ້ອງກັນ, ຫຼີກລ້ຽງ
ຫຼືຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມຈາກໂຄງການລົງທຶນຫຼືກິດຈະການຕ່າງໆ ລວມທັງການພິຈາລະ
ນາບັນຫາທີ່ພົວພັນກັບຜົນກະທົບຂອງການປ່ຽນແປງດິນຟ້າອາກາດ.

ໃນການສຶກສາເບື້ອງຕົ້ນກ່ຽວກັບການຜົນກະທົບສິ່ງແວດລ້ອມ ຈະຕ້ອງມີການເຂົ້າຮ່ວມຂອງອົງການຈັດຕັ້ງ,
ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ປະຊາຊົນທີ່ຈະໄດ້ຮັບຜົນກະທົບໂດຍກົງ ແລະ
ທາງອ້ອມຈາກໂຄງການລົງທຶນຫຼືກິດຈະການຕ່າງໆ.

ຂະບວນການດຳເນີນການສຶກສາເບື້ອງຕົ້ນກ່ຽວກັບການຜົນກະທົບສິ່ງແວດລ້ອມ ຈາກໂຄງການລົງທຶນ
ແລະກິດຈະການຕ່າງໆໃຫ້ປະຕິບັດຕາມລະບຽບການສະເພາະ.

ມາດຕາທີ 22. **ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (ປັບປຸງ)**:
ປຜສ
ແມ່ນຂະບວນການວິໄຈບັນຫາເພື່ອຄາດຄະເນຜົນກະທົບຊຶ່ງອາດຈະເກີດຂຶ້ນຕໍ່ສິ່ງແວດລ້ອມສັງຄົມແລະ
ທຳມະຊາດຈາກໂຄງການລົງທຶນ
ຫຼືຈາກກິດຈະການຕ່າງໆລວມທັງການພິຈາລະນາບັນຫາທີ່ພົວພັນກັບຜົນກະທົບຂອງດິນຟ້າອາກາດຊຶ່ງຕ້ອງເ
ຮັດເປັນບົດລາຍງານ. ຄຽງຄູ່ກັບບົດລາຍງານດັ່ງກ່າວຕ້ອງສ້າງແຜນຄຸ້ມຄອງ ແລະ
ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ.

ບົດລາຍງານ ແລະ ແຜນການດັ່ງກ່າວຕ້ອງໄດ້ຮັບການຮັບຮອງຈາກກະຊວງຊັບພະຍາກອນທຳມະຊາດ
ແລະສິ່ງແວດລ້ອມກ່ອນຈະດຳເນີນການກໍ່ສ້າງໂຄງການລົງທຶນ ຫຼື
ຈາກກິດຈະການຕ່າງໆ.ຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ
ທຳມະຊາດຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆໃຫ້ປະຕິບັດຕາມລະບຽບສະເພາະ.

ກຳນົດການໃໝ່ກໍ່ໄດ້ເພີ້ມຕື່ມລາຍລະອຽດຂອງການມີສ່ວນຮ່ວມຂອງສາທາລະນະ.

ມາດຕາທີ 48. **ການມີສ່ວນຮ່ວມຂອງສາທາລະນະ(ໃໝ່)**:
ການສ້າງແຜນຄຸ້ມຄອງສິ່ງແວດລ້ອມຮອບດ້ານ,ການປະເມີນຜົນກະທົບແບບຍຸດທະສາດ,
ການປະເມີນຜົນກະທົບສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ, ການສ້າງແຜນຄຸ້ມຄອງ ແລະ
ຕິດຕາມສິ່ງແວດລ້ອມ, ການຄວບຄຸມມົນລະພິດ ແລະ ອື່ນໆ ຕ້ອງມີການເຂົ້າຮ່ວມຂອງການຈັດຕັ້ງ,
ອົງການປົກຄອງທ້ອງຖິ່ນ ແລະ ປະຊາຊົນ ທີ່ກ່ຽວຂ້ອງໂດຍສະເພາະຜູ້ທີ່ຖືກກະທົບໂດຍກົງ ຫຼື
ທາງອ້ອມຈາກໂຄງການລົງທຶນ ຫຼື ກິດຈະການອື່ນໆ.

ມາດຕາທີ 2.14 ແລະ 2.15, ກຊສ ປຜສສ 2013,
ກຳນົດລາຍລະອຽດຂອງການມີສ່ວນຮ່ວມຂອງສາທາລະນະ ເຂົ້າໃນ ປຜສ.

ຮ່າງບົດແນະນຳ ປຜສ 2015
ໄດ້ກຳນົດໄວ້ວ່າໃນຮອບວຽງການວາງແຜນຂອງໂຄງການທົ່ວໄປທີ່ຈະດຳເນີນການໄປພ້ອມໆກັບຂະບວນການ ປຜສ ທີ່ຈະປະກອບມີໃນແຕ່ລະໄລຍະດັ່ງລຸ່ມນີ້:

- ກ່ອນການສຶກສາຄວາມເປັນໄປໄດ້;
- ການສຶກສາຄວາມເປັນໄປໄດ້;
- ການອອກແບບ ແລະ ການຈັດຊື້-ຈ້າງ;
- ກ່ອນການກໍ່ສ້າງ;
- ການກໍ່ສ້າງ ຫຼືການສຳຫຼວດການຂຸດຄົ້ນ;
- ການດຳເນີນການ; ແລະ
- ການຮື້ຖອນ, ການປິດໂຄງການ ແລະ ການຫຼັງການປິດໂຄງການ.

ສປປ ລາວ ໄດ້ຮັບຮອງເອົາຂັ້ນຕອນຂອງຂະບວນການຂອງ ປຜສ ດັ່ງລຸ່ມນີ້:

1. ການກັ່ນຕອງໂຄງການ;
2. ການກຳນົດຂອບເຂດການສຶກສາ
3. ການກະກຽມບົດລາຍງານ ປຜສສ ແລະ ຜຄຕສສ
4. ການທົບທວນຄືນ ແລະ ການປະເມີນຜົນຂອງບົດລາຍງານ ປຜສສ
5. ການຮັບຮອງ ຫຼື ການປະຕິເສດບົດ ປຜສສ ແລະ ຜຄຕສສ
6. ການຄຸ້ມຄອງການກໍ່ສ້າງແລະການດຳເນີນງານ; ແລະ
7. ການຕິດຕາມໂຄງການ, ຄວາມສອດຄອງ ແລະ ຂໍ້ບັງຄັບ.

ໃນແຕ່ໄລຍະຂອງໂຄງການ, ຜູ້ສະເໜີໂຄງການຈະຕ້ອງດຳເນີນກິດຈະກຳການກວດສອບ ແລະ ປຶກສາຫາລືຕໍ່ການຫຼຸດຜ່ອນຜົນກະທົບທາງສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການ.

ລະບົບການປະເມີນ ປຜສສ ໃນ ສປປ ລາວ ແມ່ນກາລວມເອົາ ພາລະບົດບາດຂອງ ປຜສສ ທີ່ເປັນເຄື່ອງມືການຕັດສິນໃຈ ກັບ ພາລະໜ້າທີ່ທີ່ມີການຮັບຮອງຫຼື ການອະນຸມັດເປັນດັ່ງເຄື່ອງມືທາງດ້ານສິ່ງແວດລ້ອມແລະສັງຄົມ.
ເຄື່ອງມືໃນການຕັດສິນໃຈ, ລະບົບການ ປຜສສ ຈະຊ່ວຍໃຫ້ ກຊສ ສາມາດຕັດສິນໃນການປະກອບບົດ ປຜສສ ແລະ ຜຄຕສສ ຂອງໂຄງການລົງທຶນ ຫຼືກິດຈະການ ທີ່ຄວນມີດັ່ງລຸ່ມນີ້:

- ຮັບຮອງເອົາພື້ນຖານຂອງຜົນກະທົບສິ່ງແວດລ້ອມທີ່ອາດຈະເກີດຂຶ້ນ ພ້ອມກັບສະເໜີມາດຕະການຫຼຸດຜ່ອນເຂົ້າໃນບົດລາຍງານ ປຜສສ; ຫຼື
- ການພິຈາລະນາການປັບປຸງ ແລະ ການນຳສິ່ງຄືນໃໝ່ເພື່ອການທົບທວນຄືນອີກເທື່ອໜຶ່ງ ແລະ ເພື່ອການຮັບຮອງ; ຫຼື
- ປະຕິເສດກໍລະນີຜົນໄດ້ຮັບຈາກການສຶກສາ ປຜສສ ແລະ ຈາກການທົບທວນຄືນ ບົດ ປຜສສ ແລະ ຜຄຕສສ ທີ່ສະແດງໃຫ້ເຫັນວ່າໂຄງການ ຫຼືກິດຈະການດັ່ງກ່າວມີຜົນກະທົບທີ່ຮ້າຍແຮງຫຼາຍຕໍ່ສິ່ງແວດລ້ອມ ແລະ ສັງຄົມທີ່, ບໍ່ສາມາດຫຼີກລ້ຽງ ແລະ ບໍ່ສາມາດ ຫຼຸດຜ່ອນ; ຫຼືໃນກໍລະນີທີ່ໂຄງການແລະ

ກິດຈະການທີ່ບໍ່ສອດຄອງກັບນະໂຍບາຍສິ່ງແວດລ້ອມແຫ່ງຊາດ
ຫຼືແຜນຍຸດທະສາດຂອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ເຄື່ອງມືໃນການອະນຸມັດ, ລະບົບການ ປຜສສ ທີ່ໃຫ້ອຳນາດຕໍ່ ກຊສ ໃນການຕັດສິນໃຈຕໍ່:

- ການອອກໃບຮັບຮອງຄວາມສອດຄອງຕໍ່ສິ່ງແວດລ້ອມ(ECCs) ເພື່ອເປັນການອະນຸມັດບົດ ປຜສສ ແລະ ຜຄຕສສ. ECCs
  ເປັນຂໍ້ບັງຄັບເພື່ອການຮັບຮອງເອົາການອະນຸຍາດໃນການລົງທຶນການກໍ່ສ້າງແລະ
  ດຳເນີນໂຄງການຫຼືກິດຈະການໃດໜຶ່ງ ທີ່ບັນທຶກເຂົ້າໃນລາຍການຕັດສິນຂອງຄະນະລັດຖະມົນຕີ
  ເລກທີ. 8056/ກຊສ ໃນກຸ່ມທີ2 ວ່າດ້ວຍໂຄງການ ແລະ ກິດຈະການ;
- ຄວາມສອດຄ່ອງຕໍ່ຂໍ້ບັງຄັບ ກັບເງື່ອນໄຂສະເພາະໃນ
  ການຮັບຮອງຄວາມສອດຄ່ອງທາງສິ່ງແວດລ້ອມ; ແລະ
- ການອະນຸຍາດທີ່ບໍ່ມີຄວາມຖືກຕ້ອງສອດຄ່ອງຕ່າງໆແມ່ນຈະຖືກປັບໄໝ ແລະ
  ຍຸດຊົ່ວຄ່າວແລະຈະບໍ່ໄດ້ຮັບການຮັບຮອງຄວາມສອດຄອງທາງສິ່ງແວດລ້ອມ.[50]

ຮ່າງບົດແນະນຳ ປຜສ ໃນປີ 2015 ໄດ້ກຳນົດລາຍລະອຽດຂອງຂະບວນການ ປຜສ ໂດຍລວມດັ່ງນີ້:

> ບົດ ປຜສ ແມ່ນຂໍ້ກຳນົດທາງດ້ານລະບຽບກົດໝາຍຕໍ່ທຸກໂຄງການ
> ທີ່ຈະກໍ່ໃຫ້ເກີດຜົນກະທົບທາງລົບຕໍ່ສິ່ງແວດລ້ອມ ແລະ/ຫຼື ສັງຄົມ. ສະນັ້ນ ບົດ ປຜສ
> ຈຶ່ງເປັນເຄື່ອງມືສຳຄັນທາງດ້ານລະບຽບກົດໝາຍທີ່ກຳນົດແລະຫຼຸດຜ່ອນຜົນກະທົບທາງສິ່ງແວດລ້ອມ ແລະ
> ສັງຄົມ ແລະ ເພື່ອຮັບຮອງວ່າມີຈັດຕັ້ງປະຕິບັດການຄຸ້ມຄອງ ແລະ
> ມີມາດຕະການໃນການຫຼຸດຜ່ອນຜົນກະທົບທີ່ເໝາະສົມ.
>
> ບົດ ປຜສ ຈະພິຈາລະນາບັນຫາທາງສິ່ງແວດລ້ອມໃນທຸກຊ້ວງໄລຍະຂອງໂຄງການ ລວມທັງ
> ການອອກແບບ, ການຈັດຊື້ຈັດຈ້າງ ໃນຊ້ວງໄລຍະ ກ່ອນການກໍ່ສ້າງ, ໄລຍະການກໍ່ສ້າງ, ການດຳເນີນງານ,
> ການຮື້ຖອນ, ການປິດໂຄງການ ແລະ ຫຼັງການປິດໂຄງການ. ບົດ ປຜສ
> ຈະຊ່ວຍໃຫ້ຜູ້ພັດທະນາໂຄງການກະກຽມໂຄງການໄປພ້ອມດຽວກັນກັບການຄຳນຶງເຖິງຜົນກະທົບທາງສິ່ງແ
> ວດລ້ອມ ໂດຍປາດສະຈາກໄພຂົ່ມຂູ່ຕໍ່ຄວາມເປັນໄປໄດ້ທາງດ້ານເຕັກນິກແລະເສດຖະກິດ.
>
> ບົດ ປຜສ ຈະພິຈາລະນາ ທຸກອົງປະກອບຂອງຄຸນລັກສະນະທາງຊີວະພາບ, ກາຍຍະພາບ, ສັງຄົມ,
> ເສດຖະກິດ, ສຸຂະພາບ, ວັດທະນະທຳ ແລະ ທົ່ວທັດທຳມະຊາດ ຂອງສິ່ງແວດລ້ອມ
> ທີ່ອາດຖືກກະທົບຈາກໂຄງການ. ເຊິ່ງໄດ້ມີການສະເໜີຄວາມເປັນໄປໄດ້ໃນການວິເຄາະ ແລະ
> ກຳນົດການພົວພັນ ແລະ ການເຊື່ອມໂຍງລະຫວ່າງປັດໃຈທີ່ມີຜົນສະທ້ອນຕໍ່ລະບົບນິເວດ, ຊັບພະຍາກອນ
> ແລະ ຄຸນນະພາບການດຳລົງຊີວິດຂອງປະຊາຊົນ ແລະ ຊຸມຊົນຕ່າງໆ.[51]

ຮ່າງບົດແນະນຳ ປຜສ ໃນປີ 2015
ໄດ້ລວມມີລາຍລະອຽດຂອງຄຳນິຍາມເພື່ອຊ່ວຍເຂົ້າໃນການຈັດຕັ້ງປະຕິບັດການ ປຜສ .

[50] ບົດແນະນຳການ ປຜສສ, ບໍລິມາດທີ 1, ມິຖຸນາ 2015 (ຮ່າງ), ກຊສ, ສປປ ລາວ.
[51] ຮ່າງບົດແນະນຳການ ປຜສສ *2015*, ໜ້າ.83.

ແບບຢ່າງການປະຕິບັດ ໝາຍເຖິງການປະຕິບັດທີ່ຜູ້ພັດທະນາໂຄງການຈະຕ້ອງສັນຍາ ວ່າຈະມີການປັບປຸງ ຂໍ້ກຳນົດນຳໃຊ້ທາງລະບຽບກົດໝາຍ ທີ່ຍັງບໍ່ຄຳນຶງເຖິງ ຂໍ້ຕົກລົງເຫັນດີຂອງຜູ້ມີສວ່ນຮ່ວມທີ່ກ່ຽວຂ້ອງ ທີ່ລວມມີ ລັດຖະບານ, ອົງການທາງອຸສະຫະກຳ, ພະນັກງານກຳມະກອນ, ສະຖາບັນການເງິນ ແລະການສຶກສາ ໂດຍການດຳເນີນການຂອງກຸ່ມບໍລິສັດທີ່ສອດຄ່ອງຕໍ່ມາດຕະຖານສາກົນ ແລະ ທີ່ຮັບຜິດຊອບໂດຍຜູ້ພັດທະນາໂຄງການ;
ຈະຮັບເອົາການປັບປຸງອື່ນໆທີ່ຈະຫຼຸດຜ່ອນຜົນກະທົບທາງລົບທີ່ອາດຈະເກີດຂຶ້ນຈາກໂຄງການ ແລະ ກິດຈະການອື່ນໆ.

ຄຳນິຍາມຈະລວມມີການຢືນຢັນຕໍ່ການມີສ່ວນຮ່ວມຂອງສາທາລະນະດັ່ງນີ້:

ການມີສ່ວນຮ່ວມໝາຍເຖິງຂະບວນການປຶກສາຫາລື ແລະ ການເຜີຍແຜ່ຂໍ້ມູນໃນໂຄງການລົງທຶນທີ່ຈະເກັບກຳຄຳແນະນຳຈາກປະຊາຊົນ ຫຼືກຸ່ມຄົນຜູ້ທີ່ອາດຈະຖືກກະທົບ, ຜູ້ທີ່ຫາຜົນປະໂຫຍດ ຫຼືຜູ້ທີ່ສົນໃຈໃນໂຄງການ.

ຄຳແນະນຳຈະຖືກນຳໃຊ້ເຂົ້າເປັນເອກະສານອ້າງອີງໃນການກະກຽມ ແລະ ພິຈາລະນາວ່າຈະດຳເນີນການສຶກສາການປະເມີນບົດ ສຶກສາສິ່ງແວດລ້ອມເບື້ອງຕົ້ນ (ໄອອີອີ) ຫຼື ບົດປະເມີນຜົນກະທົບສິ່ງແວດລ້ອມແລະສັງຄົມ(ອີໄອເອ) ຫຼື ແຜນຄຸ້ມຄອງຕິດຕາມສິ່ງແວດລ້ອມ ແລະ ສັງຄົມ(ESMMP).ການມີສ່ວນຮ່ວມສາມາດເປັນຮູບແບບຂອງການປະຊຸມກັບຜູ້ມີສ່ວນຮ່ວມໃນທຸກລະດັບ ຫຼື ກັບຜູ້ທີ່ອາດຈະໄດ້ຮັບຜົນກະທົບການໂຄງການລົງທຶນໃນທຸກຊ່ວງໄລຍະຂອງໂຄງການ.

ຜູ້ຖືກກະທົບໂຄງການອາດເປັນພຽງບຸກຄົນທົ່ວໄປ ທີ່ມີສິດທາງດ້ານລະບຽບກົດໝາຍ ຫຼື ອົງກາດຈັດຕັ້ງທີ່ຖືກກະທົບໂດຍທາງກົງ ແລະ ທາງອ້ອມ ຫຼືອາດຈະຖືກກະທົບຈາກໂຄງການລົງທຶນ. ປະຊາຊົນອາດຖືກກະທົບຈາກການລະບຽບການເວນຄືນທີ່ດິນ ຫຼື ຊັບສິນ, ການປ່ຽນແປງລັກສະນະພື້ນທີ່ ແລະ ຜົນກະທົບຕໍ່ລະບົບນິເວດ ແລະ ສິ່ງແວດລ້ອມໃນຂົງເຂດພື້ນທີ່ອາໃສນັ້ນໆ.
ຜູ້ມີສ່ວນຮ່ວມແມ່ນ ບຸກຄົນ,ກຸ່ມຄົນ ຫຼືຊຸມຊົນພາຍນອກທີ່ຈະເປັນຈຸດສູນກາງການດຳເນີນຂອງໂຄງການ ທີ່ເຂົ້າເຈົ້າອາດຖືກກະທົບໂດຍໂຄງການ ຫຼື ສົນມຈໃນໂຄງການ. ເຊິ່ງອາດຈະລວມມີ ທັງ ບຸກຄົນສ່ວນຕົວ, ກຸ່ມທຸລະກິດ, ຊຸມຊົນ ຫຼື ລັດຖະບານທ້ອງຖິ່ນ(IFC, 2012).

ໜຶ່ງໃນບັນຫາສຳຄັນຂອງບົດ ປຜສສ 2013 ຂອງ ກຊສ ແມ່ນການສຸມໃສ່ການກັ່ນຕອງ ແລະ ການກຳນົດຂອບເຂດການສຶກສາ. ເຊິ່ງວ່າການກັ່ນຕອງ ແລະ ການກຳນົດຂອບເຂດການສຶກສາ ແມ່ນຍັງບໍ່ມີການກຳນົດທີ່ລະອຽດໃນ ບົດ ປຜສສ 2013 ຂອງ ກຊສ.

ການກັ່ນຕອງໂຄງການແມ່ນ ການສຶກສາ ແລະ ວິເຄາະຂໍ້ມູນຂອງບົດສະເໜີໂຄງການລົງທຶນທັງໝົດ ທີ່ຈະເປັນຕົວກຳນົດວ່າໂຄງການຈະຕ້ອງດຳເນີນການສຶກສາບົດ ສສຕ (ໄອອີອີ), ຫຼືບົດ ປຜສ(ອີໄອເອ).

ການກຳນົດຂອບເຂດສຶກສາຂະບວນການຂອງການສັງລວມຂອບເຂດຂອງການປະເມີນຜົນກະທົບສິ່ງແວດລ້ອມ(ໄອອີອີ) ຕົວຢ່າງເຊັ່ນ: ຂໍ້ມູນທີ່ຈະຕ້ອງເກັບກຳ ແລະ

ວິເຄາະເພື່ອການປປະເມີນຜົນກະທົບຂອງໂຄງການລົງທຶນຕໍ່ສິ່ງແວດລ້ອມ.
ຈຸດປະສົງຫຼັກຂອງຂະບວນການກຳນົດຂອບເຂດການສຶກສາແມ່ນຜົນຈາກການຮ່າງ
ຂອບເຂດໜ້າວຽກທັງໝົດ(TOR) ເພື່ອການກະກຽມບົດ ປຜສ.

ບົດແນະນຳ ປຜສ 2015 ໄດ້ກຳນົດໜ້າທີ່ຮັບຜິດຊອບຫຼັກຂອງຜູ້ພັດທະນາໂຄງການ, ລວມມີ:

- ນຳສະເໜີຮູບແບບການລົງທຶນໃຫ້ ກຊສ ເພື່ອການກຳນົດຂະໜາດ ແລະ ປະເພດຂອງໂຄງການ;
- ກະກຽມຂອບເຂດການສຶກສາແລະຮ່າງ ຂອບເຂດໜ້າວຽກທັງໝົດ(TOR)ເພື່ອການກະກຽມບົດ ປຜສ.
- ກະກຽມບົດ ປຜສ(ໄອອີອີ), ຜຄຕສສ(ESMMP), ແລະ ແຜນພັດທະນາອື່ນໆ;
- ດຳເນີນການຈັດປະຊຸມການມີສ່ວນຮ່ວມຂອງຊຸມຊົນໃນຊ້ວງໄລຍະການກະກຽມບົດ ປຜສ;
- ລວບລວມມາດຕະການຫຼຸດຜ່ອນໃນການອອກແບບ ແລະ ເອກະສານການຈັດຊື້ຈັດຈ້າງ;
- ປັບປຸງບົດ ຜຄຕສສ ໃນແຕ່ລະໄລຍະ, ປະຕິບັດມາດຕະການຫຼຸດຜ່ອນໃນຊ້ວງໄລຍະກ່ອນການກໍ່ສ້ງ, ການກໍ່ສ້າງ, ການດຳເນີນໂຄງການ ແລະ ການຮື້ຖອນ, ການປິດໂຄງການ ແລະ ຫຼັງການປິດໂຄງການ; ແລະ
- ດຳເນີນການຕິດຕາມກວດກາ ແລະ ກວດສອບກິດຈະກຳຕ່າງໆທີ່ສະເໜີໄວ້ໃນບົດ ຜຄຕສສ.[52]


ບົດທີ 2.1 ຂອງຮ່າງແນະນຳ ປຜສ, 2015 ທີ່ມີລາຍລະອຽດຂອງຂະບວນການ ປຜສ. ໃນຂະບວນການ ປຜສ ແມ່ນຮຽຮ້ອງໃຫ້ສຳເລັດ ການກັ່ນຕອງ, ການກຳນົດຂອບເຂດການສຶກສາ ແລະ ຮ່າງຂອບເຂດໜ້າວຽກ ຂອງ ກິດຈະກຳ EIA ກ່ອນການກະກຽມບົດລາຍງານ ປຜສ. ສຳລັບການກັ່ນຕອງໂຄງການ, ຜູ້ພັດທະນາຈະຕ້ອງນຳສະເໜີບົດລົງທຶນໃຫ້ ກຊສ..
ຜູ້ພັດທະນາຈະຕ້ອງນຳໃຊ້ລາຍການກຳນົດປະເພດ ແລະ ຂະໜາດໂຄງການເພື່ອກະກຽມບົດ ປຜສ, ແລະ ຈະຕ້ອງພິຈາລະນາເຖິງຜົນກະທົບທີ່ສຳຄັນທີ່ອາດຈະເກີດຂຶ້ນຈາກໂຄງການ. ກຊສ ຈະຕັດສິນໂຄງການຕາມຂໍ້ມູນທີ່ຜູ້ພັດທະນາໂຄງການສະເໜີມາ ວ່າໂຄງການນັ້ນໆຈະຕ້ອງດຳເນີນການ ສສຕ ຫຼື ປຜສ.

ໃນຊ້ວງໄລຍະການກຳນົດຂອບເຂດໂຄງການ,
ຜູ້ພັດທະນາໂຄງການຈະຕ້ອງກະກຽມບົດການກຳນົດຂອບເຂດການສຶກສາ ແລະ ລາຍລະອຽດຂອງຂອບເຂດໜ້າວຽກ(TOR) ເພື່ອກະກຽມບົດ ປຜສ.[53] ບົດທີ ສາມ ຂອງ ຮ່າງບົດ ປຜສ 2015 ໄດ້ລວມເອົາວິທີການກະກຽມ ບົດກຳນົດການສຶກສາຂອບເຂດ ແລະ ລາຍລະອຽດຂອງຂອບເຂດໜ້າວຽກ. ກຊສ ຈະປັບປຸງ, ແນະນຳ ແລະ ຮັບຮອງເອົາບົດສຶກສາກຳນົດການສຶກສາຂອບເຂດ ແລະ (TOR)ກ່ອນທີ່ຜູ້ພັດທະນາໂຄງການຈະເລີ້ມການກະກຽມບົດ ປຜສ. ການກະກຽມບົດ ປຜສ, ຜຄຕສ ແລະ ແຜນພັດທະນາ ຈະຕ້ອງມີການດຳເນີນການປຶກສາຫາລືກັບຂະແໜງການທ້ອງຖິ່ນ ແລະ ຜູ້ທີ່ຖືກກະທົບ.

ຮ່າງບົດ ປຜສ 2015 ຈະບັນຍາຍລາຍລະອຽດຂອງຂະບວນການປຶກສາຫາລື. ຮູບທີ 3 [54]

[52] ຮ່າງບົດແນະນຳການ ປຜສສ 2015, ໜ້າທີ.23.
[53] MI ພາກທີ II, ການກັ່ນຕອງ ແລະ ກຳນົດຂອບເຂດສຶກສາ.
[54] ຮ່າງບົດແນະນຳການ ປຜສສ 2015, ໜ້າທີ.15

ໄດ້ຊີ້ໃຫ້ເຫັນເຖິງຄວາມສຳຄັນຂອງຂັ້ນຕອນການດຳເນີນງານໃນຊ່ວງໄລຍະການກະກຽມບົດ ປຜສ, ໂດຍສະເພາະ ການມີສ່ວນຮ່ວມຂອງສາທາລະນະ. ກຊສ ຈະດຳເນີນການທົບທວນທັງວຽກງານການບໍລິຫານ ແລະ ວຽກງານທາງເຕັກນິກຂອງບົດ ປຜສ, ຜຄຕສສ ແລະ ແຜນພັດທະນາຕ່າງໆ ເພື່ອປະກອບເຂົ້າທັງຄຳແນະນຳຂອງ ກຊສ ແລະ ບັນດາຊ່ຽວຊານພາຍນອກ.



ຮູບທີ່ 1 ພາບລວມຂອງຂະບວນການ ປຜສສ ທີ່ສະເໜີແຕ່ໃນຊ້ວງການພັດທະນາຈົນເຖິງອອກໃບຮັບຮອງ ຕໍ່ບິດ ປຜສສ ແລະ ຜຄຕສສ [55]

ການກັ່ນຕອງ:

ຂັ້ນຕອນການກັ່ນຕອງແມ່ນດຳເນີນຕາມບົດແນະນຳການກັ່ນຕອງຂອງ ກຊສ ໃນປີ 2013.

ການກຳນົດຂອບເຂດສຶກສາ:

ການກຳນົດເຂດສຶກສາເປັນໄລຍະທຳອິດໃນການກະກຽມການສຶກສາບົດ ປຜສ.[56]
ຜູ້ພັດທະນາໂຄງການຈະຕ້ອງຮັບຜິດຊອບໃນການກະກຽມບົດກຳນົດຂອບເຂດສຶກສາ ແລະ ຮ່າງຂອບເຂດໜ້າວຽກ (TOR) ສຳລັບກະກຽມການສຶກສາ ປຜສ, ຫຼັງຈາກສຳເລັດການກະກຽມ, ເອກກະສານຈະຖືກນຳສົ່ງໃຫ້ ກຊສ ເພື່ອໃຫ້ຄຳແນະນຳ ແລະ ຮັບຮອງເອົາ ພາຍໃນກຳນົດເວລາ 15 ວັນ ຕາມມາດຕາທີ່ 2.4 ຂອງ ບົດແນະນຳ ປຜສສ ຂອງ ກຊສ ປີ 2013.

ຂັ້ນຕອນການກຳນົດຂອບເຂດການສຶກສາຂອງບົດໂຄງການ[57] ແມ່ນຈະອີງຕາມຈຸດປະສົງດັ່ງລຸ່ມນີ້:

- ກຳນົດເຂດການສຶກສາ, ພື້ນທີ່ທີ່ຖືກກະທົບ, ໄລຍະຂອບເຂດໂຄງການ, ໄລຍະການພັດທະນາໂຄງການ, ແລະ ຜູ້ທີ່ມີສ່ວນຮ່ວມ;
- ເລີ້ມທຳຄວາມເຂົ້າໃຈໃນລະບຽບການ, ກົດໝາຍ ແລະ ມາດຕະຖານ, ແລະ ອີງປະກອບໃນການອອກແບບໂຄງການ ແລະ ສຳເລັດການ ປຜສ;
- ກຳນົດໃຫ້ຄຳນິຍາມຂອງຜົນກະທົບທາງສິ່ງແວດລ້ອມ, ແນ່ໃສ່ບັນຫາສະເພາະທາງດ້ານສິ່ງແວດລ້ອມ, ສັງຄົມ ແລະ ສຸກະພາບເພື່ອປະກອບເຂົ້າໃນບົດ ປຜສ;
- ກຳນົດຕົວຊີ້ວັດທີ່ເປັນປັດໄຈສຳຄັນຫຼັກຂອງການສຳຫຼວດບົດ ປຜສ ລວມທັງ ຂໍ້ມູນພື້ນຖານ ແລະ ຂໍ້ມູນທີ່ຈຳເປັນຕໍ່ການສຳຫຼວດ ແລະ ຈະຕ້ອງດຳເນີນການຮຽນຮູ້ວິທີການເກັບກຳຂໍ້ມູນການສຶກສາແລະການສຳຫຼວດ;
- ກຳນົດໃຫ້ມີໂອກາດຂອງທີ່ປຶກສາ, ອຳນາດການປົກຄອງທີ່ກ່ຽວຂ້ອງ, ຜູ້ພັດທະນາ, ຜູ້ທີ່ຖືກກະທົບແລະ ຜູ້ທີ່ສົນໃຈພາຍນອກ ເຂົ້າມາມີສ່ວນຮ່ວມໃຫ້ຄຳຄິດເຫັນຕໍ່ບົດສະເໜີໂຄງການກ່ອນການດຳ ເນີນຂະບວນການ ປຜສ;
- ສາມາດເຂົ້າເຖິງຂະບວນການທີ່ມີປະສິດທິຜົນໃນຂັ້ນຕອນການປະເມີນຜົນ ທີ່ສາມາດຈຳກັດເວລາ ຊັບພະຍາກອນ ແລະ ງົບປະມານ, ແລະ ຫຼີກລ້ຽງການລ້າຊ້າ, ແລະ
- ກຳນົດເຂດຊຸມຊົນທີ່ອາດຈະຖືກກະທົບ ແລະ ຜູ້ມີສ່ວນຮ່ວມອື່ນໆທີ່ສົນໃຈໃນໂຄງການພັດທະນານີ້.

ໃນໄລຍະການກຳນົດຂອບເຂດການສຶກສາ, ຜົນກະທົບທີ່ສຳຄັນຕໍ່ສິ່ງແວດລ້ອມ ແລະ ຄວາມສ່ຽງຂອງໂຄງການຈະຖືກກຳນົດໃນລັກສະນະເບື້ອງຕົ້ນ.
ໃນຊ້ວງການກຳນົດຂອບເຂດແມ່ນຈະສ້າງໂຄງຮ່າງໜ້າວຽກຂອງກິດຈະກຳ ແລະ

[55] ຮ່າງບົດແນະນຳການ ປຜສສ *2015*, ໜ້າທີ.15.
[56] *MI 2013*, ມາດຕາທີ 2.3.
[57] ຮ່າງບົດແນະນຳການ ປຜສ 2015, ໜ້າທີ.24.

ຜົນກະທົບທີ່ຕ້ອງການການກວດສອບໃນຊ້ວງການສຶກສາ ປຜສ.
ໜຶ່ງໃນເຫດຜົນຂອງການກຳນົດຂອບເຂດທີ່ຈຳກັດການກວດສອບຕໍ່ບັນຫາທີ່ສຳຄັນທີ່ສຸດໃນການຕັດສິນທີ່ມີປະສິດທິພາບ, ການຈັດຕັ້ງປະຕິບັດໂຄງການແບບຍືນຍົງ.

ອີ່ງຕາມຮ່າງບົດແນະນຳ ປຜສ 2015 ບົດລາຍງານຂອບເຂດສຶກສາ ຄວນຈະລວມອີງປະກອບຫຼັກດັ່ງລຸ່ມນີ້. ບົດສະເໜີສາລາບານຂອງບົດຂອບເຂດສຶກສາແມ່ນສະເໜີຢູ່ໃນ ຕາລະລາງທີ 3 ຂອງບົດແນະນຳ.

- ການສັງລວມໂດຍຫຍໍ້;
- ລັກສະນະຂອງໂຄງການ;
- ພາບລວມຂອງນະໂຍບາຍ, ລະບຽບການ, ແລະ ໂຄງຮ່າງໜ້າວຽກ
- ລາຍລະອຽດຂອງໂຄງການ ແລະ ທາງເລືອກ;
- ລາຍລະອຽດຂອງສິ່ງແວດລ້ອມ;
- ຜົນກະທົບທີ່ສຳຄັນ ແລະ ມາດຕະການຫຼຸດຜ່ອນ;
- ການມີສ່ວນຮ່ວມຂອງສາທາລະນະ ແລະ ການເຜີຍແຜ່; ແລະ
- ການສະຫຼຸບ ແລະ ການແນະນຳ.

ການກຳນົດຂອບເຂດສຶກສາລຸ່ມນີ້, ກຊສ ຈະທົບທວນຄືນ ບົດລາຍງານຂອບເຂດສຶກສາ ແລະ ຮັບຮອງເອົາຂອບເຂດໜ້າວຽກ ToR.[58]

ການກະກຽມບົດລາຍງານ ປຜສສ
ຜູ້ສະເໜີໂຄງການຈະຕ້ອງກະກຽມບົດ ປຜສສ ທີ່ລວມທັງ ແຜນການຄຸ້ມຄອງ ແລະ ຕິດຕາມສິ່ງແວດລ້ອມແລະສັງຄົມ (ຜຄຕສສ). ບົດ ປຜສສ ຈະຖືກທົບທວນໂດຍ ກຊສ ຮ່ວມກັບ ຕ່າງໜ້າໜ່ວຍງານທີ່ກ່ຽວຂ້ອງເພື່ອດຳເນີນການປະຊຸມປຶກສາຫາລືກັບຜູ້ທີ່ມີສ່ວນຮ່ວມລວມທັງ ຜູ້ທີ່ຖືກກະທົບ, ແລະ ຄຳແນະນຳຈາກພາກສ່ວນເອກະຊົນເຖິງຜູ້ສະເໜີໂຄງການ.
ໃນນີ້ອາດຕ້ອງການການປະເມີນເພີ້ມຕື່ມຖ້າຫາກຕ້ອງມີການຍົກ ຍ້າຍຈັດສັນ.[59]

ຜຄຕສສ ຈະຖືກກະກຽມເປັນພາສາລາວ ແລະ ເພື່ອການທົບທວນ ແລະ ຮັບຮອງເພື່ອອອກໃບຮັບຮອງສິ່ງແວດລ້ອມໂດຍ ກຊສ. ໃບຮັບຮອງຄວາມສອດຄ່ອງສິ່ງແວດລ້ອມເປັນເອກະສານທາງການທີ່ຮັບຮອງເອົາບົດ ປຜສສ ແລະ ຜຄຕສສ. ກຊສ
ສາມາດໂຈະໃບຮັບຮອງສິ່ງແວດລ້ອມຂອງໂຄງການທີ່ບໍ່ສອດຄ່ອງກັບການເງື່ອນໄຂອະນຸມັດ ຫຼື ຜຄຕສສ.

ຂະບວນການທີ່ກ່ຽວຂ້ອງຂ້າງລຸ່ມນີ້ທີ່ຕິດພັນກັບກິດຈະກຳຕ່າງໆ:

- ລາຍລະອຽດໂຄງການ, ແຜນທີ່ ແລະ ການວິເຄາະອີງປະກອບຂອງໂຄງການ ແລະ ທີ່ຕັ້ງຂອງໂຄງການ, ກິດຈະກຳຕ່າງໆ, ການຕິດຕັ້ງ, ຂະບວນການຜະລິດ ແລະ ການນຳໃຊ້ວັດສະດຸ ແລະ ຊັບພະຍາກອນ;

[58] MI 2013, ມາດຕາທີ 2.4
[59] MI ມາດຕາທີ 2.8

- ການກຳນົດ, ສ້າງແຜນທີ່ ແລະ ວິເຄາະການແຜ່ກະຈ່າຍ, ການຂຸດຄົ້ນຊັບພະຍາກອນ ແລະ ການບຸກເບີກອື່ນໆ ແລະ ຄວາມສ່ຽງທີ່ລວມຢູ່ໃນຄຸນລັກສະນະ ແລະ ການແຈກຢາຍສະເພາະຂອງໂຄງການ, ລັກສະນະຊົ່ວຄາວ, ຈຳນວນ ແລະ ສິ່ງອັນຕະລາຍ;
- ການກຳນົດ, ການສ້າງແຜນທີ່ ແລະ ຄຸນລັກສະນະຂອງການວັດສະດຸທຳມະຊາດ ແລະ ສິ່ງແວດລ້ອມສັງຄົມ ທີ່ລວມມີ ຊັບສິນທາງສິ່ງແວດລ້ອມ, ສັງຄົມ, ເສດຖະກິດ, ວັດທະນະທຳ, ສະພາບຂອງຊັບສິນ ແລະ ກິດຈະກຳທີ່ກຳລັງດຳເນີນຢູ່ ແລະ ກຳລັງວາງແຜນ; ການກຳນົດ, ວິເຄາະ, ແລະ ໄຈ້ແຍກ ຜົນກະທົບໂຄງການ ແລະ ຄວາມສ່ຽງຂອງທຳມະຊາດອ້ອມຂ້າງ ສິ່ງແວດລ້ອມສັງຄົມລວມທັງການກຳນົດຜົນກະທົບ ແລະ ຄວາມສ່ຽງທີ່ສຳຄັນ;
- ການກຳນົດ ແລະ ຊີ້ແຈງທາງລະບຽບກົດໝາຍ ແລະ ຂໍ້ກຳນົດໃນສັນຍາ ແລະ ຂໍ້ກຳນົດອື່ນທີ່ກ່ຽວຂ້ອງກັບ i) ການແຜ່ກະຈາຍ, ການນຳໃຊ້ຊັບພະຍາກອນ ແລະ ການບຸກລຸກອື່ນໆ; ແລະ ii) ການຈຳແນກຜົນຕອບຮັບທາງສິ່ງແວດລ້ອມທຳມະຊາດ ແລະ ສິ່ງແວດລ້ອມສັງຄົມ; ແລະ
- ການສະເໜີ ແລະ ອອກແບບ ມາດຕະການຫຼຸດຜ່ອນທີ່ເໝາະສົມເພື່ອຮັບຮອງວ່າຜົນກະທົບ ແລະຄວາມສ່ຽງຈະຖືກຫຼຸດຜ່ອນຕາມແຕ່ລະບູລິມະສິດ: ການຫຼກລ້ຽງ, ການຫຼຸດຜ່ອນ, ການຟື້ນຟູ ຫຼື ທົດແທນ; ແລະ ທຸກກຳລະນີເພື່ອຮັບຮອງວ່າສອດຄ່ອງກັບທຸກລະບຽບການ ແລະ ຂໍ້ກຳນົດໃນສັນຍາ.[60]

ການເຂົ້າເຖິງຂໍ້ມູນຂ່າວສານ:

ກົດໝາຍປົກປັກຮັກສາສິ່ງແວດລ້ອມ 2012 ໄດ້ລວມຂໍ້ກຳນົດທີ່ກວມລວມເອົາການເຂົ້າເຖິງຂໍ້ມູນຂ່າວສານ.

> **ມາດຕາທີ 47. ການບໍລິການໃຫ້ຂໍ້ມູນທາງສິ່ງແວດລ້ອມ(ໃໝ່):** ຂະແໜງການທາງຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມຈະພັດທະນາຂໍ້ມູນ ແລະ ໃຫ້ບໍລິການເພື່ອຮັບຮອງການມີສ່ວນຮ່ວມສາທາລະນະສາມາດກຳນົດໄດ້ຕາມລະບຽບກົດໝາຍ.
>
> ບຸກຄົນ, ຮ່າງລະບຽບກົດໝາຍ ແລະ ອົງການຈະສາມາດເຂົ້າເຖິງຂໍ້ມູນຂ່າວສານ.

ອີກຢ່າງໜຶ່ງ, ມາດຕາທີ16 ແລະ 20 ຂອງກົດໝາຍສື່ສານ 2008 ອະນຸຍາດໃຫ້ປະຊາຊົນລາວມີສິດເຂົ້າເຖິງຂໍ້ມູນຂ່າວສານຂອງເຫດການທີ່ກຳລັງເກີດຂຶ້ນພາຍໃນປະເທດ. ມາດຕາທີ 2.20 ຂອງ ປຜສສ ຂອງ ກຊສ ປີ 2013 ໄດ້ກຳນົດລາຍລະອຽດຂອງຂໍ້ມູນທີ່ຕ້ອງການເພື່ອເຜີຍແຜ່ ລວມມີ ບົດ ປຜສສ, ຜຄຕສສ ແລະ ງົບປະມານຂອງ ປຜສສ ແລະ ທຸກຂໍ້ມູນທີ່ຕ້ອງການເຜີຍແຜ່ໂດຍ ກຊສ. ການເຜີຍແຜ່ເປັນທັງພາສາລາວກາງ ແລະ ພາສາລາວທ້ອງຖິ່ນ. ການກຳນົດການອະນຸຍາດເຂົ້າເຖິງຂໍ້ມູນຂ່າວສານແມ່ນຈະຂຶ້ນກັບ ກຊສ ທີ່ອີງຕາມການຮຽກຮ້ອງຂອງຜູ້ສະເໜີໂຄງການເຊັ່ນກັນ. ບໍ່ມີຂໍ້ກຳນົດວ່າຈະຕ້ອງມີຂໍ້ມູນເປັນພາສາອັງກິດ.

ໃນດຳລັດ ປຜສ ໄດ້ກຳນົດໃຫ້ຜູ້ສະເໜີໂຄງການຕ້ອງສະໜອງຂໍ້ມູນຂ່າວສານໃຫ້ຜູ້ທີ່ມີສ່ວນຮ່ວມທີ່ເປັນພາສາແລະ ຮູບແບບທີ່ສາມາດເຂົ້າໃຈໄດ້ງ່າຍເພື່ອອຳນວຍຄວາມສະດວກໃນການປຶກສາຫາລືກັບບັນດາກຸ່ມຄົນທີ່ຖືກກະທົ

[60] ຮ່າງບົດແນະນຳການ ປຜສ 2015, ໜ້າທີ.31.

ບໂດຍໂຄງການ, ອົງການຈັດຕັ້ງປະຊາສັງຄົມ ແລະ ອົງການທີ່ບໍ່ຂຶ້ນກັບລັດຖະບານ
ທີ່ຕິດພັນຢູ່ໃນພື້ນທີ່ໂຄງການ. ໃນບົດແນະນ ປຜສ
ຍັງກຳນົດໃຫ້ຜູ້ສະເໜີໂຄງການຕ້ອງໃຫ້ເວລາຜູ້ມີສ່ວນຮ່ວມຢ່າງພຽງພໍໃນການທົບທວນຄືນ ແລະ
ເຂົ້າໃຈໂຄງການ ແລະ ບັນຫາ ທີ່ຈະເຮັດໃຫ້ເຂົາເຈົ້າສາມາດເຂົ້າຮ່ວມການປຶກສາຫາລືຢ່າງມີປະສິດທິຜົນ.

ສຳລັບການປະຊຸມມີສ່ວນຮ່ວມທາງສາທາລະນະ,
ໂຄງການຈະຕ້ອງກຳນົດບັນດາຂໍ້ມູນໂຄງການໃຫ້ຜູ້ທີ່ມີຖືກກະທົບແລະ ຜູ້ມີສ່ວນຮ່ວມ
ທີ່ຈະຕ້ອງລວມທັງບົດລາຍງານຂອບເຂດການສຶກສາ ແລະ ເອກະສານນຳສະເໜີຕ່າງໆ.
ຂໍ້ມູນດັ່ງກ່າວຈະຕ້ອງເປັນພາສາລາວ ແລະ ອັງກິດ[61]. ເຊິ່ງບໍ່ມີໃນມາດຕາທີ່ທຽບເທົ່າໃນ ບົດແນະນຳ ປຜສສ
ຂອງ ກຊສ ປີ 2013.

ອີງຕາມບົດແນະນຳ ປຜສສ
2015,ການເຜີຍແຜ່ຂໍ້ມູນຂ່າວສານເປັນພາກສ່ວນທີ່ມີຄວາມສຳຄັນໃນຂະບວນການປະຕິບັດໂຄງການ
ທັງໃນຊ້ວງໄລຍະການກໍ່ສ້າງ, ການດຳເນີນໂຄງການ ແລະການຮື້ຖອນ, ການປິດ ແລະ ຫຼັງການປິດໂຄງການ.
ໃນໄລຍະການກໍ່ສ້າງ, ຜູ້ພັດທະນາໂຄງການຈະຕ້ອງກະກຽມ ແລະ
ເຜີຍແຜ່ເອກະສານຂໍ້ມູນທີ່ກ່ຽວກັບກິດຈະກຳໂຄງການ. ຂໍ້ມູນຂ່າວສານທີ່ຈະນຳໄປເຜີຍແຜ່ຈະຕ້ອງຊຸມໃສ່
ລະດັບທ້ອງຖິ່ນ ແລະ ຂັ້ນແຂວງ.

ບົດແນະນຳ ປຜສສ 2015 ກຳນົດໄວ້ວ່າ ທຸກຂໍ້ມູນຂ່າວສານຈະຕ້ອງເປັນພາສາລາວ, ແລະ
ຈະບໍ່ຂຽນໃນຮູບແບບເຕັກນິກເພື່ອໃຫ້ແນ່ໃຈວ່າປະຊາຊົນຈະສາມາດເຂົ້າໃຈໄດ້ງ່າຍ.[62]

ໃນບົດແນະນຳ ປຜສສ 2015,
ລະບຸວ່າຈະຕ້ອງສືບຕໍ່ການປຶກສາຫາລືກັບສາທາລະນະໃນຕະຫຼອດໄລຍະກະກຽມບົດ ປຜສ.
ຜູ້ສະເໜີໂຄງການຈະຕ້ອງເຂົ້າໃຈເຖິງຂະບວນການປຶກສາຫາລືໃນລະຫວ່າງການສຶກສາ ປຜສ
ທີ່ຈະຕ້ອງຕິດພັນກັບຊຸມຊົນທີ່ຖືກກະທົບ ແລະ ຜູ້ມີສ່ວນຮ່ວມຂອງໂຄງການ.
ການປຶກສາຫາລືຄວນຈະເລີ້ມຕົ້ນດຳເນີນຕັ້ງແຕ່ເລີ້ມທຳອິດເທົ່າທີ່ເປັນໄປໄດ້ ໃນຂະບວນການ ປຜສ.[63].

ໃນມາດຕາທີ 12 ແລະ 13 ຂອງດຳລັດ ສປປ ລາວ
ວ່າດ້ວຍການທົດແທນແລະການຍົກຍ້າຍຈັດສັນຜູ້ທີ່ຖືກກະທົບໂດຍໂຄງການ[64]ໄດ້ອະທິບາຍຕື່ມຄວາມຕ້ອງກາ
ນທີ່ກ່ຽວພັນກັບການຍົກຍ້າຍຈັດສັນແລະການທົດແທນ. ບົດແນະນຳການມີສ່ວນຮ່ວມທາງສາທາລະນະ
(WREA,2011) ການກຳນົດການເຜີຍແຜ່ຂໍ້ມູນ, ການມີສ່ວນຮ່ວມ ແລະ
ກິດຈະກຳການປຶກສາຫາລືຈະຕ້ອງຖືກດຳເນີນໃນຂະບວນການ ປຜສ.[65]

ໂດຍລວມແລ້ວໃນຂັ້ນຕອນການມີສ່ວນຮ່ວມໃນບົດແນະນຳ ປຜສສ ຂອງ ສປປ ລາບ ປີ 2015 ທີ່ຂ້ອງຂ້າງ

[61] ຮ່າງບົດແນະນຳການ ປຜສ 2015.
[62] ຮ່າງບົດແນະນຳການ ປຜສ 2015, ໜ້າທີ.56.
[63] ຮ່າງບົດແນະນຳການ ປຜສ 2015, ໜ້າທີ.56, ຕາຕະລາງທີ 15.
[64] ເລກທີ. 192/ນຍ, 7 ກໍລະກົດ 2005.
[65] ຮ່າງບົດແນະນຳການ ປຜສ 2015.

ຈະສົມບູນ. ທີ່ເລີ່ມຈາກການກຳນົດຂອບເຂດການສຶກສາ ແລະ ສືບຕໍ່ເຖິງການດຳເນີນ ແລະ ສຳເລັດໂຄງການ. ໃນຂອບເຂດສຶກສາຕົວຈິງຂອງການມີສ່ວນຮ່ວມຂອງສາທາລະນະໃນບົດແນະນຳ ປຜສສ ຂອງ ກຊສ ປີ 2013 ແລະ ດຳລັດ ປຜສ ປີ 2010 ແມ່ນຈະຖືກຈຳກັດຕື່ມ.

ການມີສ່ວນຮ່ວມຂອງສາທາລະນະ

ການມີສ່ວນຮ່ວມຂອງສາທາລະນະ ຂອງຜູ້ທີ່ຖືກກະທົບ ແລະ ຜູ້ມີສ່ວນຮ່ວມອື່ນໆ ພາຍໃຕ້ມາດຕາທີ 48 ຂອງ ກົດໝາຍປົກປັກຮັກສາສິ່ງແວດລ້ອມ(ກປປສ) 2012 ແລະ ຖືກກຳນົດລາຍລະອຽດໃນບົດແນະນຳ ປຜສສ ຂອງ ກຊສ ປີ 2013 ໃນມາດຕາທີ 2.14 ແລະ 2.15.
ໃນການກຳນົດແມ່ນມີຄວາມທ່ຽງທຳທີ່ຈຳກັດເຂົ້າໃນການຮັບຮູ້ຂໍ້ມູນກ່ຽວກັບໂຄງການ ແລະ ປະກອບເຂົ້າໃນການປະຊຸມປຶກສາຫາລື. ໃນຂະນະທີ່ຜູ້ສະເໜີໂຄງການຈະຕ້ອງປະຕິບັດຕາມບົດແນະນຳ ປຜສສ ຂອງ ກຊສ ປີ 2013 ມາດຕາ 2.18 ວ່າດ້ວຍການສະໜອງຂໍ້ມູນໃຫ້ ກຊສ , ມາດຕາທີ 2.20 ວ່າດ້ວຍບັນດາລາຍລະອຽດຂໍ້ມູນທາງໂຄງການຈະຕ້ອງສາມາດສະໜອງໃຫ້ຜູ້ທີ່ຖືກກະທົບ ແລະ ຜູ້ທີ່ມີສ່ວນຮ່ວມອື່ນໆ, ເຊິ່ງປະກອບມີ:

- ຂໍ້ມູນກ່ຽວກັບບົດສະເໜີໂຄງການ;
- ຜົນກະທົບທາງສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການ;
- ບົດລາຍງານ ປຜສສ;
- ບົດສະເໜີມາດຕະການຫຼຸດຜ່ອນ;
- ງົບປະມານສະເໜີ ໃນ ຜຄຕສສ; ແລະ
- ການລະເມີດພັນທະຂອງບົດສະເໜີໂຄງການ.

ໂດຍອີງຕາມການປຶກສາຫາລືສາທາລະນະ ໃນ ປຜສ, ມາດຕາ ທີ່ 2.5 ຂອງ ກຊສ ປີ 2013 ແລະ ບົດທີ່ 3.8 ວ່າດ້ວຍການມີສ່ວນຮ່ວມ ແລະ ການເຜີຍແຜ່ຂໍ້ມູນທີ່ຈະຕ້ອງປະກອບເຂົ້າໃນບົດ ປຜສ.[66]
ການມີສ່ວນຮ່ວມສາທາລະນະໃນການກະກຽມບົດ ປຜສ ແມ່ນເປັນພື້ນຖານທີ່ເສີມຂະຫຍາຍຄວາມເຂົ້າໃຈ ແລະ ການຍອມຮັບເອົາໂຄງການ,
ເຂົ້າໃຈເຖິງຄວາມເປັນມາຂອງຜົນກະທົບໂຄງການທີ່ອາດຈະກະທົບໃສ່ເງື່ອນໄຂການດຳລົງຊີວິດ ແລະ ເຊັ່ນດຽວກັນກັບການຈຳແນກຜົນກະທົບ ແລະ
ບັນຫາຈະບໍ່ເຫັນຊັດເຈນໃນໄລຍະເວລາອັນສັ້ນຂອງຊ້ວງການກະກຽມບົດ ປຜສ.

ໃນ ສປປ ລາວ, ຜູ້ພັດທະນາໂຄງການຈະຕ້ອງ ດຳເນີນຂັ້ນຕອນການປຶກສາຫາລືໃນໄລຍະການສຶກສາ ປຜສ ທີ່ຕິດພັນກັບ ຊຸມຊົນທີ່ຖືກກະທົບ ແລະ ຜູ້ມີສ່ວນຮ່ວມ.[67] ອີງຕາມຮ່າງບົດແນະນຳ ປຜສສ ປີ 2015 ການປຶກສາຫາລື
ຈະຕ້ອງດຳເນີນການປະສານສົມທົບກັບທ້ອງຖິ່ນໂດຍສືບຕໍ່ລິເລີ້ມຈາກພື້ນຖານທຳອິດໃນຂະບວນການ ປຜສ ໃຫ້ໄດ້ໄວເທົ່າທີ່ເປັນໄປໄດ້.

ຮ່າງບົດແນະນຳ ປຜສສ ປີ 2015 ໄດ້ກຳນົດສາລະບານ ດັ່ງລຸ່ມນີ້ ທີ່ລວມເອົາ ຂອງ
“ການປຶກສາຫາລືກັບສາທາລະນະ ແລະ ການເຜີຍແຜ່ຂໍ້ມູນ” ທີ່ເປັນພາກສ່ວນໜຶ່ງຂອງຮ່າງບົດ ປຜສ.

---

[66] ຮ່າງບົດແນະນຳການ ປຜສ *2015*, ໜ້າທີ.58, ຕາຕະລາງທີ 15.

[67] MI ມາດຕາທີ 2.12.

ຕາຕະລາງທີ 3: ສາລະບານຫຼັກຂອງການມີສ່ວນຮ່ວມຂອງສາທາລະນະ ແລະ ການເຜີຍແຜ່ຂໍ້ມູນ

ຫົວຂໍ້	**ສາລະບານຫຼັກ**
ວິທີການ	
ຜູ້ມີສ່ວນຮ່ວມ	ຕາຕະລາງປັບປຸງລາຍການ ແລະ ການນຳສະເໜີຂອງຜູ້ມີສ່ວນຮ່ວມ(ອີງຕາມການດຳເນີນການວິເຄາະໃນຊ້ວງໄລຍະການກຳນົດຂອບເຂດການສຶກສາ)
ກິດຈະກຳການປຶກສາຫາລື ແລະ ການເຜີຍ ແຜ່ຂໍ້ມູນ	ຕາຕະລາງ ແລະ ແຜນກຳນົດເວລາ, ໄລຍະໂຄງການ, ທີ່ຕັ້ງ, ແລະ ການມີສ່ວນຮ່ວມເຂົ້າໃນກິດຈະກຳການປຶກສາຫາລື ໃນລະດັບ ບ້ານ/ເມືອງ/ແຂວງ ແລະ ຂັ້ນສູນກາງ. ຕາຕະລາງລາຍການເອກະສານເຜີຍແຜ່, ກຳນົດເວລາ, ວິທີການຂອງການເຜີຍແຜ່ ແລະ ເປົ້າໝາຍຂອງກຸ່ມທີ່ລວມທັງການເຜີຍແຜ່ບົດບັນທຶການປະຊຸມປຶກສາຫາລື.
ຜົນໄດ້ຮັບ	ຈຳແນກບັນຫາ ແລະ ຂໍ້ແນະນຳໂດຍຜູ້ມີສ່ວນຮ່ວມ. ຈັດລຳດັບຄວາມສຳຄັນຂອງບັນຫາທີ່ຈະເກີດຂຶ້ນ, ກຳນົດຜົນໄດ້ຮັບສຸດທ້າຍໃນການແກ້ໄຂບັນຫາທີ່ເກີດຂຶ້ນລວມທັງການແກ້ໄຂຂອງຜູ້ສະເໜີໂຄງການ ແລະ ຂໍ້ສະເໜີແນະຈາກຜູ້ທີ່ມີສ່ວນຮ່ວມບໍ່ວ່າເຂົາເຈົ້າຈະພໍໃຈກັບການຕອບສະໜອງກໍ່ຕາມ.
ລາຍລະອຽດຂອງການປຶກສາຫາລື	ລາຍລະອຽດໃນການດຳເນີນ/ບົດບັນທຶກຂອງກິດຈະກຳການປຶກສາຫາລື ແລະ ລາຍຊື່ລະອຽດຂອງຜູ້ເຂົ້າຮ່ວມ(ເຄົາລົບໃນການບໍ່ປະສົງທີ່ຈະອອກນາມ)ໃນທຸກກິດຈະກຳການປຶກສາຫາລື, ມີການຢັ້ງຢືນຕອບຮັບຈາກປະທານກອງປະຊຸມ ແລະ ຕ່າງໜ້າຜູ້ເຂົ້າຮ່ວມ ເຊິ່ງບັນດາຄຳຄິດເຫັນ ແລະ ຄຳແນະນຳຂອງຜູ້ເຂົ້າຮ່ວມທັງໝົດຈະຕ້ອງຖືກບັນທຶກໄວ້.

ໃນຮ່າງບົດແນະນຳ ປຜສ ປີ 2015, ການມີສ່ວນຮ່ວມສາທາລະນະຖືເປັນການຮັບຜິດຊອບທີ່ສຳຄັນຂອງຜູ້ສະ ເໜີໂຄງການ, ແລະ ເປັນຂັ້ນຕອນທີ່ສຳຄັນຕໍ່ການສ້າງຄວາມອາດສາມາດເຂົ້າໃຈ ແລະ ການຍອມຮັບໂຄງການຈາກຜູ້ມີສ່ວນຮ່ວມ. ການປຶກສາຫາລືສາທາລະນະຈະກຳນົດອີງປະກອບຂອງຄຳແນະນຳ ແລະ ຂໍ້ມູນທີ່ກ່ຽວກັບ “ອີງປະກອບຄຸນຄ່າທາງສິ່ງແວດລ້ອມ” ຂອງຊຸມຊົນທີ່ຖືກກະທົບໂດຍໂຄງ ການ.

ເຊິ່ງໄດ້ສະແດງໃຫ້ເຫັນໃນຮູບພາບ 2.2 ທີ່ ໃນ ສປປ ລາວ ມີການປຶກສາຫາລືສາທາລະນະ ທີເຫັນໄດ້ຕາມແນວທາງຂອງການປຶກສາຫາລື ແລະ ເປັນໜຶ່ງໃນສ່ວນປະກອບຂອງຂັ້ນຕອນການປະເມີນບົດ ປຜສ.
ຂັ້ນຕອນໃນການປຶກສາຫາລື ແມ່ນເປັນກິດຈະກຳທີ່ຕໍ່ເນື່ອງຕະຫຼອດຮອບວຽນການປະຕິບັດໂຄງການ. ບົດລາຍງານການກຳນົດຂອບເຂດການສຶກສາຈະຕ້ອງກຳນົດຂະບວນການປຶກສາຫາລືໃນອານາຄົດຂອງໜ້າວຽກດັ່ງລຸ່ມນີ້:

- ຈຸດປະສົງຂອງການປຶກສາຫາລືໃນໄລຍະການກະກຽມບົດລາຍງານ ປຜສ;
- ຜູ້ເຂົ້າຮ່ວມຈະຕ້ອງຕິດພັນໃນການປຶກສາຫາລືຄັ້ງຕໍ່ໃນອານາຄົດ ; ແລະ
- ການເຜີຍແຜ່ຂໍ້ມູນ

ຂະບວນການປຶກສາຫາລືສາທາລະນະຈະດຳເນີນຕາມສະພາບການຕົວຈິງທີ່ຈະສາມາດກຳນົດລະອຽດໃນ ສີ່ ໄລຍະສຳຄັນ ເຊິ່ງແຕ່ລະຊ້ວງໄລຍະມີຄວາມສຳຄັນຕິດພັນກັບໄລຍະຕໍ່ໄປດັ່ງນີ້:

- ການເກັບກຳຂໍ້ມູນ:
  ການເກັບຂໍ້ມູນພື້ນຖານຈາກສາທາລະນະເພື່ອເປັນຫຼັກຖານອ້າງອີງໃນການປະກອບເຂົ້າໃນບົດປະເມີນ ຜົນກະທົບຕໍ່ສິ່ງແວດລ້ອມແລະ ສັງຄົມ;
- ການເຜີຍແຜ່ຂໍ້ມູນ: ໂຄງການຈະຕ້ອງສະໜອງຂໍ້ມູນໃຫ້ ຜູ້ມີສ່ວນຮ່ວມ
- ການປຶກສາຫາລື: ຜູ້ມີສ່ວນຮ່ວມຈະມີສິດໃນການອອກຄຳຄິດເຫັນຂອງເຂົາເຈົ້າຕໍ່ກັບໂຄງການ; ແລະ
- ຜູ້ເຂົ້າຮ່ວມ: ການເພີ່ມຕື່ມການປຶກສາຫາລື
  ທີ່ຜູ້ມີສ່ວນຮ່ວມກາຍເປັນສ່ວນໜຶ່ງໃນຂະບວນການອອກແບບ ແລະ
  ປະຕິບັດໂຄງການ(ມາດຕະການຫຼຸດຜ່ອນ, ກິດຈະກຳພັດທະນາຊຸມຊົນ ແລະ ອື່ນໆ) ແລະ
  ເປັນສ່ວນໜຶ່ງໃນການຕັດສິນ.

ໃນຂະນະທີ່ຜູ້ສະເໜີໂຄງການຮັບຊາບລະອຽດການຮັບຜິດຊອບໃນການປຶກສາຫາລືສາທາລະນະໃນຊ້ວງໄລຍະ ການກຳນົດຂອບເຂດການສຶກສາ ໃນໄລຍະການກະກຽມ ແລະ ທົບທວນບົດ ປຜສ ແລະ ຜຄຕສສ ຂອງ ກຊສ ແລະ ການປົກຄອງທ້ອງຖິ່ນ, ອົງການທີ່ຮັບຜິດຊອບ ແລະ
ຜູ້ສະເໜີໂຄງການຈະຕ້ອງຈັດປະຊຸມການປຶກສາຫາລື ທັງໃນລະດັບ ບ້ານ ເມືອງ ແລະ ຂັ້ນແຂວງ.
ການປະຊຸມປຶກສາຫາລືນີ້ຈະໃຫ້ໂອກາດສຳລັບຜູ້ທີ່ຖືກກະທົບໂດຍໂຄງການ ແລະ ຜູ້ມີສ່ວນຮ່ວມ ສາມາດສະເໜີຄຳແນະນຳ ແນວຄວາມຄິດ ຕໍ່ແຜນການ ແລະ ບົດລາຍງານຕ່າງໆທັງໃນຮ່າງບົດລາຍງານ ແລະ ບົດລາຍງານສະບັບສຸດທ້າຍ.

ຂະບວນການປຶກສາຫາລືຊຸມຊົນຈະຕ້ອງດຳເນີນຕໍ່ເນື່ອງທັງໃນຊ້ວງໄລຍະການກໍ່ສ້າງ, ການດຳເນີນງານ, ການຮື້ຖອນ, ການປິດ ແລະຫຼັງການປິດໂຄງການ. ບົດ ຜຄຕສສ
ຈະຕ້ອງກຳນົດຂະບວນການປຶກສາຫາລືໃນອານາຄົດໃນໜ້າວຽກດັ່ງນີ້:

- ຈຸດປະສົງຂອງການປຶກສາຫາລືໃນແຕ່ລະໄລຍະ;
- ຄະນະກຳມະການການປຶກສາຫາລື;
- ຄຳຮ້ອງຂໍ ແລະ ກົນໄກໃນການຮັບຟັງການຮ້ອງຂໍ; ແລະ
- ການເຜີຍແຜ່.

ບົດ ປຜສສ ,ກຊສ 2013 ໃນມາດຕາທີ 2.14 ໄດ້ກຳນົດໃຫ້ມີການຜູ້ຖືກກະທົບໂຄງການ ແລະ ຜູ້ມີສ່ວນຮ່ວມເຂົ້າຮ່ວມໃນການຈັດຕັ້ງປະຕິບັດກິດຈະກຳທາງສິ່ງແວດລ້ອມ ແລະ ສັງຄົມ ເຊັ່ນດຽວກັບ ຜຄຕສສ ຂອງໂຄງການລົງທຶນ. ມາດຕາທີ 7 (7) ຂອງດຳລັດ ປຜສ ໄດ້ກຳນົດໃຫ້ ຜູ້ຖືກກະທົບ ແລະ ຜູ້ມີສ່ວນຮ່ວມ ມີສິດແລະໜ້າທີ່ ທີສາມາດຂຽນບົດສະເໜີແນະເພື່ອການແກ້ໄຂ້ບັນຫາທາງສິ່ງແວດລ້ອມ ແລະ ສັງຄົມທີ່ເກີດຈາກໂຄງການລົງທຶນຕໍ່ການປົກຄອງທ້ອງຖິ່ນໃນແຕ່ລະລະດັບ, ຫຼື ສະເໜີໂດຍກົງຕໍ່ ກຊສ ຖ້າຫາກບັນຫາຍັງບໍ່ຖືກແກ້ໄຂ. ເຊິ່ງພາກສ່ວນນີ້ບໍ່ໄດ້ລວມຢູ່ໃນບົດ ປຜສສ ຂອງ ກຊສ ປີ 2013.

ພັນທະຂອງຜູ້ສະເໜີໂຄງການ
ໃນກົດໝາຍປົກປັກຮັກສາສິ່ງແວດລ້ອມ 2012
ຜູ້ສະເໜີໂຄງການຈະຕ້ອງຮັບຜິດຊອບເຖິງຜົນເສຍຫາຍທາງສິ່ງແວດລ້ອມທີ່ເກີດຂຶ້ນຈາກໂຄງການ.
ອີກຢ່າງໜຶ່ງ ມາດຕາ 58 ໄດ້ກຳນົດໃຫ້ມີການຮັບຮອງສະພາບທາງດ້ານການເງິນ ໃນການ “ປ່ອແປ,

ຈັດການມົນລະພິດ ແລະ
ອານາໄມສິ່ງແວດລ້ອມທີ່ຖືກກະທົບຈາກການດຳເນີນງານໂຄງການຕັ້ງແຕ່ເລີ້ມຈົນສຳເລັດໂຄງການ."

ມາດຕາທີ 55. ຄວາມຮັບຜິດຊອບໃນການບຸລະນະຟື້ນຟູສິ່ງແວດລ້ອມ(ໃໝ່):
ບຸກຄົນ, ນິຕິບຸກຄົນ,
ຫຼືການຈັດຕັ້ງທີ່ດຳເນີນໂຄງການລົງທຶນຫຼືກິດຈະການຕ່າງໆທີ່ກໍ່ໃຫ້ເກີດຜົນກະທົບທາງສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ,ຕ້ອງແກ້ໄຂ, ປັບປຸງ, ຟື້ນຟູ ແລະ ຫິດແທນຄ່າເສຍຫາຍໃນເຂດທີ່ໄດ້ຮັບຜົນກະທົບນັ້ນ.

ໃນ ສປປ ລາວ,ໂຄງການລົງທຶນຂອງພາກສ່ວນເອກະຊົນຕ່ໍ້ການນຳໃຊ້ຊັບພະຍາກອນທຳມະຊາດແມ່ນລວມມີ ໂຄງການເຂື່ອນພະລັງງານໄຟຟ້າ, ຂຸດຄົ້ນບໍ່ແຮ່, ແລະ ໂຄງການທາງກະສິກຳ ແລະ ປ່າໄມ້
ແມ່ນຈະຕ້ອງດຳເນີນການກະກຽມສັນຍາສຳປະທານກັບລັດຖະບານ.
ສັນຍາສຳປະທານ(ສສ)ຂອງບັນດາໂຄງການດັ່ງກ່າວ
ຈະຕ້ອງປະກອບດ້ວຍພັນທະສະເພາະທາງດ້ານສິ່ງແວດລ້ອມ ແລະ ສັງຄົມທີ່ຄົບຖ້ວນ. ໂດຍສະເພາະ, ສຳລັບພາກສ່ວນໂຄງການເຂື່ອນໄຟຟ້າ ກຊສ ໄດ້ພັດທະນາ ມາດຕະຖານຂອງພັນທະທາງສິ່ງແວດລ້ອມ ແລະ ສັງຄົມ (SESO) ທີ່ເປັນຮູບແບບພື້ນຖານສຳລັບໂຄງການທີ່ມີພັນທະສະເພາະຕ່ໍສິ່ງແວດລ້ອມ ແລະ ສັງຄົມ ເຂົ້າໃນສັນຍາສຳປະທານຂອງໂຄງການນັ້ນໆ. SESO ມາດຕະຖານ ແລະ
ປະກອບດ້ວຍຂອບເຂດມາດຕະຖານ ແລະ ເງື່ອນໄຂທີ່ຫຼັກການບໍ່ສາມາດຕ່ໍລອງໄດ້ ແຕ່ SESO ກ່ໍຍັງກຳນົດພື້ນທີ່ຫຼືບັນຫາທີ່ເປັນພັນທະທາງສິ່ງແວດລ້ອມແລະ ສັງຄົມ
ທີ່ຈະຕ້ອງປະຕິບັດໃຫ້ແທດເໝາະກັບແບບແຜນສະເພາະ, ການຕິດຕັ້ງ, ແຜນອາບໂດຍລວມ, ທີ່ຕັ້ງໂຄງການ ແລະ ສະພາບລວມທາງສັງຄົມ ແລະ ສິ່ງແວດລ້ອມອ້ອມຂ້າງຂອງໂຄງການນັ້ນໆ.[68]

ຄຳຮ້ອງທຸກ ແລະ ກົນໄກຮັບການຮ້ອງທຸກ

ໃນກົດໝາຍການປົກປັກຮັກສາສິ່ງແວດລ້ອມ ປີ2012 ໄດ້ເພີ້ມຕື່ມໃໝ່ເຂົ້າໃນພາກທີ IX ທີ່ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງ. ກົດໝາຍ ປປສ ໄດ້ຈັດຕັ້ງຂຶ້ນຕາມລຳດັບດັ່ງນີ້:

ພາກທີ IX: ການແກ້ໄຂຂໍ້ຂັດແຍ່ງ
ມາດຕາທີ 71. ຮູບແບບການແກ້ໄຂຂໍ້ຂັດແຍ່ງ(ໃໝ່):
ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບສິ່ງແວດລ້ອມດຳເນີນດ້ວຍຮູບການໃດໜຶ່ງດັ່ງນີ້:
(1) ການປະນີປະນອມໂດຍຄູ່ກໍລະນີ;
(2) ການໄກ່ເກ່ຍ;
(3) ການແກ້ໄຂທາງດ້ານບໍລິຫານ;
(4) ການແກ້ໄຂດ້ວຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
(5) ການຮ້ອງຟ້ອງຕ່ໍສານປະຊາຊົນ;
(6) ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະສາກົນ.

ຄຳແນະນຳທີ່ໃຫ້ຜູ້ສະເໜີໂຄງການຈັດຕັ້ງກົນໄກໃນການຮັບການຮ້ອງທຸກ ແລະ ແກ້ໄຂ (CGM)

[68] ຮ່າງປົດແນະນຳການ ປຜສສ 2015 (ສະບັບປັບປຸງ), ໜ້າທີ.16.

ຕໍ່ກັບບັນຫາທາງສິ່ງແວດລ້ອມ ແລະ ສັງຄົມ ທີ່ຈະເກີດຂຶ້ນໃນຊ່ວງໄລຍະການກໍ່ສ້າງ, ການດຳເນີນງານ ແລະ ການຮື້ຖອນ ການປິດ ແລະ ພາຍຫຼັງການປິດໂຄງການ. ເຊິ່ງໄດ້ແນະນຳໃຫ້ ມີການຈັດການບໍລິຫານກົນໄກ CGM ໂດຍຜູ້ພັດທະນາໂຄງການ ພ້ອມທັງຂະແໜງການລັດຖະບານທ້ອງຖິ່ນທີ່ກ່ຽວຂ້ອງ.

ການນຳສະເໜີ ກົນໄກຮັບການຮ້ອງທຸກ ເປັນຂັ້ນຕອນທີ່ມີຄວາມສຳຄັນຕິດພັນຕໍ່ການດຳເນີນການແກ້ໄຂບັນຫາຂໍ້ຂັດແຍ່ງຂອງຊຸມຊົນ.

ບັນຫາຂ້າມຊາຍແດນຂອງການປະເມີນຜົນສິ່ງແວດລ້ອມ

ບັນດາຮ່າງກົດໝາຍສາກົນທີ່ຄົບວົງຈອນ ຫຼື ສົນທິສັນຍາຂອງລັດຖະບານ ວ່າດ້ວຍການ ປຜສ .[69]
ຫຼັກການທີ 17 ຂອງການປະກາດໃຊ້ລະບຽບການ Rio[70] ທີ່ເປັນບົດລາຍງານທີ່ຊັດເຈນ ແລະ ສຳຄັນຂອງ ການ ປຜສ(ເປັນດັ່ງເຄື່ອງມືແຫ່ງຊາດ) ເພື່ອປະເມີນຜົນກະທົບທີ່ອາດຈະເກີດຂຶ້ນຈາກໂຄງການທີ່ມີຜົນສະ ທ້ອນຮ້າຍແຮງຕໍ່ສິ່ງແວດລ້ອມ. ຕະຫຼອດເຖິງກົດໝາຍ ປຜສ ຂອງທ້ອງຖິ່ນ ທີ່ຖືເອົາຫຼັກການຂອງ Rio ມາປະກອບເຂົ້າໃນການປະເມີນຜົນກະທົບ. ເຊິ່ງມັນໄດ້ສະແດງໃຫ້ເຫັນເຖິງຈຸດບົກຜ່ອງລະຫວ່າງບົດກົດໝາຍ ແລະ ການປະຕິບັດການປະເມີນຜົນກະທົບສິ່ງແວດລ້ອມ.
ບົດສະເໜີສິ່ງແວດລ້ອມທີ່ຄາດຄະເນວ່າຈະມີຜົນກະທົບຂ້າມຊາຍແດນ ແລະ
ບັນຫາຂອງການມີສ່ວນຮ່ວມຂອງສາທາລະນະ.[71]
ວິທີທາງຂອງຜູ້ສະເໜີໂຄງການຕໍ່ການປະສານສົມທົບກັບຜູ້ທີ່ມີສ່ວນຮ່ວມຂອງປະເທດເພື່ອນບ້ານຈຳເປັນຕ້ອງ ມີການພົວພັນຂອງລັດຖະບານລະດັບຊາດ, ເຊັ່ນດຽວກັບການພົວພັນການທູດ ແລະ
ການພິຈາລະນາທາງດ້ານລະບຽບກົດໝາຍ.[72]

ການຮັບຮອງພາຍໄຕ້ກົດໝາຍສາກົນຂອງປະເທດທີ່ມີພັນທະ ວ່າດ້ວຍ
"ການດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມໃນກໍລະນີທີ່ມີຄວາມສ່ຽງຈາກໂຄງການທີ່ໄດ້ນຳສະເໜີ ທີ່ອາດຈະມີຜົນກະທົບທາງລົບທີ່ຮ້າຍແຮງຂ້າມຊາຍແດນ ໂດຍສະເພາະແມ່ນການນຳໃຊ້ຊັບພະຍາກອນ ທຳມະຊາດຮ່ວມກັນ" [73]

ການຕັດສິນໃຈຂອງສານຍຸດຕິທຳສາກົນ(ສຍສ) ໃນກໍລະນີ ຂອງ ປະເທດ ອາເຈນຕິນ້າ ແລະ ຢູລຸກວຍ, ສຍສ ໄດ້ຖືເອົາການ ປຜສ ມາປະຕິບັດ ທີ່ກາຍເປັນພາກສ່ວນໜຶ່ງຂອງ
ກົດໝາຍສາກົນໃນທຸກກໍລະນີຂອງໂຄງການພັດທະນາ ອຸສະຫະກຳຂະໜາດໃຫຍ່
ທີ່ມີການນຳໃຊ້ແຫຼ່ງນ້ຳສາກົນຮ່ວມກັນ
ທີ່ອາດຈະນຳມາເຊິ່ງການສ້າງມົນລະພິດຂ້າມຊາຍແດນອັນເປັນຜົນກະທົບທາງທີ່ສຳຄັນຫຼາຍ.[74]
ເຖິງຢ່າງນັ້ນກໍ່ຕາມ ກໍ່ຍັງບໍ່ມີພັນທະຂໍ້ໃດຂອງການ ປຜສ ໃນດຳລັດໃດ

---

[69] Kersten, ໜ້າທີ.178.

[70] ທຸກສຳມະຊິກຂອງ ASEAN ຍົກເວັ້ນ Brunei ແມ່ນຖືເອົາການນຳໃຊ້ລະບຽບການຂອງ Rio.

[71] ລາຍການຂອງກິດຈະກຳທີ່ຄາດຄະເນວ່າຈະມີຜົນກະທົບຂ້າມຊາຍແດນ, ເຊິ່ງມີການແຈ້ງໃຊ້ຊາບພາຍໄຕ້ສົນທິສັນຍາຂອງ Espoo ທີ່ກຳນົດຢູ່ໃນ ມາດຕາທີ 2 ແລະ 3 ແລະ ເອກະສານຊ້ອນທ້າຍ I ລາຍການຂອງກິດຈະກຳ.
http://www.unece.org/env/eia/about/eia_text.html#appendix1.

[72] Badenoch and WRI, 2002.

[73] ໂຮງງານເຈ້ຍທີ່ໄກ້ແມ່ນ້ຳ ຢູລຸກວຍ(ລະຫວ່າງ ອາເຈັນຕິນ້າ ແລະ ຢູລຸກວຍ) ICJ ຄຳແນະນຳຂອງ ຊ່ຽວຊານ (ຄຳສັ່ງຂອງ 20 ເມສາ, 2010) I.C.J. ບົດລາຍງານ 2010, ທີ່ ພາຣ 204.

[74] ເບິ່ງບົດສຶກສາທີ່ຍັງບໍ່ໄດ້ຖືກຕີພິມຂອງ Remy Kinna, ແລະ McIntyre (2011) ແລະ McIntyre (2010).

ທີ່ຍັງບໍ່ສາມາດເຮັດໃຫ້ທຸກປະເທດເຫັນດີນຳກັນເທື່ອ. ສະແດງໃຫ້ເຫັນວ່າ
ໃນພັນທະໂດຍລວມທີ່ນຳໃຊ້ໃນການດຳເນີນ ປຜສ
ແມ່ນຍັງບໍ່ກວມລວມເອົາຂອບເຂດການສຶກສາດັ່ງກ່າວເທື່ອ.[75]
ບໍ່ມີການກຳນົດສະເພາະດ້ານໃນການມີສ່ວນຮ່ວມ ກັບບັນດາສາທາລະນະທີ່ຖືກກະທົບ.

ໃນພາກພື້ນອາຊີຕາເວັນອອກສ່ຽງໄຕ້(ASEAN) ໄດ້ພະຍາຍາມຈັດຕັ້ງກິດຈະກຳຕ່າງໆ ທີ່ສະແດງໃຫ້ເຫັນເຖິງ
ຜົນກະທົບຂ້າມຊາຍແດນ ເຊັ່ນ: ບັນດາມົນລະພິດ,ຄວັນພິດ, ການຄ້າສັດທີ່ໃກ້ຈະສູນພັນ
ແລະໄພພິບັດທາງທຳມະຊາດ. ເຖິງຢ່າງນັ້ນກໍ່ຕາມ ກິດຈະກຳ ແລະ
ໂຄງການຕ່າງໆແມ່ນສາມາດກວມເອົາໄດ້ພຽງແຕ່ປະເທດດຽວທີ່ມີຜົນກະທົບພົວພັນໄປເຖິງຊາຍແດນຂອງອີກ
ປະເທດໜຶ່ງເທົ່ານັ້ນ. ໃນນີ້ ແມ່ນກວມລວມທັງໂຄງການກໍ່ສ້າງເຂື່ອນພະລັງງານໄຟຟ້າ, ພະລັງງານບໍຖ່ານຫີນ,
ການພັດທະນາສານເຄມີອັນຕະລາຍ ແລະ ໂຄງການອຸສະຫະກຳຫຼືຂຸດຄົ້ນຊັບພະຍາກອນ.
ເຊິ່ງເປັນທີ່ຮັບຮູ້ກັນວ່າບັນດາໂຄງການດັ່ງກ່າວແມ່ນມີຜົນກະທົບຂ້າມຊາຍແດນທີ່ຄວນຈະມີການປະເມີນທີ່ຖື
ກຕ້ອງເໝາະສົມກ່ອນການອະນຸມັດໂຄງການ.

ໃນຂົງເຂດພາກພື້ນແມ່ນ້ຳຂອງ, ໄດ້ມີຫຼາກຫຼາຍຂໍ້ຕົກລົງ ແລະ
ກົນໄກເພື່ອພິຈາລະນາບັນຫາສິ່ງແວດລ້ອມຂ້າມຊາຍແດນ, ແຕ່ຍັງບໍ່ມີການຕົກລົງເຂົ້າໃນຂະບວນການ ປຜສ.
ເຊັ່ນດຽວກັບທີ່ບໍ່ມີແຜນວຽກຂອງພາກພື້ນໃນການ ປຜສ ຂອງການສະເໜີໂຄງການ
ທີ່ມີຜົນກະທົບຂ້າມຊາຍແດນ.
ຄະນະກຳມາທິການແມ່ນ້ຳຂອງ(ຄກມ)ໄດ້ເສີມສ້າງປະສິບການຕໍ່ບັນຫາການຈັດການແຫຼ່ງນ້ຳທີ່ມີຜົນກະທົບຂ້າ
ມຊາຍແດນ. ໃນປີ 2002, ຄກມ ໄດ້ພັດທະນາໂຄງຮ່າງແຜນວຽກຂອງການ ປຜສ ຂ້າມຊາຍແດນ
ທີ່ຍັງພຽງແຕ່ການນຳສະເໜີຄວາມເຂົ້າໃຈຕໍ່ພາກພື້ນໃນປະຈຸບັນ.

ສົນທິສັນຍາສະຫະປະຊາຊາດ ວ່າດ້ວຍການປ້ອງກັນ ແລະ ການນຳໃຊ້ແຫຼ່ງນ້ຳຂ້າມຊາຍແດນ ແລະ
ທະເລສາບສາກົນ ໄດ້ເຊີນບັນດາສຳມະຊິກພັກເພື່ອຜ່ານກົດລະບຽບທີ່ຈະນຳສະເໜີ ປຜສ ໃນການບຳບັດນ້ຳ.[76]
ສົນທິສັນຍາສະຫະປະຊາຊາດ ວ່າດ້ວຍກົດໝາຍຂອງການນຳໃຊ້ທີ່ບໍ່ແມ່ນເສັ້ນທາງຂອງແຫຼ່ງນ້ຳສາກົນ
ເຊິ່ງເປັນການກຳນົດໃນການສະເໜີຂໍ້ຂ້ອງໃຈກ່ຽວກັບມາດຕະການການວາງແຜນທີ່ພົວພັນກັບຜົນກະທົບທີ່ຮ້າ
ຍແຮງທີ່ອາດຈະເກີດຂຶ້ນ ເຊັ່ນດຽວກັບຂໍ້ມູນທີ່ຈະລວມຢູ່ໃນ ຜົນໄດ້ຮັບຂອງການ ປຜສ.[77]
ທີ່ມີພັນທະໃນສົນທິສັນຍາ ວ່າດ້ວຍ “ການປົກປັກຮັກສາ ແລະ ການສະຫງວນໄວ້ລະບົບນິເວດວິທະຍາ
ຂອງແຫຼ່ງນ້ຳສາກົນ,” ທີ່ບໍ່ຕ້ອງການການດຳເນີນການປະເມີນຜົນກະທົບຂ້າມຊາຍແດນ.[78]

ສະຫະປະຊາຊາດຄະນະກຳມະການທາງເສດຖະກິດ ເອີລົບ(ຢູເອັນ ອີຊີອີ)
ໄດ້ເປັນເຈົ້າການໃນການພັດທະນາກົນໄກທີ່ທັ້ງຊຸກຍູ້ ແລະ ປັບປຸງກົດລະບຽບຂອງກົດໝາຍ ປຜສ ທ້ອງຖິ່ນ,
ເຊັ່ນດຽວກັບການກວດສອບຄືນການນຳໃຊ້ ປຜສ ທີ່ຈະສາມາດຊ່ວຍເຂົ້າໃນສິ່ງແວດລ້ອມພາກພື້ນໄດ້ຫຼືບໍ່.
ເຊິ່ງມີ ສາມ ເຄື່ອງມືສາກົນທີ່ກ່ຽວພັນກັບການປະເມີນຜົນສິ່ງແວດລ້ອມ ດັ່ງລຸ່ມນີ້:

---

[75] ໂຮງງານເຈ້ຍທີ່ໄກ້ແມ່ນ້ຳ ຢູລຸກວຍ(ລະຫວ່າງ ອາເຈັນຕິນ້ຳ ແລະ ຢູລຸກວຍ) ICJ ຄຳແນະນຳຂອງ ຊ່ຽວຊານ (ຄຳສັ່ງຂອງ 20 ເມສາ, 2010) I.C.J. ບົດລາຍງານ 2010, ທີ່ ພາຣ 205.

[76] Kersten, p.180.

[77] ມາດຕາທີ 12. ປະເທດ ຫວຽດນາມ ເປັນພຽງໜຶ່ງຂອງສຳມະຊິກ ASEAN ທີ່ໄດ້ລົງນາມເຂົ້າໃນສົນທິສັນຍານີ້.

[78] ມາດຕາທີ 20.

- ສົນທິສັນຍາວ່າດ້ວຍການປະເມີນຜົນກະທົບສິ່ງແວດລ້ອມຂ້າມຊາຍ (ສົນທິສັນຍາ Espoo);
- ອານຸສັນຍາ ວ່າດ້ວຍການປະເມີນຜົນກະທົບສິ່ງແວດລ້ອມແບບຍຸດທະສາດ (ອານຸສັນຍາ SEA);ແລະ
- ສົນທິສັນຍາ ວ່າດ້ວຍການເຂົ້າເຖິງຂໍ້ມູນຂ່າວສານ, ການມີສ່ວນຮ່ວມຂອງສາທາລະນະໃນຂະບວນການຕັດສິນໃຈ ແລະ ການເຂົ້າເຖິງຂະບວນການຍຸດຕິທຳກ່ຽວກັບບັນຫາທາງສິ່ງແວດລ້ອມ (ສົນທິສັນຍາ Aarhus).

ທຸກເຄື່ອງມືສາກົນທີ່ຖືກນຳມາໃຊ້ຈາກມາດຕະຖານກົດໝາຍສິ່ງແວດລ້ອມສາກົນ.
ທຸກເຄື່ອງມືແມ່ນມີຜົນຕໍ່ຂະບວນການທຳທະຊາດຊອງ ປຜສ.

ຄະນະກຳມະການທາງເສດຖະກິດເອີລົບ ໄດ້ຮັບຮອງເອົາບົດແນະນຳ ການມີສ່ວນຮ່ວມຂອງການປະເມີນຜົນກະທົບສິ່ງແວດລ້ອມຂ້າມຊາຍ (ບົດແນະນຳ ECE) ທີ່ສົ່ງເສີມຂໍ້ ສອງຕົກລົງທີ່ສຳຄັນຂອງ ລັດຖະບານສາກົນ ເອີລົບ ວ່າດ້ວຍການ ປຜສ ແລະ ການມີສ່ວນຮ່ວມຂອງສາທາລະນະ –ໃນປີ 1991 ສົນທິ ສັນຍາວ່າດ້ວຍການ ປະເມີນຜົນກະທົບຕໍ່ສິ່ງແວດລ້ອມຂ້າມຊາຍແດນ (ສົນທິສັນຍາ Espoo) ແລະ ປີ 1998 ສົນທິສັນຍາວ່າດ້ວຍ ການເຂົ້າເຖິງຂໍ້ມູນຂ່າວສານ ການມີສ່ວນຮ່ວມຂອງສາທາລະນະ ໃນຂະບວນການຕັດສິນໃຈ ແລະ ການເຂົ້າເຖິງຂະບວນການຍຸດຕິທຳກ່ຽວກັບບັນຫາທາງສິ່ງແວດລ້ອມ (ສົນທິສັນຍາ Aarhus) .[79]

ສົນທິສັນຍາວ່າດ້ວຍການປະເມີນຜົນກະທົບສິ່ງແວດລ້ອມຂ້າມຊາຍແດນ(ສົນທິສັນຍາ Espoo)

ສິ່ງສຳຄັນທີ່ສຸດຂອງການຮັບຮອງເອົາ ປຜສ ຂອງທຸກສຳມະຊິກໃນເອີລົບ, ໃນປີ 1987 ກຸ່ມຊ່ຽວຊານຈາກ ຄະນະກຳມະການດ້ານເສດຖະກິດເອີລົບ (UN ECE) ໄດ້ກ່າວເຖິງ ປຜສ ວ່າດ້ວຍ ສິ່ງແວດລ້ອມຂ້າມຊາຍແດນ. ສົນທິສັນຍາໄດ້ມີການເຈລະຈາໃນຊ້ວງ ປີ 1988 ເຖິງ 1990 ແລະ ໄດ້ຖືກນຳສະເໜີເພື່ອຮັບການອະນຸມັດໃນວັນທີ 3 ກັນຍາ 1991. ສົນທິສັນຍາໄດ້ມີຂໍ້ບັງຄັບໃຊ້ໃນວັນ 10 ກັນຍາ 1997. ປະຈຸບັນມີ 44 ພາກຂອງ ສົນທິສັນຍາ Espoo, ລວມທັງ ເອີລົບ, ອາເມລິກາ ແລະ ສະຫະພັນລັດເຊຍ.

ສົນທິສັນຍາ Espoo ແມ່ນກົນໄກປ້ອງກັນເພື່ອ ຫຼີກລ້ຽງ, ບັນເທົາ ແລະ ຫຼຸດຜ່ອນຜົນກະທົບທີ່ຮ້າຍແຮງຕໍ່ສິ່ງແວດລ້ອມ ເຊິ່ງຈຸດປະສົງເພື່ອຊ່ວຍເຮັດໃຫ້ການພັດທະນາມີຄວາມຍືນຍົງດ້ວຍການສົ່ງເສີມການຮ່ວມມືສາກົນໃນການປະ ເມີນຜົນກະທົບສິ່ງແວດລ້ອມທີ່ອາດຈະເກີດຂຶ້ນຈາກກິດຈະກຳທີ່ສະເໜີ. ສົນທິສັນຍາດັ່ງກ່າວ ນຳໃຊ້ຕໍ່ກັບກິດຈະກຳທີ່ອາດຈະກໍ່ໃຫ້ເກີດຜົນກະທົບຕໍ່ສິ່ງແວດລ້ອມຢູ່ໃນປະເທດອື່ນໆ.[80]

[79] UNECE (2006) ບົດແນະນຳການມີສ່ວນຮ່ວມຂອງມວນຊົນໃນການປະເມີນຜົນກະທົບສິ່ງແວດລ້ອມຂ້າມຊາຍແດນ, ECE/MP.EIA/7.

[80] Vesna Kolar Planinšič (2016), ກະຊວງແຜນການພາກພື້ນແລະສິ່ງແວດລ້ອມຂອງມວນຊົນ ສໂລເວັນເນຍ. ຈາກຫຼາຍບົດສະເໜີສິ່ງແວດລ້ອມຂອງ RTWG on EIA.

ບົດບັນທຶກທີ່ສຳຄັນຂອງສົນທິສັນຍາ Espoo ແມ່ນຂັ້ນຕອນການແນະນຳສົນທິສັນຍາ. ໃນສົນທິສັນຍາຂອງ Espoo ເປັນສ່ວນທີ່ຈະນຳເອົາ “ມາດຕະການທີ່ເໝາະສົມ ແລະ ມີປະສິດທິພາບເພື່ອຫຼີກລ້ຽງ, ບັນເທົາ, ແລະ ຄວບຄຸມຜົນກະທົບທາງສິ່ງແວດລ້ອມທີ່ຮ້າຍແຮງຂ້າມຊາຍແດນຈາກກິດຈະກຳທີ່ນຳສະເໜີ.”[81]

ບັນດາຂໍ້ກຳນົດໃນສົນທິສັນຍາ Espoo ຈະເປັນຕົວຂະຫຍາຍພັນທະຂອງຄວາມຕ້ອງການໃນລະດັບຂອງບົດ ປຜສ, ແຈ້ງເຕືອນຜົນສະທ້ອນທີ່ອາດຈະເກີດຂຶ້ນຕ່ຳບັນດາປະເທດໄກ້ຄຽງ,
ກຳນົດການເຂົ້າເຖິງຂໍ້ມູນຂ່າວສານໃຫ້ພາກສ່ວນທີ່ອາດຈະຖືກກະທົບ ແລະ ໃຫ້ສິດໃນການອອກຄຳຄິດເຫັນ ແລະ ຮັບຮູ້ເຖິງການຕັດສິນໃຈ ໃນຂັ້ນສຸດທ້າຍກັບແຕ່ລະໂຄງການ.[82] ສົນທິສັນຍາ Espoo ຈະກຳນົດລາຍລະອຽດຂອງກິດຈະກຳໃນເອກະສານຊ້ອນທ້າຍທີ I ທີ່ຖືກກວມລວມໂດຍສົນທິສັນຍາ ແລະ ລາຍການຂອງຂໍ້ມູນທີ່ຄວນຈະລວມເຂົ້າໃນບົດ ປຜສ ໃນ ເອກະສານຊ້ອນທ້າຍ II..
ສົນທິສັນຍາ Espoo ມີຄວາມສຳຄັນທີ່ອີງຕາມມາດຕະຖານກົດໝາຍສິ່ງແວດລ້ອມສາກົນ ແລະ ສາມາດເຂົ້າເຖິງຂໍ້ມູນຂ່າວສານ ແລະ ສິດໃນການເຂົ້າຮ່ວມ ແລະ
ສິດໃນການຮັບຮູ້ເຖິງຜົນກະທົບທີ່ອາດຈະເກີດຂຶ້ນຈາກກິດຈະກຳທີ່ມີຜົນກະທົບຂ້າມຊາຍແດນ.

ອະນຸສັນຍາໃນການປະເມີນຜົນກະທົບສິ່ງແວດລ້ອມແບບຍຸດທະສາດ(ອະນຸສັນຍາຂອງ SEA)

ມີການເພີ່ມຕື່ມເຂົ້າໃນສົນທິສັນຍາວ່າດ້ວຍ ການ ປຜສ ທີ່ຂ້າມຜ່ານຊາຍແດນ, ທີ່ເປັນສ່ວນໜຶ່ງຖືກພິຈາລະນາເຂົ້າໃນອານຸສັນຍາຂອງ SEA. ອານຸສັນຍາຂອງ SEA ໄດ້ມີຜົນນຳໃຊ້ໃນ ວັນທີ 11 ກໍລະກົດ 2010. SEA ຈະກວມເອົາການປະເມີນສິ່ງແວດລ້ອມຕາມນະໂຍບາຍ ຫຼື ໂຄງການ ໂດຍຜ່ານສຳມະຊິກລັດຖະບານ ທີ່ຄາດຄະເນວ່າຈະມີຜົນກະທົບທີ່ຮ້າຍແຮງຕໍ່ສິ່ງແວດລ້ອມ, ແລະສຸກຂະພາບ.[83]

ພາຍໄຕ້ອານຸສົນທິສັນຍາ SEA, ການປະເມີນຜົນກະທົບສິ່ງແວດລ້ອມແບບຍຸດທະສາດ
ແມ່ນໃຫ້ນິຍາມຄວາມໝາຍໄດ້ດັ່ງນີ້:

> ການຕີລາຄາຜົນສະທ້ອນທີ່ອາດຈະເກີດຂຶ້ນຕໍ່ສິ່ງແວດລ້ອມ ແລະ ສຸກຂະພາບ
> ທີ່ປະກອບເຂົ້າໃນການກຳນົດຂອບເຂດຂອງບົດລາຍງານສິ່ງແວດລ້ອມ ແລະ ການກະກຽມບົດ,
> ທີ່ຈະຕ້ອງດຳເນີນການປຶກສາຫາລື ແລະ ການມີສ່ວນຮ່ວມສາທາລະນະ,
> ທີ່ຈະປະກອບເຂົ້າໃນບົດລາຍງານສິ່ງແວດ ລ້ອມ, ແລະ ບັນດາຜົນໄດ້ຮັບຈາກການປຶກສາຫາລື ແລະ
> ການມີສ່ວນຮ່ວມສາທາລະນະແມ່ນຈະດຳເນີນເຂົ້າໃນການວາງແຜນຫຼື ກິດຈະການ.[84]

ອານຸສັນຍາ SEA ຈະຕ້ອງມີການກະກຽມບົດ SEA
ເພື່ອການວາງແຜນແລະອອກນະໂຍບາຍເຂົ້າໃນການຕັດສິນໃຈ.
ການມີສ່ວນຮ່ວມແລະການປຶກສາຫາລືຈະຕ້ອງປະກອບມີບັນດາສຳມະຊິກຂອງແຕ່ລະພາກ ສ່ວນ.[85]

---

[81] ສົນທິສັນຍາ Espoo, ມາດຕາທີ 2.
[82] ບັນນທຶກຢູ່ໃນມາດຕາທີ 3 ເຖິງ 6 ຂອງສົນທິສັນຍາ Espoo.
[83] ອານຸສັນຍາ SEA, ມາດຕາທີ 4.
[84] ອານຸສັນຍາ SEA, ມາດຕາທີ 2.
[85] ອານຸສັນຍາ SEA, ມາດຕາທີ 8.

ສົນທິສັນຍາ SEA ໄດ້ອ້າງອີງເຖິງ“ການລິເລີ້ມ,ກຳນົດເວລາ ແລະ
ໂອກາດທີ່ເໝາະສົມສຳລັບການມີສ່ວນຮ່ວມ” ເຊັ່ນດຽວກັນກັບທີ່ຕ້ອງການມີສ່ວນຮ່ວມຈາກ
ອົງການທີ່ບໍ່ສັງກັດກັບລັດຖະບານ ທີ່ມີສິດໃນການຮັບຮູ້ຂໍ້ມູນແລະໃຫ້ຄຳແນະນຳ “
ຢ່າງມີເຫດມີຜົນໃນຮ່າງໜ້າວຽກ.”

ສິ່ງເຫຼົ່ານັ້ນເປັນຄວາມຕ້ອງການຈາກ ການປຶກສາຫາລືຂ້າມຜ່ານຊາຍແດນ, ຖ້າຫາກການຈັດຕັ້ງປະຕິບັດ
ຕາມແຜນການ ແລະ ນະໂຍບາຍດັ່ງກ່າວ ທີ່ອາດຈະມີຜົນກະທົບຂ້າມຊາຍແດນ.[86]

ສົນທິສັນຍາວ່າດ້ວຍການເຂົ້າເຖິງຂໍ້ມູນຂ່າວສານ, ການມີສ່ວນຮ່ວມສາທາລະນະຕໍ່ການຕັດສິນໃຈ ແລະ ການເຂົ້າເຖິງຄວາມຍຸດຕິທຳຕໍ່ບັນຫາສິ່ງແວດລ້ອມ(ສົນທິສັນຍາ Aarhus)

ໜຶ່ງໃນອົງປະກອບທີ່ສຳຄັນຂອງ ປຜສ ແມ່ນການມີສ່ວນຮ່ວມຂອງສາທາລະນະທີ່ມີປະສິດທິພາບ.
ເພື່ອບັນລຸເຖິງ ການມີສ່ວນຮ່ວມຂອງສາທາລະນະທີ່ມີປະສິດທິພາບ
ແມ່ນຈຳເປັນຕ້ອງໃຫ້ຊຸມຊົນສາມາດເຂົ້າເຖິງຂໍ້ມູນໂຄງການແລະ ຂໍ້ຂ້ອງໃຈຂອງທາງລັດຖະບານຕໍ່ໂຄງການ
ແລະ ຜົນກະທົບທີ່ອາດຈະເກີດຂຶ້ນ. ຫຼັກການທີ່ 10 ຂອງ ລະບຽບການນຳໃຊ້ຂອງ Rio
ມີຜົນສະທ້ອນຕໍ່ຄວາມຕ້ອງການພື້ນຖານເຫຼົ່ານີ້ເປັນຕົ້ນ.

ສົນທິສັນຍາ Aarhus ແມ່ນຖືກລວມເປັນໜຶ່ງໃນຂະບວນການຂອງ
ສະຫະປະຊາຊາດຄະນະກຳມະການທາງເສດຖະກິດ ເອີລົບ UN ECE “ສິ່ງແວດລ້ອມເອີລົບ” ແລະ
ມີຜົນບັງຄັບໃຊ້ໃນວັນທີ 30 ຕຸລາ 2001.[87]
ເຊິ່ງເປັນທີ່ຍອມຮັບວ່າມີຄວາມສຳຄັນຢ່າງກວ້າງຂວາງໃນການສົ່ງເສີມການຄຸ້ມຄອງສິ່ງແວດລ້ອມ.[88]

ສົນທິສັນຍາ Aarhus ປະກອບມີ ສາມ ຫຼັກການ:

- ສິດຂອງສາທາລະນະໃນການເຂົ້າເຖິງຂໍ້ມູນຂ່າວສານກ່ຽວກັບສິ່ງແວດລ້ອມ ແລະ ການພັດ ທະນາ;
- ມີຂໍ້ກຳນົດສຳລັບການມີສ່ວນຮ່ວມໃນການປະເມີນສິ່ງແວດລ້ອມຂອງໂຄງການພັດທະນາສະເພາະ;[89] ແລະ
- ສິດຂອງສາທາລະນະໃນການເຂົ້າເຖິງສານປະຊາຊົນ ແລະ
  ຄະນະກຳມະການຕັດສິນເພື່ອຄວາມທ່ຽງທຳຕໍ່ບັນຫາສິ່ງແວດລ້ອມ .[90]

ໃນວັນທີ 7 ມັງກອນ 2014, ມີ 46 ພາກສ່ວນເຂົ້າຮ່ວມ, 33
ພາກສ່ວນທີ່ຮ່ວມເຂົ້າໃນອະນຸສັນຍາການກະຈ່າຍມົນລະຜິດ ແລະ ການຈົດທະບຽນການຍັບຍ້າຍ (PRTRs)
ແລະ ມີ 27 ພາກສ່ວນທີ່ມີການປັບປຸງການມີສ່ວນຮ່ວມສາທາລະນະເຂົ້າໃນການຕັດສິນ

[86] ອານຸສັນຍາ SEA, ມາດຕາທີ 10.

[87] http://www.unece.org/env/pp/welcome.html http://europa.eu.int/comm/environment/aarhus.

[88] D. Craig ແລະ M. Jeffrey, ບໍ່ແມ່ນນັກກົດໝາຍແລະລະບົບກົດໝາຍ,ໃນ Leary, 2010, ໜ້າທີ.105.

[89] ບັນຫາໄດ້ບັນທຶກໃນ ເອກະສານຊ້ອນທ້າຍທີ 1 ຂອງ ສົນທິສັນຍາ Aarhus. ບັນຫາເຫຼົ່ານັ້ນຍັງລວມເອົາກິດຈະກຳທີ່ບໍ່ຢູ່ໃນ
ເອກະສານຊ້ອນທ້າຍ, ທີ່ມີສ່ວນຮ່ວມມວນຊົນທີ່ຖືກກຳນົດເຂົ້າໃນຂະບວນການປະເມີນຜົນກະທົບສິ່ງແວດລ້ອມ
ທີ່ອີງຕາມລະບຽບກົດໝາຍແຫ່ງ.

[90] ສົນທິສັນຍາ Aarhus, ມາດຕະການ 4-9.

ການຫຼຸດຜ່ອນການກະຈ່າຍມົນລະຜິດສູ່ສິ່ງແວດລ້ອມ ແລະ
ພື້ນທີ່ທ້ອງຕະຫຼາດຂອງການປ່ຽນແປງຮູບແບບຂອງອົງປະກອບພື້ນຖານ (GMOs) .[91]

ການນຳສະເໜີບົດສົນທິສັນຍາ ໄດ້ອີງຕາມ ຫຼັກການທີ 1 ຂອງ ການປະກາດໃຊ້ລະບຽບການຂອງ Stockholm ວ່າດ້ວຍສິ່ງແວດລ້ອມສາທາລະນະ ແລະ ຫຼັກການທີ່ 10 ຂອງ ຖະແຫຼ່ງການ Rio ທີ່ວ່າດ້ວຍ ສິ່ງແວດລ້ອມ ແລະການພັດທະນາ.

ຫຼັກການທີ 10 ໄດ້ກ່າວວ່າ:

> ການແກ້ໄຂບັນຫາທາງສິ່ງແວດລ້ອມທີ່ດີແມ່ນການມີສ່ວນຮ່ວມຂອງສາທາລະນະທີ່ມີຂໍ້ສົງໃສ, ໃນທຸກລະດັບ.
> ໃນລະດັບຊາດ,ແຕ່ລະຂະແໜງການຈະສາມາດເຂົ້າເຖິງຂໍ້ມູນຂ່າວສານຕໍ່ບັນຫາສິ່ງແວດລ້ອມທີ່ກຳນົດໂດຍຂະແໜງການທ້ອງຖິ່ນ, ລວມທັງຂໍ້ມູນຂອງວັດສະດຸອັນຕະລາຍ ແລະ ກິດຈະກຳຂອງຊຸມຊົນ ແລະ ໂອກາດໃນການເຂົ້າຮ່ວມຂະບວນການຕັດສິນໃຈ.
> ສະພາບການໂດຍລວມຈະຕ້ອງອຳນວຍຄວາມສະດວກ ແລະ ຊຸກຍູ້ໃຫ້ມີການສຶກສາອົບຮົມ ແລະ ການມີສ່ວນຮ່ວມທີ່ເຮັດໃຫ້ສາມາດເຂົ້າຖຶງຂໍ້ມູນໄດ້ກວ້າງຂວາງຂຶ້ນ.
> ການເຂົ້າເຖິງທີ່ມີປະສິດທິຜົນແມ່ນຕ້ອງຕິດພັນກັບການດຳເນີນການປົກຄອງ ແລະ ລະບຽບການທາງກົດໝາຍທີ່ລວມທັງການກຳນົດການແກ້ໄຂ ແລະການຫຼຸດຜ່ອນ.

ສົນທິສັນຍາ Aarhus
ໄດ້ຮັບຮອງວ່າການເຂົ້າຮ່ວມຂອງສາທາລະນະແມ່ນມີຄວາມສຳຄັນໃນການສົ່ງເສີມສິ່ງແວດ ລ້ອມແບບຍືນຍົງໃນອານາຄົດ. ການຮັບຮອງນີ້ແມ່ນໄດ້ສືບຕໍ່ໃນການປະຊຸມ ຂອງແຕ່ລະພາກສ່ວນເຂົ້າໃນສົນທິສັນຍາຂອງ Aarhus. ໜຶ່ງໃນຄວາມເຂັ້ມແຂງຂອງສົນທິສັນຍາ Aarhus ແມ່ນຄວາມອາດສາມາດຂອງແຕ່ລະພາກສ່ວນທີ່ສືບຕໍ່ການເຈລະຈາທີ່ກວມລວມບັນຫາຕ່າງໆພາຍໄຕ້ສົນທິສັ ນຍາຂອງ Aarhus. ເຊິ່ງໃນນີ້ແມ່ນລວມຢູ່ໃນອານຸສັນຍາທີ່ປັບປຸງການເຂົ້າເຖິງຂໍ້ມູນຂອງສາທາລະນະ ຕະຫຼອດເຖິງການຈັດຕັ້ງຄວາມສອດຄອງ, ການປະສົມປະສານ, ການກະຈາຍມົນລະຜິດໃນທົ່ວປະເທດແລະການຈົດທະບຽນການຍັບຍ້າຍ (PRTRs).

ນອກນັ້ນ ບົດແນະນຳຂອງ ສະຫະປະຊາຊາດໂຄງການສິ່ງແວດລ້ອມ (UNEP) ສຳລັບການພັດທະນາລະບຽບການທາງກົດໝາຍແຫ່ງຊາດ ວ່າດ້ວຍການເຂົ້າເຖິງຂໍ້ມູນທີ່ກ່ຽງທຳໃນການບັນຫາສິ່ງແວດລ້ອມ ທີ່ສະທ້ອນຕໍ່ຫຼັກການຂອງ Aarhus ຂອງທຸກລະດັບໃນໂລກ.[92] ເຊິ່ງໄດ້ຖືກພິຈາລະນາໃຫ້ເປັນຫຼັກການຕົ້ນຕໍ່ຂອງ ສົນທິສັນຍາ Aarhus

[91] ລາຍລະອຽດຂໍ້ມູນກ່ຽວກັບໂຈດຂອງສົນທິສັນຍາ Aarhus ມີໃນເວບໄຊສ http://www.unece.org/env/pp/ratification.html.

[92] ຂໍ້ມູນລະອຽດປຫວັດຄວາມເປັນມາຂອງ ສົນທິສັນຍາ Aarhus ບັນທຶກໃນເວບໄຊສ http://www.unece.org/fileadmin/DAM//env/pp/welcome.html. Chisinau ການຮັບຮອງປະກາດໃຊ້ ວັນທີ 1 ກໍລະກົດ 2011.

ທີ່ເປັນຜົນສະທ້ອນ ໃນມາດຕະຖານຂອງກົດໝາຍສິ່ງແວດລ້ອມສາກົນ ແລະ ທີ່ເປັນພື້ນຖານຫຼັກ ເພື່ອການຄຸ້ມຄອງສິ່ງແວດລ້ອມທີ່ດີກວ່າ ແລະ ບັນລຸການພັດທະນາແບບຍືນຍົງ.[93]

ຂໍ້ຕົກລົງເຫັນດີຕາມລຳແມ່ນ້ຳຂອງ

ຂໍ້ຕົກລົງ ປີ 1995
ວ່າດ້ວຍການປະສານງານສຳລັບການພັດທະນາແບບຍືນຍົງຂອງອ່າງແມ່ນ້ຳຂອງ(ການຕົກລົງແມ່ນ້ຳຂອງ), ຮຽກຮ້ອງໃຫ້ບັນດາປະເທດສຳມະຊິກກຳນົດຂໍ້ຈຳແນກ ແລະ
ດຳເນີນການປຶກສາຫາລືເພື່ອສົນທະນາຜົນກະທົບຂ້າມຊາຍແດນສຳລັບໂຄງການທາງນ້ຳໃນພາກພື້ນແມ່ນ້ຳຂອງທີ່ອາດຈະກະທົບຕໍ່ປະ ເທດເພື່ອນບ້ານ, ກ່ອນການດຳເນີນການເຮັດສັນຍາ.[94]

ຂໍ້ຕົກລົງເຫັນດີຕາມລຳແມ່ນ້ຳຂອງໄດ້ເຊັນສັນຍາກັນ ທີ່ ຊຽງໃໝ່, ປະເທດໄທ, ໃນ ວັນທີ 5 ເມສາ ປີ 1995. UN ໄດ້ແຕ່ງຕັ້ງຄະນະກຳມະການແມ່ນ້ຳຂອງໃນ 1959,
ແຕ່ຂໍ້ຕົກລົງເຫັນດີຈະມີຜົນຕໍ່ການຕັດສິນໃຈຂອງ ປະເທດ ກຳປູເຈ້ຍ, ສ ປປ ລາວ, ປະເທດ ໄທ ແລະ ປະເທດ ຫວຽດນາມ ທີ່ຈັດຕັ້ງແຜນວຽກພາກພື້ນເພື່ອການປະສານງານຕາມລຳແມ່ນນ້ຳຂອງ.

ຈາກການເລີ້ມຕົ້ນຂອງການຕົກລົງແມ່ນ້ຳຂອງ ທີ່ສຸມໃສ່ການພັດທະນາແບບຍືນຍົງ, ການນຳໃຊ້, ການສະຫງວນ ແລະ ການຄຸ້ມຄອງອ່າງແມ່ນ້ຳຂອງ.[95]

ມາດຕາທີ 3. ການປົກປັກຮັກສາສິ່ງແວດລ້ອມແລະຄວາມສົມດຸນຂອງລະບົບນິເວດ:
ເພື່ອປົກປັກຮັກສາສິ່ງແວດລ້ອມ, ຊັບພະຍາກອນທຳມະຊາດ, ສັດນ້ຳ ແລະ ເງື່ອນໄຂ,
ແລະຄວາມສົມດຸນຂອງອ່າງແມ່ນ້ຳຂອງຈາກມົນລະຜິດຫຼືຜົນກະທົບອື່ນໆທີ່ເປັນເຫດມາຈາກແຜນການພັດທະນາ ແລະ ການນຳໃຊ້ນ້ຳ ແລະ ຊັບພະຍາກອນໃນເຂດອ່າງນ້ຳ.

ມາດຕາທີ 4. ຄວາມສະເໝີພາບອະທິປະໄຕ ແລະ ການເຊື່ອມໂຍງຂອງອານາເຂດ:
ເພື່ອການປະສານງານພາຍໄຕ້ພື້ນຖານຄວາມສະເໝີພາບແລລະການເຊື່ອມໂຍງກັນໃນການນຳໃຊ້ແລະການປ້ອງກັນອ່າງແມ່ນ້ຳຂອງ.

ສິ່ງສຳຄັນທີ່ຈະເຮັດໃຫ້ສຳເລັດ(ແລະບໍ່ສຳເລັດ) ຕໍ່ຂໍ້ຕົກລົງແມ່ນ້ຳຂອງທີ່ເປັນຂໍ້ກຳນົດ
ສຳລັບທຸກພາກສ່ວນທີ່ປະຕິບັດການປະສານງານກັບບັນຫາທີ່ເປັນຜົນກະທົບຕໍ່ສິດຂອງສຳມະຊິກໃນການນຳໃຊ້ຊັບພະຍາກອນທາງແມ່ນ້ຳຂອງ. ອີກຢ່າງໜຶ່ງ,
ການຕົກລົງເຫັນດີແມ່ນ້ຳຂອງໄດ້ຮັບຮູ້ວ່າມີຫຼາຍການຈັດຕັ້ງປະຕິບັດທີ່ຈະເຮັດໃຫ້ມີຜົນກະທົບຂ້າມຊາຍແດນ, ບໍ່ພຽງແຕ່ໂຄງການພະລັງງານໄຟຟ້າ ແຕ່ໂຄງການຂົນສົ່ງ, ການສົນລະປະທານ ແລະການປະມົງ
ກໍ່ມີຜົນກະທົບເຊັ່ນດຽວກັນ.

---

[93] Craig ແລະ Jeffrey, ໃນ Leary, 2010, p.123.
[94] ຄະນະກຳມະການແມ່ນ້ຳຂອງ, ປຜສ ຂ້າມຊາຍແດນ,
http://www.mrcmekong.org/about-mrc/programmes/environment-programme/transboundary-eia.
[95] Preamble, ຂໍ້ຕົກລົງແມ່ນ້ຳຂອງ .

ຂໍ້ຕົກລົງເຫັນດີແມ່ນ້ຳຂອງໄດ້ແຕ່ງຕັ້ງຄະນະກຳມະການແມ່ນ້ຳຂອງ(MRC),ທີ່ລວມມີ ສະມາຄົມ, ຄະນະກຳມະການຮ່ວມຊີ້ນຳ, ແລະ ເລຂານຸການ, ຕັ້ງແຕ່ນັ້ນມາ, ໜ້າວຽກຂອງ MRC ໄດ້ຖືກຂະຫຍາຍທີ່ລວມມີໂຄງການທີ່ສຳຄັນ ທີ່ເຂົ້າເຖິງແລະຄົ້ນຄ້ວາກິດຈະກຳຕາມອ່າງແມ່ນ້ຳຂອງ. MRC ໃນປີ 2011 ໄດ້ອະນຸມັດແຜ່ງນ້ຳແບບຄົບວົງຈອນ ແລະ ຊັບພະຍາກອນຕ່າງໆ ທີ່ເປັນພື້ນຖານການຄຸ້ມຄອງການພັດທະນາອ່າງນ້ຳແບບຍຸດທະສາດ ແລະ ແຜນຍຸດທະສາດ 2011-2015

ຄຸນລັກສະນະຫຼັກຂອງຂໍ້ຕົກລົງແມ່ນ້ຳຂອງຈາກພາບລວມຂອງ ປຜສ ຂ້າມຊາຍແດນ ທີ່ຕ້ອງການເພື່ອການປຶກສາຫາລື. ໄລຍະໃນການປຶກສາຫາລືໄດ້ກຳນົດໄວ້ດັ່ງນີ້:

> **ໄລຍະການປຶກສາຫາລື**: ການສະເໜີແນະການກຳນົດເວລາ ບວກກັບຂໍ້ມູນຂ່າວສານທີ່ຄະນະກຳມະການຮ່ວມໄດ້ກຳນົດໃນລະບຽບການວ່າດ້ວຍການນຳໃຊ້ນ້ຳ ແລະ ການຫັນທິດທາງອ່າງນ້ຳ ພາຍໄຕ້ມາດຕາທີ **26,** ທີ່ອະນຸຍາດໃຫ້ບັນດາສຳມະຊິກອື່ນທີ່ຢູ່ໃນພາກພື້ນນີ້ສາມາດສົນທະນາ ແລະ ຕີລາຄາຜົນກະທົບຂອງການສະເໜີນຳໃຊ້ນ້ຳ ແລະ ຜົນກະທົບອື່ນໆ ທີ່ເປັນພື້ນຖານໃຫ້ກັບການຕົກລົງເຫັນດີ. ໄລຍະການປຶກສາຫາລືແມ່ນເປັນໄດ້ທັງການປະຕິເສດ ແລະ ເຫັນດີໃນການນຳໃຊ້ ໃນພາກພື້ນທີ່ປາສະຈາກການນຳໃຊ້ສິດຂອງພາກພື້ນອື່ນ.[96]

ເປັນທີ່ຮັບຮູ້ກັນວ່າ MRC ໄດ້ສ້າງຕັ້ງຂຶ້ນເປັນເວລາ 20 ປີທີ່ຜ່ານມາ,ໄດ້ສ້າງຜົນງານໄວ້ຫຼາກຫຼາຍໃນການສຶກສາອ່າງແມ່ນ້ຳຂອງ. ຫຼາຍໆໂຄງການທີ່ໄດ້ດຳເນີນການສຶກສາສິ່ງແວດລ້ອມຂອງການພັດທະນາ ແລະ ການນຳໃຊ້ອ່າງແມ່ນ້ຳຂອງ. ໃນປະຈຸບັນ ໜ້າວຽກຂອງ MRC ແມ່ນສຸມໃສການປຶກສາຫາລືກ່ຽວກັບການຂະຫຍາຍການພັດທະນາເຂື່ອນພະລັງງານໄຟຟ້ານ້ຳຕົກຕາມສາຍແມ່ນ້ຳຂອງ ແລະ ສາຂາຂອງແມ່ນ້ຳຂອງ.

ຜົນສຳເລັດ(ຫຼືບໍ່ສຳເລັດ)ຂອງ MRC ແມ່ນຂຶ້ນກັບວິທີການສິ່ງເສີມທີ່ເປັນເອກະພາບ ແລະ ມີການຮ່ວມມືທີ່ຫຼາຍກວ່າທີ່ປະເສີນໜ້າຢູ່. MRC ເປັນອົງການທີ່ຖືກເຊື່ອຖືຈາກຫຼາຍຜູ້ໃຫ້ທຶນຢ່າງກວ້າງຂວາງ. ເຊິ່ງມີການແນະນຳຄວາມເຊື່ອໝັ້ນໃນການສ້າງສັນ “ຄວາມຮູ້ສຶກເຊື່ອໝັ້ນຂອງບັນດາຕ່າງປະເທດທີ່ເປັນສຳມະຊິກ MRC.” [97]

ຂັ້ນຕອນສຳລັບການແຈ້ງການ, ໄລຍະການປຶກສາຫາລື ແລະຂໍ້ຕົກລົງ

ໜຶ່ງໃນຄຸນລັກສະນະຫຼັກຂອງການຕົກລົງເຫັນດີ, ດັ່ງທີ່ກ່າວໄວ້ຂ້າງເທິງແມ່ນຄວາມຕ້ອງການຂອງການປຶກສາຫາລື. ສິ່ງເຫຼົ່ານີ້ສິ່ງເສີມໃນການປັບປຸງໂດຍບັນດາຂັ້ນຕອນການແຈ້ງການ, ການປຶກສາຫາລືກ່ອນລ່ວງໜ້າ ແລະການຕົກລົງເຫັນດີ (PNPCA) ທີ່ໄດ້ຖືກຮັບຮອງໃນປີ 2003.

---

[96] ຂໍ້ຕົກລົງແມ່ນ້ຳຂອງ, ບົດທີ 2

[97] ມີພຽງແມ່ນ້ຳຂອງ, ໜ້າທີ.961.

PNPCA ໄດ້ຮັບຮອງການສົ່ງເສີມສ້າງຄວາມເຂົ້າໃຈ ແລະ
ການປະສານງານລະຫວ່າງບັນດາປະເທດສໍາມະຊິກຂອງ MRC. ຫຼັກການແນະນໍາຂອງ PNPCA ມີດັ່ງນີ້:

- ຄວາມສະເໝີພາບອະທິປະໄຕ ແລະ ການເຊື່ອມໂຍນຂອງອານາເຂດ;
- ຄວາມເທົ່າທຽມແລະການນໍາໃຊ້ທີ່ມີເຫດ ແລະ ຜົນ;
- ເຄົາລົບຕໍ່ສິດ ແລະ ຄວາມຖືກຕ້ອງໃນຜົນປະໂຫຍດ;
- ຄວາມທ່ຽງທໍາ; ແລະ;
- ຄວາມໂປ່ງໃສ.[98]

ຈຸດປະສົງຂອງ PNPCA, ແມ່ນການເຊື່ອມໂຍນຄວາມເຂົ້າໃຈຕໍ່ຄວາມຕ້ອງການແຈ້ງການພາຍໃນ
ພາຍໄຕ້ສົນທິສັນຍາຂອງ Espoo,
ທີ່ໄດ້ກໍານົດໃຫ້ບັນດາປະເທດສໍາມະຊິກຕ້ອງມີການແຈ້ງການກ່ອນລ່ວງໜ້າຂອງການພັດທະນາທີ່ອາດຈະມີຜົ
ນກະທົບຂ້າມຊາຍແດນ. PNPCA ໄດ້ອະນຸຍາດພາກສ່ວນທີ່ຖືກກະທົບພິຈາ
ລະນາຂໍ້ມູນທີ່ລວມຢູ່ໃນບົດແຈ້ງການ ແລະ ສາມາດສະເໜີຂໍ້ມູນຫຼືການຊີ້ແຈງ.
ໃນຊ້ວງເວລາກ່ອນການປຶກສາຫາລືແມ່ນກໍານົດໄວ້ ຫົກ ເດືອນ ແລະ ສາມາດຕໍ່ເວລາໄດ້ຫາກຈໍາເປັນ.[99]
ການຮັບຮອງເອົາແມ່ນຈະພິຈາລະນາຕາມພື້ນຖານຂອງແຕ່ລະກໍລະນີ.[100]

ລະບຽບການຂອງທັງ MRC ແລະຄະນະກໍາມະການຮ່ວມ ຂອງ MRC
ຈະຊ່ວຍໃນຂະບວນການຂ້າມຜ່ານ ແລະ ການຊ່ວຍເຂົ້າໃນຂະບວນການປຶກສາຫາລື.[101] ຂະບວນການ
PNPCA ເປັນທີ່ຍອມຮັບການນໍາໃຊ້ເຂົ້າໃນການຈັດການສະຖາບັນທີ່ມີໃນປະຈຸບັນ,
ລວມທັງຄະນະກໍາມະການແຫ່ງຊາດທີ່ຖືກແຕ່ງຕັ້ງພາຍໄຕ້ຂໍ້ຕົກລົງແມ່ນ້ໍາຂອງ.

ຄຸນຄ່າຄວາມສໍາຄັນຂອງ ຂະບວນການ PNPCA ແມ່ນບໍ່ສາມາດຕີລາຄາໄດ້,
ເຖິງຈະມີການຈໍາກັດການນໍາໃຊ້ໃນແຕ່ລະລະດັບຂອງໂຄງການ ແລະ ມີຄວາມສໍາຄັນປານໃດກໍ່ຕາມ.[102]
ສິ່ງທີ່ຊັດເຈນຈາກ PNPCA ແລະ ຂໍ້ຕົກລົງແມ່ນ້ໍາຂອງ ແມ່ນການເຫັນດີຈາກບັນດາປະເທດສໍາມະຊິກ
ເພື່ອເປັນການອະນຸຍາດໃນການແຈ້ງການ ແລະ ການປຶກສາຫາລືກ່ອນລ່ວງໜ້າຕໍ່ໂຄງການ ແລະ
ກິດຈະການຕ່າງໆທີ່ອາດຈະມີຜົນກະທົບຂ້າມຜ່ານຊາຍແດນ.
ເປັນທີ່ຮັບຮູ້ກັນວ່າຮ່າງກອງເລຂາຈະສາມາດຊຸກຍູ້ໃນຂະບວນການຂອງການແຈ້ງການ ແລະ ການປຶກສາຫາລື.

ການພິຈາລະນາການປະເມີນ ປຜສ ຂ້າມຜ່ານຊາຍແດນໂດຍ MRC

ຄວາມພະຍາຍາມຂອງ MRC ແມ່ນການເສີມສ້າງແນວຄວາມຄິດເຂົ້າໃນການສ້າງແຜນໜ້າວຽກ ປຜສ
ຂ້າມຜ່ານຊາຍແດນ. ໃນປີ 1998, MRC ເຫັນດີຕໍ່ຮູບແບບ ແລະ
ຮັບຮອງເອົາລະບົບການປະເມີນສິ່ງແວດລ້ອມ ທີ່ຂ້າມຜ່ານຊາຍແດນ.[103]

---

[98] PNPCA, ມາດຕາທີ 3.

[99] ເບິ່ງ PNPCA, ມາດຕາທີ 5.5

[100] PNPCA, ມາດຕາທີ 6.

[101] PNPCA, ມາດຕາທີ 5.3.3

[102] PNPCA, ມາດຕາທີ4.

[103] P. ຄົງ, EIA ຂ້າມຊາຍແດນ ແລະ ການປ່ຽນແປງດິນຟ້າອາກາດໃນພາກພື້ນລຸ່ມແມ່ນ້ໍາຂອງ (GMS), ໄດ້ຖືກນໍາສະເໜີ ທີ
ກອງປະຊຸມສູນກາງ ສຕິມສັນ, ວິທີທາງການແກ້ໄຂບັນຫາ ທີ່ທ່ຽງທໍາຕໍ່

ການຕິດຕາມບົດລາຍງານການຄຸ້ມຄອງຊັບພະຍາກອນສິ່ງແວດລ້ອມ (ERM) ໃນ ເດືອນເມສາ ປີ 2002, ບົດແນະນຳນີ້ໄດ້ຖືກສະເໜີຕໍ່ MRC. [104] ບົດລາຍງານ MRC ປະກອບມີ ບົດລາຍງານຄວາມເປັນມາ ແລະ ບົດສະເໜີສ້າງລະບົບ.

ບົດສະເໜີສ້າງລະບົບໄດ້ບັນທຶກວ່າເອກະສານນະໂຍບາຍແມ່ນ “ບໍ່ໄດ້ມາກອມ ຫຼືປ່ຽນແທນຂໍ້ກຳນົດຂອງ ປຜສ ທີ່ມີຢູ່ ໃນແຕ່ລະປະເທດ”
ແຕ່ເພື່ອສະເໜີໃຫ້ມີການນຳໃຊ້ຮ່າງໜ້າວຽກຂອງໂຄງການທີ່ອາດຈະເປັນເຫດໃຫ້ເກີດມີຜົນກະທົບຂ້າມຊາຍແດນ.[105]

ບົດສະເໜີສ້າງລະບົບໄດ້ແຍກອອກເປັນ ສາມ ພາກສ່ວນດັ່ງນີ້:

- ສ້າງລະບົບຍ່ອຍໃນ SEA;
- ນະໂຍບາຍ ປຜສ ຕໍ່ສິ່ງແວດລ້ອມຂ້າມຜ່ານຊາຍແດນສຳລັບ MRC; ແລະ
- ສ້າງລະບົບຍ່ອຍ ສຳລັບ ບົດ ປຜສ.

ລະບົບທີ່ສະເໜີ ມີອົງປະກອບດັ່ງລຸ່ມນີ້:

- ນະໂຍບາຍທີ່ຖືກສະເໜີບົນພື້ນຖານ ປຜສ ຕໍ່ສິ່ງແວດລ້ອມຂ້າມຊາຍແດນ;
- ບົດແນະນຳຂອງ SEA;
- ບົດແນະນຳການປະເມີນຜົນກະທົບສະສົມ;
- ບົດແນະນຳການມີສ່ວນຮ່ວມຂອງສາທາລະນະໃນການປະເມີນຜົນສິ່ງແວດລ້ອມ;
- ເງື່ອນໄຂການທົບທວນມາດຖານຜົນກະທົບສິ່ງແວດລ້ອມ;
- ບົດແນະນຳຂະແໜງການ;ແລະ
- ໂຄງການຝຶກອົບຮົມເພື່ອຊຸກຍູ້ການຈັດຕັ້ງປະຕິບັດຂອງລະບົບ EI IA/SEA.

ອີງຕາມບົດບັນທຶກ ຈາກການນຳສະເໜີບົດລາຍງານທີ່ສົມບູນຂອງ MRC ໃນປີ 2002
ມີບາງກິດຈະກຳທີ່ໄດ້ຖືກດຳເນີນ. ໃນປີ 2007, ຄະນະກຳມະການແມ່ນ້ຳຂອງແຫ່ງຊາດ, ປະເທດໄທ
ໄດ້ສະເໜີຂໍ້ຂ້ອງໃຈກ່ຽວກັບຮ່າງໜ້າວຽກຂອງ ປຜສ.[106] ໃນປີ 2009,
ສະຖາບັນກົດໝາຍສິ່ງແວດລ້ອມໄດ້ດຳເນີນການທົບທວນຕື່ມ[107] ແລະ
ປະເມີນບົດສະເໜີຮ່າງແຜນໜ້າວຽກຂອງ EIA/SEA
ຢູ່ໃນເງື່ອນໄຂທີ່ມີຮູບແບບໃນການປະຕິບັດທີ່ກວ້າງຂວາງ ແລະ ການກຳນົດການປັບປຸງຮ່າງແຜນວຽກ.[108]
MRC ລະບຸຄືນສັນຍາໃນການຈັດຕັ້ງປະຕິບັດຕາມຮ່າງໜ້າວຽກຂອງ ປຜສ ຂ້າມຊາຍແດນ ໃນປີ 2006-2010 ແລະ ແຜນຍຸດທະສາດຂອງປີ 2011 – 2015. ເຖິງຢ່າງໃດກໍ່ຕາມ, ເລີ່ມຈາກປີ 2009

ການວາງແຜນການພັດທະນາເຂື່ອນໄຟຟ້າໃນພາກພື້ນລຸ່ມອ່າງແມ່ນ້ຳຂອງ , ຊ່ຽງລາຍ, 2014

[104] ການຄຸ້ມຄອງຊັບພະຍາກອນສິ່ງແວດລ້ອມ, ການພັດທະນາ ລະບົບ EIA/SEA ສຳລັບພາກພື້ນລຸ່ມແມ່ນ້ຳຂອງ , ເມສາ 2002 (ບົດລາຍງານ ERM)

[105] ການຄຸ້ມຄອງຊັບພະຍາກອນສິ່ງແວດລ້ອມ, ການພັດທະນາ ລະບົບ EIA/SEA ສຳລັບພາກພື້ນລຸ່ມແມ່ນ້ຳຂອງ , ເມສາ 2002 (ບົດລາຍງານນຳສະເໜີລະບົບ).

[106] ຄືງ, ໜ້າທີ.2.

[107] ການຈັດຕັ້ງຮ່າງບົດ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຂ້າມຊາຍແດນ ສຳລັບອ່າງແມ່ນ້ຳຂອງ, ຂໍ້ຕົກລົງຂອງຮ່າງຄະນະກຳມະການແມ່ນ້ຳຂອງ ຕໍ່ຮ່າງໜ້າງວຽກຂອງ TbEIA, ສະຖາບັນກົດໝາຍສິ່ງແວດລ້ອມ, ເມສາ 2009.

[108] ຄືງ, ໜ້າທີ.1.

ໄດ້ມີການທົບທວນຄືນໂດຍສະຖາບັນກົດໝາຍສິ່ງແວດລ້ອມ,ໂດຍທີ່ບໍ່ມີການຮັບຮອງລ່ວງໜ້າຕໍ່ຮ່າງໜ້າວຽກ ນັ້ນໆ.

ຂໍ້ຕົກລົງທາງສິ່ງແວດລ້ອມຂອງພາກພື້ນລຸ່ມແມ່ນ້ຳຂອງ(GMS):

ຄວາມພະຍາຍາມໃນການພັດທະນາ ຂໍ້ຕົກລົງທາງສິ່ງແວດລ້ອມຂອງ GMS ແມ່ນຈະຕອບສະໜອງໃສ່ການປ່ຽນແປງດິນຟ້າອາກາດຂອງພາກພື້ນໃນປີ 2009.ໃນເດືອນ ມັງກອນ ປີ 2009, ກອງທຶນຊ່ວຍເຫຼືອທຳມະຊາດໂລກ (WWF) ໄດ້ຊຸກຍູ້ການສຶກສາຄວາມເປັນມາ ການທົບທວນຮ່າງໜ້າວຽກລະບຽບກົດໝາຍໃນພາກພື້ນ GMS ລວມທັງໃນເຂດພາກພື້ນ, ຫຼາກຫຼາຍຂໍ້ຕົກລົງ ແລະ ການຈັດການລະບຽບກົດໝາຍທ້ອງຖິ່ນຂອງບັນດາປະເທດ ພາກພື້ນ GMS. ບົດລາຍງານນີ້ໄດ້ກ່າວເຖິງຂໍ້ຕົກລົງທີ່ຍັງບໍ່ຊັດເຈນ ແລະ ທີ່ບໍ່ມີໃນຂໍ້ຕົກລົງຂອງພາກພື້ນຍ່ອຍ.

ເປົ້າໝາຍຫຼັກຂອງການສົນທະນາແມ່ນການນຳໃຊ້ຂໍ້ຕົກລົງໃນເຂດພາກພື້ນ ທີ່ຈະສົ່ງເສີມຕໍ່ການປ່ຽນແປງດິນຟ້າອາກາດ. ກອງປະຊຸມສົນທະນາແມ່ນໄດ້ຈັດຂຶ້ນທີ່ ບາງກອກ ປະເທດໄທ ໃນ ວັນທີ 22 ກໍລະກົດ 2009, ເຊິ່ງຍັງບໍ່ທັນມີການຕິດຕາມ ຫຼື ພັດທະນາ ຕໍ່ແນວທາງຂອງຂໍ້ຕົກລົງການປ່ຽນແປງດິນຟ້າອາກາດພາກພື້ນ. ໃນຫ້າປີ ທີ່ຜ່ານມາ, ລັດຖະບານໄດ້ມີການພັດທະນາປະເທດເພື່ອຕອບສະໜອງຕໍ່ການປ່ຽນແປງດິນຟ້າອາກາດ ທີ່ຫຼາຍກວ່າວິທີການທາງພາກພື້ນ.
ຈາກການວິເຄາະຂອງທ່ານ ປີເຕີ ຄິງ ເຫັນວ່າມີຫຼາກຫຼາຍເຫດຜົນທີ່ຈະເຮັດໃຫ້ລົ້ມເລວໃນການພັດທະນາ ຂໍ້ຕົກລົງສິ່ງແວດລ້ອມພາກພື້ນຂອງ GMS.[109] ເຖິງຢ່າງໃດກໍ່ຕາມ ອາດຈະມີເຫດຜົນສຳຄັນອື່ນທີ່ເຮັດໃຫ້ບໍ່ສາມາດພັດທະນາຕໍ່ຂໍ້ຕົກລົງທາງສິ່ງແວດລ້ອມ ເນື່ອງຈາກຂາດແນວທາງລັດຖະບານໃນການປະເຊີນຕໍ່ຄວາມບໍ່ແນ່ນອນຂອງເສດຖະກິດໂລກ. ຖ້າບໍ່ໄດ້ຮັບການຊ່ວຍເຫຼືອຈາກພາກສ່ວນລັດແລ້ວແມ່ນຈະບໍ່ມີຄວາມຄືບໜ້າໃນການຕົກລົງເຫັນດີຂອງສິ່ງແວດລ້ອມພາກພື້ນໃດໆ.
ເຫດຜົນອື່ນທີ່ມີຜົນຕໍ່ຂໍ້ຕົກລົງສິ່ງແວດລ້ອມພາກພື້ນຕໍ່ການມີແນວທາງທີ່ຊັດເຈນໃນການນຳໃຊ້ແຫຼ່ງນ້ຳ ເຊັ່ນ: ແມ່ນ້ຳຂອງ ແລະ ແມ່ນ້ຳສະລີນ, ແລະ ການພັດທະນາເຂື່ອນໄຟຟ້າ, ທີ່ມີເປັນຂໍ້ຂັດແຍ່ງກັນຫຼາຍຕໍ່ບັນຫາທາງການເມືອງ ທັງພາຍໃນ ແລະ ລະຫວ່າງປະເທດ.

ໃນພາກພື້ນແມ່ນ້ຳຂອງ(ແລະຂອບເຂດຊາຍແດນພາກພື້ນເອເຊຍ)ທີ່ອາດຈະມີຜົນກະທົບຮ້າຍແຮງເກີດຂຶ້ນໂດຍສະເພາະໃນພົວພັນກັນລະຫວ່າງການພັດທະນາຊັບພະຍາກອນທຳມະຊາດ, ການຂົນສົ່ງສິ່ງຄ້າອັນຕະລາຍ, ການສູນເສຍຊີວະວິທະຍາ ແລະຜົນກະທົບຂ້າມຊາຍແດນ.
ໂຄງການສິ່ງແວດລ້ອມທີ່ສຳຄັນໃນພາກພື້ນລຸ່ມແມ່ນ້ຳຂອງ ແລະການລິເລີ້ມອະນຸລັກການເຂົ້າເຖິງຊີວະນາໆພັນ(CEP-BCI) ໂດຍສະເພາະຄວາມກັງວົນຕໍ່ບັນຫາຂອງຜົນກະທົບຂ້າມຊາຍແດນຂອງການພັດທະນາໂຄງລ່າງໃນພາກພື້ນ.[110] ການພັດທະນາສະຖາບັນຂ້າມຊາຍແດນອື່ນໆທີ່ລວມມີ ເສັ້ນທາງລົດໄຟປະເພນີຕາມລຳແມ່ນ້ຳຂອງ,

---

[109] ບົດສະເໜີຂອງ ດຣ. ປີເຕີ ຄິງ, ກໍລະກົດ 2009.

[110] The CEP-BCI ບໍລິຫານໂດຍ ADB ແລະ ກະຊວງສິ່ງແວດລ້ອມສາກົນ ຂອງ ທັງ ຫົກ ປະເທດ ທີ່ມີຝອມ ຂອງທີມປະຕິບັດງານຂອງພາກພື້ນລຸ່ມແມ່ນ້ຳຂອງ - http://www.adb.org/countries/gms/sector-activities/environment.

ສູນກາງພົວພັນທາງດ້ານພະລັງງານພາກພື້ນ ແລະ ຫ້ອງການປະສານງານການທ່ອງທ່ຽວຕາມລອງແມ່ນ້ຳຂອງ ແລະ ການຜັດທະນາອື່ນໆ others.[111]

ຂໍ້ຕົກລົງວ່າດ້ວຍສິ່ງອຳນວຍຄວາມສະດວກໃນການຂົນສົ່ງຂ້າມຊາຍແດນໃນພາກພື້ນລຸ່ມແມ່ນ້ຳຂອງ(1999) ມີພາກສ່ວນສະເພາະໃນການຂົນສົ່ງສິນຄ້າອັນຕະລາຍ.[112] ເຊິ່ງໄດ້ກຳນົດວ່າ " ບັນດາອົງປະກອບ ແລະ ປົດຄວາມທີ່ອາດມີຜົນສະທ້ອນຕໍ່ຄວາມສົນໃຈທາງສິ່ງແວດລ້ອມ, ສຸກຂະພາບ, ແລະ ຄວາມປອດໄພແຫ່ງຊາດ." ຖ້າຄູ່ສັນຍາອະນຸຍາດ ກໍລະນີພື້ນຖານການເຄື່ອນຍ້າຍສິ່ງຄ້າອັນຕະລາຍ ດັ່ງທີ່ກຳນົດໄວ້ຂ້າງເທິງ,
ໃນນັ້ນຈະຕ້ອງນຳເອົາມາດຕະການປ້ອງກັນພາຍໄຕ້ການແນະນຳຂອງສະຫະປະຊາຊາດບົນພື້ນຖານຂອງລະບຽບ ກົດໝາຍການຂົນສົ່ງສິ່ງຄ້າອັນຕະລາຍ(ຮູບແບບລະບຽບການຂອງ UN) ແລະ/ຫຼື ຂໍ້ຕົກລົງຂອງເອີລົບ ວ່າດ້ວຍ ການຂົນສົ່ງສາກົນສິ່ງຄ້າອັນຕະລາຍທາງລົດ.

ຄວາມຕ້ອງໃນລະບົບການ ປຜສ ຂ້າມຊາຍແດນທີ່ມີປະສິດຕິຜົນ

ບາງຄວາມຕ້ອງການໃນການປະເມີນຜົນກະທົບສິ່ງແວດລ້ອມທີ່ມີປະສິດຕິພາບລວມມີ:

- ການຈັດຕັ້ງຂະບວນການ ປຜສ ແຫ່ງຊາດທີ່ມີປະສິດຕິພາບ;
- ການກຳນົດຈຸດປະສານງານໃນລະດັບປະເທດທີ່ຈະຕ້ອງຮັບຜິດຊອບໃນການປະສານງານລະຫວ່າງປະເທດເຈົ້າບ້ານ, ປະເທດທີ່ຖືກກະທົບ ແລະ ປະເທດອື່ນໆ
- ການສ້າງໂອກາດໃຫ້ມີຄວາມເທົ່າທຽມຕໍ່ການມີສ່ວນຮ່ວມທາງສາທາລະນະໃນ ການປະເມີນ ປຜສ ທັງສາທາລະນະຂອງປະເທດເຈົ້າບ້ານ ແລະ ປະເທດທີ່ຖືກກະທົບ
- ການແຈ້ງຈຸດປະສານງານຂອງປະເທດທີ່ຖືກກະທົບໃຫ້ໄດ້ໄວທີ່ສຸດພ້ອມກັບຂໍ້ມູນຂ່າວສານ
- ການຮ່ວມຮັບຜິດຊອບທີ່ກຳນົດເຂົ້າໃນການມີສ່ວນຮ່ວມທາງສາທາລະນະທີ່ຢູ່ໃນເຂດທີ່ຄາດຄະເນວ່າ ຈະຖືກກະທົບຈາກໂຄງການທີ່ສະເໜີ;
- ການຮ່ວມຮັບຜິດຊອບໃນການເຜີຍແຜ່ເອກະສານ ປຜສ ແລະການນຳສິ່ງຄຳຄິດເຫັນໃຫ້ຈຸດປະສານງານຂອງປະເທດເຈົ້າບ້ານ;
- ຄວາມຕ້ອງການຂອງປະເທດເຈົ້າບ້ານຈະຕ້ອງສະເໜີຕໍ່ຈາກປະເທດທີ່ຖືກກະທົບເພື່ອເຂົ້າເຖິງການຕັດສິນກ່ຽວກັບກິດຈະກຳຫຼືໂຄງການນັ້ນໆ;
- ການກຳນົດຄືນການຕັດສິນໃຈຂອງປະເທດເຈົ້າບ້ານ ແລະ ແຜນການຄຸ້ມຄອງສິ່ງແວດລ້ອມ ຫຼືການຮັບຮອງເອົາເງື່ອນໄຂຕ່າງໆ; ແລະ
- ກົນໄກໃນການຊຸກເຊີຍຕໍ່ຂະບວນການ ປຜສ ຂ້າມຊາຍແດນ.

ປົດແນະນຳ ECE ກຳນົດຈຳນວນຂອງການປະຕິບັດຕົ້ນຕໍ່ທີ່ດີທີ່ສຸດ ທີ່ມີຄວາມກ່ຽວຂ້ອງກັບ ບັນດາປະເທດພາກພື້ນແມ່ນ້ຳຂອງ:

- ອາດຈະຕ້ອງການສະໜັບສະໜູນທາງດ້ານການເງິນເພື່ອ: ແປເອກະສານ ປຜສ ເປັນພາສາຕ່າງໆຂອງປະເທດທີ່ໄດ້ຮັບຜົນກະທົບ; ແປຄວາມຄິດເຫັນ ແລະ ຄຳແນະນຳ

[111] ຄຳແນະນຳຂອງ ດຣ ປີເຕີ້ ຄິງ.

[112] ຂໍ້ມູນລະອຽດຂອງຂໍ້ຕົກລົງສິ່ງອຳນວຍຄວາມສະດວກຂ້າມຜ່ານຊາຍແດນ ລຸ່ມແມ່ນ້ຳຂອງ ບັນຈຸຢູ່ໃນເວບໄຊສ: http://www.gms-cbta.org/uploads/resources/15/attachment and at ADB_TF_CBTA_Full_Text_gms-cbta-instruments-history.pdf.

ຂອງສາທາລະນະ ກັບຄືນເປັນພາສາຂອງປະເທດ ຂອງໂຄງການທີ່ນຳສະເໜີ; ການເຜີຍແຜ່ເອກະສານ ປຜສ (ລວມມີ ປື້ມນ້ອຍ, ແຜ່ນພັບ) ພາຍໃນປະເທດໄກ້ຄຽງ; ຈ່າຍຄ່າອອກຂ່າວທາງຜ່ານສື່ຕ່າງໆ: ໜັງສືພິມ, ວິທະຍຸ, ໂທລະພາບ, ອີເມວລ, ຫຼື ອິນເຕີເນັດ; ແລະ
ການຈັດກອງປະຊຸມປຶກສາຫາລືກັບສາທ າລະນະ;

- ປະເທດໄກ້ຄຽງທີ່ໄດ້ຮັບແຈ້ງກ່ຽວກັບໂຄງການຕ່າງໆທີ່ສະເໜີ ທີ່ມີຜົນກະທົບຂ້າມຊາຍແດນ ທີ່ອາດຈະເກີດຂຶ້ນລ່ວງໜ້າ ໃຫ້ໄດ້ໄວທີ່ສຸດເທົ່າທີ່ຈະເປັນໄປໄດ້, ແລະ ໄດ້ຮັບການແຈ້ງການບໍ່ໃຫ້ຊ້າກວ່າສາທາລະນະທົ່ວໄປຂອງປະເທດຂອງໂຄງການທີ່ສະເໜີ.;
- ທຸກປະເທດທີ່ອາດຈະໄດ້ຮັບກະທົບຈາກໂຄງການທີ່ສະເໜີ ທັງປະເທດເຈົ້າພາບ ແລະ ປະເທດໄກ້ຄຽງ – ຈະຕ້ອງຮັບຜິດຊອບຊ່ວຍກັນໃນການເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບ ປຜສ ແລະ ການເກັບກຳຄຳຄິດເຫັນ ຈາກປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ ແລະ ຜູ້ມີສ່ວນຮ່ວມອື່ນໆ ເພື່ອການພິຈາລະນາໃນຂະບວນການຕັດສິນໃຈ; ແລະ
- ຄຳເຫັນທັງໝົດກ່ຽວກັບການ ປຜສ ຂ້າມຊາຍແດນທີ່ໄດ້ຮັບຈາກຜູ້ມີສ່ວນຮ່ວມອື່ນໆຢູ່ປະເທດທີອາດຈະໄດ້ຮັບຜົນກະທົບຕ້ອງໄດ້ຮັບການພິຈາລະນາເຂົ້າໃນການຕັດສິນໃຈຮັບຮອງ ປຜສ, ແລະຕ້ອງໄດ້ເຜີຍແຜ່ກ່ຽວກັບ ການຕົກລົງຮັບຮອງຂັ້ນສຸດທ້າຍໃນບັນດາປະເທດໄກ້ຄຽງ ຮັບຊາບ.

ການມີສ່ວນຮ່ວມຂອງສາທາລະນະໃນຂະບວນການ ປຜສ ຂ້າມຊາຍແດນ ແນ່ໃສ່ສົ່ງເສີມ ຂະບວນການ ການຕັດສິນໃຈ ກ່ຽວກັບໂຄງການທີ່ມີຜົນກະທົບຂ້າມຊາຍແດນຢ່າງໂປ່ງໃສ ແລະ ທີ່ຖືກຕ້ອງຕາມກົດໝາຍ. ໂຄງການທີ່ສະເໜີເຊິ່ງຄາດຄະເນວ່າມີຜົນກະທົບຂ້າມຊາຍແດນໄດ້ດຳເນີນການ ປຜສ ໂດຍບໍ່ໄດ້ດຳເນີນການມີສ່ວນຮ່ວມຂອງສາທາລະນະຂ້າມຊາຍແດນຢ່າງພຽງພໍ ອາດຈະຕ້ອງໄດ້ແກ້ໄຂບັນຫາລະຫວ່າງ ລັດ ກັບ ລັດ, ແຕ່ອາດຈະຂາດບັນຫາສຳຄັນຂອງທ້ອງຖິ່ນ ແລະຄວາມສຳຄັນຂອງທ້ອງຖິ່ນ ຫຼືຄວາມຮູ້ຂອງຊົນເຜົ່າພື້ນເມືອງທັງໝົດ. ກົນໄກການສະແດງຄຳຄິດເຫັນທີ່ມີປະສິດທິຜົນ ສາມາດຮັບປະກັນຄວາມພະຍາຍາມທີ່ດີທີ່ສຸດ ເພື່ອແກ້ໄຂຂໍ້ຂັດຂ້ອງໃຈຂອງທ້ອງຖິ່ນ ໃນບັນດາປະເທດໄກ້ຄຽງ ໄດ້ຖືກກຳນົດເຂົ້າໃນແຜນການຕິດຕາມກວດກາແລະ ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ເພື່ອຫຼີກລ້ຽງຂໍ້ຂັດແຍ່ງໃນໄລຍະການກໍ່ສ້າງ ແລະ ດຳເນີນການຂອງໂຄງການ.

ບົດແນະນຳ ECE ໄດ້ສະແດງໃຫ້ເຫັນວ່າ,ເຖິງຈະມີຄວາມຈຳເປັນໃນການພິຈາລະນາ ບັນຫາຂອງຂັ້ນຕອນສະເພາະໃນການສ້າງຕັ້ງ ຂະບວນການ ປຜສ ຂ້າມຊາຍແດນ, ແນວຄວາມຄິດສ່ວນໃຫຍ່ ແລະ ການແນະນຳທາງດ້ານວິທີການທີລະບຸໄວ້ຢູ່ໃນບົດແນະນຳເຫຼົ່ານີ້ ຈະໄດ້ນຳໃຊ້ຕໍ່ໂຄງການທີ່ສະເໜີ ທີ່ມີຜົນກະທົບຂ້າມຊາຍແດນ. ຫຼືເວົ້າອີກຢ່າງໜຶ່ງ, ຕ້ອງໄດ້ນຳໃຊ້ວິທີການ ແລະ ຫຼັກການແບບດຽວກັນທັງຢູ່ໃນປະເທດເຈົ້າພາບ ແລະ ປະເທດໄກ້ຄຽງ, ເຖິງແມ່ນວ່າການກຳນົດກົນໄກຕ່າງໆອາດຈະມີຄວາມແຕກຕ່າງກັນ.

ສະຫຼຸບແນວຄວາມຄິດຕໍ່

ການປະເມີນຜົນກະທົບສິ່ງແວດລ້ອມຂອງບັນດາປະເທດຕາມລ່ອງແມ່ນ້ຳຂອງ

ມີຫຼາກຫຼາຍບົດ ປຜສ ທີ່ຖືກຂຽນໄວ້ໃນຫຼາຍໆປະເທດຕາມລ່ອງແມ່ນ້ຳຂອງ. ຫຼາກຫຼາຍບົດວິເຄາະທີ່ສຸມໃສ່ການສົມທຽບລະຫວ່າງປະເທດທີ່ຢູ່ລຸ່ມແມ່ນ້ຳຂອງ ແລະ ສປ ຈີນ, ຍີ່ປຸ່ນ ຫຼື

ເກົ່າຫຼີ. ໃນການວິເຄາະຄັ້ງນີ້ເປັນຄັ້ງທຳອິດທີ່ລວມເອົາທັງ ຫົກ ປະເທດ ມາສຶມທຽບກັນ.
ຈາກການທົບທວນບັນດາລະບຽບການ ແລະ ກົດ ໝາຍທີ່ເປັນຮູບແບບພື້ນຖານໃນຄູ່ມື ແລະ
ບົດສະຫຼຸບຫຍໍ້ຂອງ ປຜສ ແມ່ນ້ຳຂອງທີ່ວ່າ: ການປະເມີນຜົນກະທົບຄ້າຍຄືກັນໃນຂະບວນການ ປຜສ
ທີ່ຖືກຮັບຮອງໂດຍປະເທດຕາມລ່ອງແມ່ນ້ຳຂອງ. ແຕ່ກໍ່ມີຫຼາຍຄວາມແຕກຕ່າງທີ່ເດັ່ນຊັດ.
ສິ່ງສຳຄັນໃນຄວາມແຕກຕ່າງນັ້ນແມ່ນສາມາດຫາແນວທາງທີ່ຈະກ່ຽວພັນກັບ ໜ່ວຍງານປະເມີນຜົນ ປຜສ
ແລະ ບົດລາຍງານ ປຜສ ແລະ ທີ່ຈະສາມາດສະຫຼຸບການແກ້ໄຂບັນຫາຂອງໂຄງການໄດ້.
ການປະສານງານພາກພື້ນແມ່ນກຳລັງເພີ້ມພູນ ແລະ
ເຜີຍແຜ່ຮູບແບບຢ່າງທີ່ເໝາະສົມຕໍ່ພາກພື້ນທີ່ຈະສົ່ງເສີມໃຫ້ການປະຕິບັດ ປຜສ ໃຫ້ດີຂຶ້ນກວ່າເກົ່າ.

ໃນການຕິດຕາມ, ກວດກາຄວາມສອດຄ່ອງ ແລະ ການບັງຄັບໃຊ້ຂັ້ນຕອນ ການປະເມີນ ປຜສ
ໂດຍລວມແລ້ວແມ່ນຍັງມີຂໍ້ບົກຜ່ອງ. ໃນຂະນະທີ່ສຸມໃສ່ການກະກຽມ ແລະ ທົບທວນບົດ ປຜສ
ເພື່ອເປັນການກຳນົດໂຄງການວ່າ(ຈະຮັບຮອງ ຫຼື ປະຕິເສດໂຄງການ),
ເຊິ່ງເຫັນໄດ້ວ່າຍັງຂາດການເອົາໃຈໃສ່ຕໍ່ການບັງຄັບໃຊ້ ແລະຄວາມສອດຄ່ອງກັບ
ແຜນການຄຸ້ມຄອງສິ່ງແວດລ້ອມ ຜຄສ.
ຍັງຂາດການເອົາໃຈໃສ່ທີ່ຈະສາມາດຮັບຮອງເອົາເງື່ອນໄຂໃນການນຳໃຊ້ເຂົ້າໃນສັນຍາໂຄງການທີ່ສຳເລັດໂດຍ
ຜູ້ສະເໜີໂຄງການ.

ໂດຍທົ່ວໄປແມ່ນມີ ສີ່ ຄຸນລັກສະນະໃນລະບົບການປະເມີນ ປຜສ ລະດັບຊາດ. ຂັ້ນຕອນທຳອິດ
ແມ່ນທຸກປະເທດຕ້ອງມີລາຍການກັ່ນຕອງໂຄງການ. ຂັ້ນຕອນທີ 2
ທຸກປະເທດຈະຕ້ອງກຳນົດວິທີການໃນການປະເມີນ ປຜສ. ຂັ້ນຕອນທີ່ ສາມ
ທຸກປະເທດຈະຕ້ອງກຳນົດການປະເມີນວິເຄາະຂໍ້ມູນ. ຂັ້ນຕອນທີ່ ສີ່
ທຸກປະເທດຈະຕ້ອງໃຫ້ໂອກາດໃນການມີສ່ວນຮ່ວມຂອງສາທາລະນະທີ່ເປັນຂັ້ນຕອນທີ່ສຳຄັນທີ່ສຸດ.

ລາຍການກັ່ນຕອງ:
ທຸກປະເທດຈະຕ້ອງຮັບຮອງເອົາລາຍການກັ່ນຕອງໂຄງການ. ການປະເມີນ ປຜສ
ຖືກກຳນົດມາເພື່ອຮັບຮອງເອົາທຸກໂຄງການທີ່ຄາດຄະເນວ່າ “ຈະມີຜົນກະທົບທາງລົບຕໍ່ສິ່ງແວດລ້ອມ“[113]
ທີ່ຕ້ອງການການດຳເນີນການປະເມີນ ປຜສ.
ໃນລາຍການກັ່ນຕອງນີ້ອາດຈະມີຄວາມແຕກຕ່າງລະຫວ່າງປະເທດ, ເຊິ່ງໂດຍທົ່ວໄປ
ການກຳນົດບໍ່ວ່າຈະຕ້ອງດຳເນີນການປະເມີນ IEE ຫຼື EIA ຫຼື ອາດບໍ່ຈຳເປັນຕ້ອງມີການປະເມີນໃດໆ. ໃນ
ປະເທດ ໄທ ຂະບວນການກັ່ນຕອງ ຈະຕ້ອງຄຳນຶງເຖິງການປະເມີນຜົນກະທົບຕໍ່ສຸກຂະພາບເຊັ່ນດຽວກັນ.

ການກຳນົດຂອບເຂດວິທີການປະເມີນບົດ EIA:
ໃນບົດລາຍການກັ່ນຕອງແມ່ນໄດ້ກຳນົດລະດັບການປະເມີນຜົນຈາກລະດັບທີ່ບໍ່ຈຳເປັນຕ້ອງການປະເມີນຜົນ
ຈົນເຖິງຄວາມຕ້ອງການປະເມີນ IEE ຫຼື EIA. ອີກຢ່າງໜຶ່ງ,
ບາງປະເທດກໍ່ກຳນົດບາງຮູບແບບການປະເມີນຜົນກະທົບສິ່ງແວດລ້ອມແທນທາງເລືອກທີ່ບໍ່ຕ້ອງການການປະເ
ມີນການ(ເຊັ່ນ: ປະເທດ ກຳບູເຈ້ຍ ແລະ ຫວຽດນາມ). ບາງປະເທດກໍ່ເຫັນວ່າ ຖ້າການປະເມີນ IEE

[113] ໃນໄລຍະນີ້ແມ່ນເພື່ອການສຶນທະນາ ໂຕ້ແຍ້ງ ເພື່ອຈຸດປະສົງຂອງ ບົດ ປຜສ
ຈະສາມາດຮັບຮອງໄດ້ວ່າຜົນກະທົບໄດ້ຖືກຈຳແນກ, ປະເມີນ ແລະ ຫຼຸດຜ່ອນ.

ຫາກສະແດງໃຫ້ເຫັນວ່າມີຜົນກະທົບຕໍ່ການດຳລົງຊີວິດແລະສິ່ງແວດລ້ອມຈາກກິດຈະກຳໂຄງການ, ສະນັ້ນ ໜ່ວຍງານປະເມີນ ປຜສ ອາດຈະຕ້ອງພິຈາລະນາດຳເນີນການປະເມີນບົດ EIA.

ການເຂົ້າເຖິງຂໍ້ມູນ:
ທຸກປະເທດຈະຕ້ອງອະນຸຍາດໃຫ້ຜູ້ຖືກກະທົບສາມາດເຂົ້າເຖິງຂໍ້ມູນ. ໃນປະເທດໄທ
ເປັນຕົວຢ່າງທີ່ສາມາດເຂົ້າເຖິງຂໍ້ມູນໄດ້ຢ່າງກວ້າງຂວາງ. ເຖິງຢ່າງໃດກໍ່ຕາມ,
ໃນບາງປະເທດກໍ່ຍັງບໍ່ຈະແຈ້ງວ່າຂໍ້ມູນໃດທີ່ຈະຕ້ອງເຜີຍແຜ່ ແລະ ຄວນຈະເຜີຍແຜ່ໃນຂັ້ນຕອນໃດ.

ປະເທດມຽນມ້າ ຂ້ອງຂ້າງຈະແຈ້ງທີ່ຕ້ອງເຜີຍແຜ່ຂໍ້ມູນ ແລະ ເອກະສານໃນແຕ່ລະຊ້ວງຂອງໜ້າວຽກ.
ເຖິງຢ່າງໃດກໍ່ຕາມ ບາງຂັ້ນຕອນຂອງ EIA
ກໍ່ຍັງບໍ່ຊັດເຈນທາງດ້ານລະບຽບກົດໝາຍກ່ຽວກັບການເຂົ້າເຖິງຂໍ້ມູນແລະ
ຢ່າງນ້ອຍຕ້ອງມີຂໍ້ມູນຂ່າວສານໃນລະດັບທີ່ຈະຕ້ອງເຜີຍແຜ່.

ການມີສ່ວນຮ່ວມຂອງສາທາລະນະ:
ທຸກປະເທດຈະຕ້ອງໃຫ້ໂອກາດໃນການມີສ່ວນຮ່ວມໃນທຸກຂັ້ນຕອນຂອງການປະເມີນ EIA
ເຖິງວ່າອາດຈະບໍ່ສາມາດດຳເນີນໄດ້ເຕັມສ່ວນກໍ່ຕາມ.
ໜຶ່ງໃນການທ້າທາຍທີ່ສຳຄັນແມ່ນການເຂົ້າໃຈຢ່າງລະອຽດວ່າ ຈະສົ່ງເສີມ ແລະ
ພັດທະນາການມີສ່ວນຮ່ວມກັບສາທາລະນະໄດ້ ແລະ
ການເຂົ້າເຖິງການດຳເນີນງານຂອງຜູ້ມີສ່ວນຮ່ວມໃນພາກພື້ນເຂົ້າໃນການພັດທະນາໂຄງການ ແລະ
ການຈັດຕັ້ງປະຕິບັດ.

ເອກະສານຊ້ອນທ້າຍ 1:ລາຍລະອຽດເນື້ອໃນຂອງໂຄງການໜຶ່ງ[114]

ການນຳສະເໜີໂດຍຫຍໍ້	ຄຳແນະນຳ
1. ຂະແໜ່ງແລະຂະແໜ່ງຍ່ອຍ	ຕົວຢ່າງ.,ການຜະລິດພະລັງງານ,ພະລັງງານໄຟຟ້ານ້ຳຕົກ
2. ຂະໜາດ	ຂະໜາດສາມາດສະແດງໃຫ້ເຫັນໃນຮູບແບບຂອງເນື້ອທີ່(ຫຼືແມ່ນໂຄງການທາງ ຫຼືໂຄງການທີ່ເປັນແລວທາງຍາວ), ການຜະລິດ, ໝວດ, ປະເພດ, ຈຳນວນພະນັກງານ, ມູນຄ່າການລົງທຶນຂອງໂຄງການ.
3. ທີ່ຕັ້ງ	ແຜນທີ່ພາກລວມໂດຍທົ່ວໄປຈະມີມາດສ່ວນ 1:200,000 ຫຼື 1:20,000 ຂຶ້ນກັບປະເພດປະເພດໂຄງການ. ແຜນທີຄວນປະກອບດ້ວຍ ຄຸນລັກສະນະຕົ້ນຕໍ່ຂອງທຳມະຊາດ ຄື ສາຍນ້ຳຕ່າງໆ, ປ່າໄມ້, ແລະ ອື່ນໆ ໂຄງລ່າງພື້ນຖານຕ່າງໆທີ່ມີຢູ່ໃນປະຈຸບັນ(ເສັ້ນທາງ, ຂົວ ແລະ ອື່ນໆ) ແລະສະຖານທີ່ຢູ່ອາໄສຂອງປະຊາຊົນໃນເຂດໃກ້ຄຽງກັບໂຄງການ. ໃນກໍລະນີການພັດທະນາຕົວເມືອງ, ເຂດພື້ນທີ່ທີມີຄວາມອ່ອນໄຫວ(ໂຮງຮຽນ, ວັດ, ຕະຫຼາດ, ສະຖານທີ່ຫຼືອານຸສາວະລີ ທາງດ້ານວັດທະນະທຳທີ່ມີຄວາມສຳຄັນ, ເຂດການຄ້າ ແລະ ອື່ນໆ) ຈະໄດ້ມີການກຳນົດຢ່າງຈະແຈ້ງ.
4. ຜູ້ສະເໜີໂຄງການ	• ສິ່ງອຳນວຍຄວາມສະດວກຕົ້ນຕໍ່ການຜະລິດ • ໂຄງລ່າງພື້ນຖານພາຍໃນ • ໂຄງລ່າງພື້ນຖານແລະສິ່ງອຳນວຍຄວາມສະດວກເພີ້ມເຕີມ
5. ການກຳນົດເວລານຳໃຊ້ໂດຍລວມ	ນຳສະເໜີແຜນວາດແລະແຜນກຳນົດເວລາຂອງ: • ການສຶກສາ (ປະກອບດ້ວຍ.ການສຶກສາ ປຜສ) • ການອະນຸມັດ/ການຮັບຮອງ • ສັນຍາສຳປະທານ • ແບບລະອຽດ,ການເຊັນສັນຍາ • ກິດຈະກຳກ່ອນການກໍ່ສ້າງ • ກິດຈະກຳການກໍ່ສ້າງ • ການດຳເນີນການ • ການຮື້ຖອນ/ການປິດ/ພາຍຫຼັງການປິດໂຄງການ
6. ໂຄງຮ່າງການຈັດຕັ້ງຂອງໂຄງການ	ໂຄງຮ່າງການຈັດຕັ້ງ, ການຄຸ້ມຄອງ, ພາລະບົດບາດແລະໜ້າທີ່ຮັບຜິດຊອບ, ອື່ນໆ.
ກ່ອນການກໍ່ສ້າງ ແລະ ໃນໄລຍະການກໍ່ສ້າງ	
7. ແຜນເວລາຂອງກິດຈະກຳ	ແຜນວາດພ້ອມດ້ວຍອົງປະກອບຕ່າງໆ ແລະ ກິດຈະກຳກໍ່ສ້າງຕົ້ນຕໍ່ທີ່ກ່ຽວຂ້ອງແລະ ມາດຕະການຕ່າງໆໃນການຫຼຸດຜ່ອນທີ່ກ່ຽວຂ້ອງ.
8. ທີ່ຕັ້ງແລະອົງປະກອບຕ່າງໆຂອງໂຄງການ	ແຜນທີ່ພາກສະໜາມ (1:50,000 ຫຼື 1:10,000) ພ້ອມດ້ວຍທີ່ຕັ້ງແລະອົງປະກອບຂອງໂຄງການ ເຊັ່ນ: ເສັ້ນທາງ,

[114] Laos EIA Guidelines, MONRE, 2012.

	ທີ່ພັກຄົນງານ, ບໍ່ແຮ່, ໂຮງຜະລິດ, ພື້ນທີ່ເກັບມ້ຽນວັດສະດຸ, ສະຖານທີ່ຖິ້ມເສດແຮ່ທາດ, ອ່າງຮັບນ້ຳ, ເຮືອນຈັກ, ສາຍສົ່ງ, ຂົວ ແລະ ອື່ນໆ.
9. ລັກສະນະຂອງໂຄງການ	ລາຍລະອຽດຂອງແຕ່ລະລັກສະນະຕົ້ນຕໍ່ຂອງໂຄງການ: • ວັດສະດຸ (ປະລິມານ,ປະເພດ,ແຫຼ່ງທີ່ມາ) • ອຸປະກອນ,ເຄື່ອງຈັກ • ແບບແຕ້ມແນວຄວາມຄິດເບື້ອງຕົ້ນ ລາຍການທາງເລືອກຕ່າງໆ ທີ່ໄດ້ຮັບການພິຈາລະນາ ແລະ ປະເມີນຜົນ. ກຳນົດສະເພາະການພິຈາລະນາທາງເລືອກທີ່ເປັນໄປໄດ້ຕາມຄວາມເປັນຈິງແລະສົມເຫດສົມຜົນ.
10. ແຮງງານ	• ການຄາດຄະເນຈຳນວນແຮງງານ, ຖ້າເປັນໄປໄດ້ໃຫ້ອະທິບາຍໂດຍຫຍໍ້ ກ່ຽວກັບກຳມະກອນຕໍ່ກັບແຕ່ລະປະເພດໜ້າວຽກ • ການຄາດຄະເນ ແຫຼ່ງທີ່ມາຂອງກຳມະກອນ • ປະເພດ ແລະ ທີ່ຕັ້ງຂອງທີ່ພັກເຊົາ ກຳມະກອນ • ພັນທະໃນການຮັກສາສຸຂະພາບ ແລະ ຄວາມປອດໄພ
ໄລຍະດຳເນີນໂຄງການ	
11. ພາບລວມຂອງການດຳເນີນໂຄງການ	ອະທິບາຍຫຍໍ້ລາຍລະອຽດອົງປະກອບໂຄງການປະກອບດ້ວຍຂະບວນການຜະລິດ ແລະ ເຕັກນິກວິຊາການ, ສິ່ງອຳນວຍຄວາມສະດວກຕ່າງໆ ແລະໂຄງລ່າງພື້ນຖານ. ນຳສະເໜີພາບລວມຂອງໂຄງການທີ່ສຳເລັດແລ້ວ(ເຊັ່ນ: ແຜນອາດ, ແຜນຜັງ): ການນຳສະເໜີຂໍ້ມູນການຜະລິດ: • ການປ້ອນວັດສະດຸ(ປະລິມານ/ຕໍ່ປີ,ປະເພດ,ຄຸນນະພາບ ແລະ ຄຸນລັກສະນະ, ແຫຼ່ງທີ່ມາ) • ການບໍລິໂພກນ້ຳ ແລະ ພະລັງງານ ແລະ ແຫຼ່ງທີ່ມາຕ່າງໆ • ຜົນໄດ້ຮັບ: ຜະລິດຕະພັນ (ປະລິມານ, ຄຸນລັກສະນະ) ໂດຍ-ຜະລິດຕະພັນ,ສິ່ງເສດເຫຼືອ ແລະ ອາຍພິດຕ່າງໆ.)
12. ການກຳນົດແຜນເວລາການດຳເນີນງານ	ການນຳສະເໜີແຜນອາດໄລຍະເວລາການດຳເນີນງານຂອງອົງປະກອບຕົ້ນຕໍ ແລະ ການດຳເນີນງານ /ຂະບວນການຕົ້ນຕໍ ແລະ ມາດຕະການການຫຼຸດຜ່ອນສະເພາະດ້ານ .
13. ແຜນທີ່ຂອງແຜນຜັງພາກສະໜາມ	ແຜນທີ່ຂອງແຜນຜັງພາກສະໜາມໃນອັດຕາສ່ວນ (1:20,000 ຫຼືໃຫຍ່ກວ່າ) ສະແດງໃຫ້ເຫັນທີ່ຕັ້ງຂອງອົງປະກອບຕົ້ນຕໍຂອງການດຳເນີນງານ.

14. ອົງປະກອບຕ່າງໆ	ລາຍລະອຽດຂອງແຕ່ລະອົງປະກອບ: • ສົ້ງອຳນວຍຄວາມສະດວກ, ເຕັກໂນໂລຊີ, ຂະບວນການພ້ອມດ້ວຍແຜນວາດ ການດຳເນີນງານໂດຍຫຍໍ້ • ການນຳສະເໜີພາບລວມ ແລະ ທີ່ຕັ້ງ • ການອອກແບບແນວຄວາມຄິດເບື້ອງຕົ້ນ • ແຜນວາດການດຳເນີນງານ: ວັດສະດຸຕ່າງໆ, ນ້ຳ, ພະລັງງານ, ສິ່ງເສດເຫຼືອ ແລະ ທາດອາຍພິດອື່ນໆ • ການຈັດການແລະການເກັນມ້ຽນວັດສະດຸ • ການຈັດການສິ່ງເສດເຫຼືອແລະນ້ຳເປື້ອນ • ການຂົນສົ່ງ (ວັດສະດຸ,ເວລາດ ນ້ຳໜັກ ແລະ ເສັ້ນທາງ)
15. ແຮງງານ	• ການຄາດຄະເນຈຳນວນແຮງງານ(ຖ້າເປັນໄປໄດ້ໃຫ້ອະທິບາຍໂດຍຫຍໍ້ ກ່ຽວກັບກຳມະກອນຕໍ່ກັບແຕ່ລະປະເພດໜ້າວຽກ), • ການຄາດຄະເນ ແຫຼ່ງທີ່ມາຂອງກຳມະກອນ • ປະເພດແລະທີ່ຕັ້ງຂອງທີ່ພັກເຊົາ ກຳມະກອນ ພັນທະໃນການຮັກສາສຸຂະພາບແລະຄວາມປອດໄພ
ການຮື້ຖອນ/ການປິດໂຄງການ/ພາຍຫຼັງການປິດໂຄງການ	
16. ພາບລວມ	ຂໍ້ກຳນົດໃນແຜນການປິດໂຄງການ (ຍຸດທະສາດ,ນະໂຍບາຍ,ຈຸດປະສົງຕົ້ນຕໍ, ກຳນົດເວລາ, ງົບປະມານ ແລະ ອື່ນໆ)

ເອກະສານຊ້ອຍທ້າຍທີ 2: ລະບຽບກົດໝາຍທີ່ກ່ຽວຂ້ອງ

- ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ (ປັບປຸງ) ເລກທີ.29/ສຊ 2012.
- ກົດໝາຍການສື່ສານ 2008
- ດຳລັດການປະເມີນຜົນກະທົບສິ່ງແວດລ້ອມ (2010)
- ຄຳແນະນຳຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ເລກທີ8029/ກຊສ, 17 ທັນວາ 2013
- ຄຳແນະນຳຂະບວນການສຶກສາຜົນກະທົບຕໍ່ສິ່ງແວດລ້ອມເບື້ອງຕົ້ນຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ ເລກທີ8029/ກຊສ, 17 ທັນວາ 2013
- ຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ເລກທີ8030/ກຊສ, 17 ທັນວາ 2013

ເອກະສານຊ້ອຍທ້າຍທີ 3: ແຫຼ່ງຂໍ້ມູນອື່ນໆ

ລາຍການກັ່ນຕອງປະເພດ ປສສ/ສສຕ ໃນຂົງເຂດປະເທດທີ່ຖືກເລືອກ ຕາມລຳແມ່ນ້ຳຂອງ:

- ຂໍ້ມູນສາມາດເຂົ້າເຖິງຜ່ານຖານຂໍ້ມູນອອນລາຍທາງອິນເຕີເນັດດັ່ງໜ້າຕ່າງລຸ່ມນີ້:
- https://www.earthrights.org/publications

ຮ່າງບົດແນະນຳວ່າດ້ວຍການມີສ່ວນຮ່ວມຂອງສາທາລະນະ
ຕໍ່ການປະເມີນຜົນກະທົບສິ່ງແວດລ້ອມ:

- ຂໍ້ມູນສາມາດເຂົ້າເຖິງຜ່ານຖານຂໍ້ມູນອອນລາຍທາງອິນເຕີເນັດດັ່ງໜ້າຕ່າງລຸ່ມນີ້:
- http://eia.mekongcitizen.org



AMAZON OFFICE
INFOPERU@EARTHRIGHTS.ORG
Casilla Postal 195
Miraflores 18, Lima, Peru

MEKONG OFFICE
INFOASIA@EARTHRIGHTS.ORG
P.O. Box 123
Chiang Mai University
Chiang Mai, 50202, Thailand

MYANMAR OFFICE
INFOASIA@EARTHRIGHTS.ORG
Yangon, Myanmar

U.S. OFFICE
INFOUSA@EARTHRIGHTS.ORG
1612 K St NW, Suite 401
Washington, DC 20006

EARTHRIGHTSINTL
WWW.EARTHRIGHTS.ORG